ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການ UNICEF ປະຈຳລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ (ບ້ວງນ້ຳເທີນ 2)
ທະບຽນພິມເລກທີ: ...............
ຂະໜາດ 21x29,7 ຊມ ຈຳນວນ.............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2016

ແຜນຈັດປະສົບການ ໜ່ວຍຕົວຂອງຂ້ອຍ ຊັ້ນອະນຸບານສຶກສາປີທີ 3 2016

# ແຜນຈັດປະສົບການ

# ໜ່ວຍຕົວຂອງຂ້ອຍ

## ຊັ້ນອະນຸບານສຶກສາປີທີ 3



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

# ແຜນຈັດປະສົບການ

# ໜ່ວຍຕົວຂອງຂ້ອຍ

## ຊັ້ນອະນຸບານສຶກສາ ປີທີ 3


ຮຽບຮຽງໂດຍ: ແສງມະນີ ສຸພັນທະລົບ
ຈຸນລາ ເຂັມທອງ
ອັນກາບ ພົງອຸດົມ
ສະຫວຽນ ສີຍະວັນນຸວົງ
ອາງຄຳ ບຸດສະດີ

ກວດແກ້ໂດຍ: ດຣ ອ່ອນແກ້ວ ນວນນະວົງ
ປາກຽນ ຫຼວງໄຊຊະນະ
ວຽງແກ້ວ ພົມມະຈັກ

ເຂົ້າໜ້າໂດຍ: ສີວິໄລ ແກ້ວມະນີວັນ
ຈັນທະໄລ ເກີດຫຼ້າ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---====000====----

07498

ກະຊວງສຶກສາທິການ ແລະ ກິລາ

ເລກທີ 07498 ສສກ.ສວສ

ນະຄອນຫຼວງວຽງຈັນ, ວັນທີ 09 DEC 2015

**ຂໍ້ຕົກລົງຂອງລັດຖະມົນຕີ**

**ວ່າດ້ວຍການຮັບຮອງ ແລະ ປະກາດນຳໃຊ້ຫຼັກສູດ ແລະ ປຶ້ມປະກອບການຮຽນ-ການສອນ**

**ສຳລັບຊັ້ນອະນຸບານສຶກສາ ປີທີ 3**

ເຫັນຕາມ: ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 7 ກັນຍາ 2011;

ເຫັນຕາມ: ການສະເໜີຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

**ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ຈຶ່ງຕົກລົງ**

ມາດຕາ 1: ຮັບຮອງ ແລະ ປະກາດນຳໃຊ້ຫຼັກສູດ ແລະ ປຶ້ມປະກອບການຮຽນ-ການສອນ ສຳລັບຊັ້ນອະນຸບານສຶກສາ ປີທີ 3 ສະບັບປະຕິຮູບ ໃນໂຮງຮຽນອະນຸບານທົ່ວປະເທດ ນັບແຕ່ສົກຮຽນ 2016-2017 ເປັນຕົ້ນໄປ.

ມາດຕາ 2: ໃຫ້ກົມອະນຸບານ ແລະ ປະຖົມສຶກສາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ກົມຄຸ້ມຄອງການສຶກສາພາກເອກະຊົນ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວ ໃຫ້ໄດ້ຮັບຜົນດີ.

ມາດຕາ 3: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລ.ມ. ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ລິຕູ ບົວປາວ

# ຄຳນຳ

ແຜນການຈັດປະສົບການສະບັບນີ້ຮຽບຮຽງຂຶ້ນ ເພື່ອເປັນບ່ອນອີງນຳໃຊ້ເຂົ້າໃນການວາງແຜນການສອນ ແລະ ໃຫ້ຄູສອນນຳໃຊ້ໃນການແຕ່ງບົດສອນຄວບຄູ່ກັບປຶ້ມແນະນຳກິດຈະກຳການຮຽນ-ການສອນ ໂດຍໃຫ້ແທດເໝາະກັບພັດທະນາການຂອງເດັກອະນຸບານອາຍຸ 5 ປີ ຕາມຄວາມຕ້ອງການຮຽນຮູ້ຂອງເຂົາເຈົ້າ ແລະ ສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ.

ເນື້ອໃນຄວາມຮູ້ທີ່ກຳນົດໃນກິດຈະກຳການຫຼິ້ນ ແລະ ຮຽນຮູ້ແຕ່ລະວັນມີລັກສະນະບູລະນາການຄວາມຮູ້ທາງດ້ານພາສາລາວ, ຄະນິດສາດ ແລະ ວິທະຍາສາດທົ່ວໄປ.

ກິດຈະກຳການຫຼິ້ນ ແລະ ຮຽນຮູ້ໃນແຕ່ລະວັນປະກອບມີກິດຈະກຳເຄື່ອນໄຫວ ແລະ ຈັງຫວະ, ວົງມົນ, ສິລະປະສ້າງສັນ, ຫຼິ້ນກາງແຈ້ງ, ຫຼິ້ນຕາມມູມ ແລະ ເກມການສຶກສາ; ທັງນີ້ກໍເພື່ອໃຫ້ເດັກໄດ້ຮັບການພັດທະນາຕາມສະມັດຖະພາບດ້ານການຮຽນຂອງເດັກອະນຸບານປີທີ 3 (ອາຍຸ 5 ປີ) ໃນການກຽມຄວາມພ້ອມທາງດ້ານຮ່າງກາຍ, ດ້ານອາລົມ, ຈິດໃຈ, ດ້ານສັງຄົມ, ດ້ານພາສາ ແລະ ດ້ານສະຕິປັນຍາກ່ອນເຂົ້າຮຽນໃນຊັ້ນປະຖົມ.

ແຜນການຈັດປະສົບການສະບັບນີ້ເນັ້ນໜັກການສອນແບບເອົາເດັກເປັນໃຈກາງ ໂດຍໃຫ້ເດັກໄດ້ປະຕິບັດຕົວຈິງຜ່ານການຫຼິ້ນ ແລະ ຮຽນ ໂດຍຍຶດຫຼັກການສຳຄັນດັ່ງນີ້:

1. ເດັກໄດ້ຮັບການກຽມຄວາມພ້ອມໃນທຸກດ້ານຕາມຄວາມສາມາດ ແລະ ທຳມະຊາດຂອງເດັກ.
2. ເດັກໄດ້ຮຽນຮູ້ຕາມຄວາມສົນໃຈ, ຄວາມຕ້ອງການຢ່າງອິດສະຫຼະຈາກສິ່ງໃກ້ຕົວ, ຈາກທັກສະທີ່ງ່າຍໄປສູ່ທັກສະທີ່ຍາກຕາມລຳດັບ ໂດຍໄດ້ຮຽນຮູ້ເປັນລາຍບຸກຄົນ ແລະ ກຸ່ມຕາມຄວາມສົນໃຈ.
3. ການຈັດກິດຈະກຳການຮຽນຮູ້ ແມ່ນໃຫ້ເດັກໄດ້ປະຕິບັດຕົວຈິງໃນລັກສະນະຂອງການຮຽນແບບຕັ້ງໜ້າ ຫຼື ເອົາເດັກເປັນໃຈກາງ, ເພື່ອເປີດໂອກາດໃຫ້ເດັກໄດ້ທົດລອງ, ປະດິດສ້າງຢ່າງສ້າງສັນ, ຄິດແກ້ໄຂບັນຫາ ແລະ ຄົ້ນພົບສິ່ງໃໝ່ດ້ວຍຕົນເອງ ໂດຍຜ່ານການຫຼິ້ນທີ່ເບີກບານມ່ວນຊື່ນ ສອດຄ່ອງກັບທຳມະຊາດຂອງເດັກແຕ່ລະຄົນທີ່ມີຄວາມແຕກຕ່າງກັນໃນການຫຼິ້ນ ແລະ ການຮຽນຮູ້ໃນແຕ່ລະກິດຈະກຳຄື: ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ, ວົງມົນ, ສິລະປະສ້າງສັນ, ຫຼິ້ນກາງແຈ້ງ, ຫຼິ້ນຕາມມູມ ແລະ ເກມການສຶກສາ.
4. ການຈັດປະສົບການໄດ້ເນັ້ນໜັກເນື້ອໃນທີ່ເດັກຄວນຮຽນຮູ້ຈາກສັງຄົມ, ວັດທະນະທຳ ແລະ ສະພາບແວດລ້ອມທີ່ເດັກອາໄສຢູ່ໂດຍຄຳນຶງເຖິງຄວາມແຕກຕ່າງຂອງເດັກແຕ່ລະຄົນ.

ນອກນັ້ນໃນແຜນການຈັດປະສົບການສະບັບນີ້ຍັງໄດ້ແນະນຳການຈັດຫ້ອງ, ທັກສະທີ່ຄວນພັດທະນາເພື່ອໃຫ້ສອດຄ່ອງກັບພັດທະນາການຂອງເດັກອາຍຸ 5 ປີ ແລະ ການຈັດປະສົບການໃນໜ່ວຍການສອນໃຫ້ຄູໄດ້ນຳໄປໃຊ້ໃນການຈັດການຮຽນ-ການສອນຂອງຕົນ. ເປັນທີ່ແນ່ນອນວ່າເອກະສານສະບັບນີ້ປາສະຈາກຄວາມຂາດຕົກບົກຜ່ອງບໍ່ໄດ້ ຄະນະຮຽບຮຽງ ແລະ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາມີຄວາມຍິນດີຕ້ອນຮັບທຸກຄຳຄິດເຫັນທີ່ສ້າງສັນຈາກຜູ້ຊົມໃຊ້ ເພື່ອປັບປຸງໃຫ້ນັບມື້ດີຂຶ້ນໃນອະນາຄົດ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ


ໜ້າ

**ຈຸດປະສົງລວມ** ............ 1-4

**ຈຸດປະສົງສຳລັບອາທິດທີ 1** ............ 5-10

**1. ໜ່ວຍຕົວຂອງຂ້ອຍ, ອາທິດທີ 1: ມື້ທີ 1**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມທີ່ນາຍຄູອອກແບບປະກອບບົດເພງ ເຈົ້າຊື່ຫຍັງ 11

ກິດຈະກຳວົງມົນ: ຊື່ ແລະ ນາມສະກຸນຕົນເອງ ແລະ ໝູ່ເພື່ອນ ............ 12

ກິດຈະກຳສິລະປະສ້າງສັນ: ແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບເດັກນ້ອຍຍິງ ແລະ ເດັກນ້ອຍຊາຍ...... 13

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນເຕັ້ນເຂົ້າວົງມົນຕາມສຽງສັນຍານ ............ 14

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບເດັກນ້ອຍຍິງ ແລະ ຊາຍຫຼິ້ນມ່ວນຊື່ນ. ............ 15

ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ. ............ 16

**2. ໜ່ວຍຕົວຂອງຂ້ອຍ, ອາທິດທີ 1: ມື້ທີ 2**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ ............ 17

ກິດຈະກຳວົງມົນ: ຫົວ ............ 18

ກິດຈະກຳສິລະປະສ້າງສັນ: ຜິ່ນສີໃສ່ໜ້າກາກຄົນ ............ 19

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ແລ່ນໄລ່ຊ້ອນ ............ 20

ກິດຈະກຳເກມການສຶກສາ: ເກມລຽນລຳດັບຮູບພາບເດັກນ້ອຍຍິງ ແລະ ຊາຍສູງ-ຕ່ຳ. ............ 21

ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມອ່ານ ............ 22

**3. ໜ່ວຍຕົວຂອງຂ້ອຍ, ອາທິດທີ 1: ມື້ທີ 3**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຮຽນແບບກັບເງົາ ແວ່ນ ............ 23

ກິດຈະກຳວົງມົນ: ຜົມ ............ 24

ກິດຈະກຳສິລະປະສ້າງສັນ: ເປຍເຊືອກຟາງຕາມແບບ. ............ 25

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນດິນຊາຍ: ຫຼິ້ນຜອງຊາຍ ໃສ່ກະປ໋ອງ ............ 26

ກິດຈະກຳເກມການສຶກສາ: ເກມລຽນລຳດັບຮູບພາບເດັກນ້ອຍສະຜົມ. ............ 27

ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ. ............ 28

**4. ໜ່ວຍຕົວຂອງຂ້ອຍ, ອາທິດທີ 1: ມື້ທີ 4**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ ............ 29

ກິດຈະກຳວົງມົນ: ການບົວລະບັດຮັກສາໃບໜ້າ ............ 30

ກິດຈະກຳສິລະປະສ້າງສັນ: ຂີດຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບຕາມຮອຍຈ້ຳ. ............ 31

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນເຊື່ອງຕຸກກະຕາ ............ 32

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບໃບໜ້າ ............ 33

ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ ............ 34

**5. ໜ່ວຍຕົວຂອງຂ້ອຍ, ອາທິດທີ 1: ມື້ທີ 5**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດລຳຄ່ອງ ໃບໜ້າສະອາດ .. 35

ກິດຈະກຳວົງມົນ: ການສະແດງອາລົມອອກທາງສີໜ້າ ............ 36

ກິດຈະກຳສິລະປະສ້າງສັນ: ແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບຕາ ............ 37

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນແຂ່ງຍັບສິ່ງບານອ້າມຫົວ ............ 38

ກິດຈະກຳເກມການສຶກສາ: ເກມລຽນລຳດັບຮູບວົງມົນຕາມແບບ ............ 39

ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ ............ 40

**6. ໜ່ວຍຕົວຂອງຂ້ອຍ, ອາທິດທີ 2: ມື້ທີ 1**
ຈຸດປະສົງສຳລັບອາທິດທີ 2 ........ 41-42
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບເລື່ອງ ການບົວລະບັດຮັກສາຕາ .... 43
ກິດຈະກຳວົງມົນ: ຕາ ........ 44
ກິດຈະກຳສິລະປະສ້າງສັນ: ຮ້ອຍໝາກຕູ້ມສະຫຼັບສີ ........ 45
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ແຂ່ງຂັນມັດຕາແຕ້ມຮູບໃບໜ້າຄົນ ........ 46
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນການລ້າງໜ້າ ແລະ ເຊັດໜ້າ ........ 47
ກິດຈະກຳການຫຼິ້ນຕາມມຸມ: ມຸມວິທະຍາສາດ ແລະ ທຳມະຊາດ, ມຸມສິລະປະສ້າງສັນ ........ 48
**7. ໜ່ວຍຕົວຂອງຂ້ອຍ, ອາທິດທີ 2: ມື້ທີ 2**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ ........ 49
ກິດຈະກຳວົງມົນ: ການປ້ອງກັນພະຍາດຕາແດງ ........ 50
ກິດຈະກຳສິລະປະສ້າງສັນ: ພັບຜ້າຮູບຈະຕຸລັດເປັນຮູບສາມແຈ. ........ 51
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ລູ່ລີເຂົ້າສານ ........ 52
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບຄຸນ ປະໂຫຍດຂອງຫູ ........ 53
ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມສິລະປະສ້າງສັນ ........ 54
**8. ໜ່ວຍຕົວຂອງຂ້ອຍ, ອາທິດທີ 2: ມື້ທີ 3**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດຄຳຄ່ອງ ຮັກສາຕາ .... 55
ກິດຈະກຳວົງມົນ: ຫູ ........ 56
ກິດຈະກຳສິລະປະສ້າງສັນ: ຂີດຂຽນຕົວເລກ 0-1 ຕາມຮອຍຈໍ້າ ແລະ ຂຽນຕາມໃຈ ........ 57
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນນ້ຳ-ຫຼິ້ນຊາຍ: ຜອງນ້ຳ, ຮ່ອນຊາຍ ........ 58
ກິດຈະກຳເກມການສຶກສາ: ເກມລຽນລຳດັບຮູບສາມແຈຕາມແບບ ........ 59
ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມອ່ານ ........ 60
**9. ໜ່ວຍຕົວຂອງຂ້ອຍ, ອາທິດທີ 2: ມື້ທີ 4**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດເພງ ຫູຂອງຫຼານ ....... 61
ກິດຈະກຳວົງມົນ: ດັງ ........ 62
ກິດຈະກຳສິລະປະສ້າງສັນ: ແຕ້ມ ແລະ ຕັດຕິດຮູບເລຂາຄະນິດ. ........ 63
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ເຕັ້ນເຊືອກ ........ 64
ກິດຈະກຳເກມການສຶກສາ: ເກມລຽນລຳດັບຮູບພາບເດັກນ້ອຍຖູແຂ້ວ ........ 65
ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ. ........ 66
**10. ໜ່ວຍຕົວຂອງຂ້ອຍ, ອາທິດທີ 2: ມື້ທີ 5**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ ດັງສະອາດ ........ 67
ກິດຈະກຳວົງມົນ: ປາກ ........ 68
ກິດຈະກຳສິລະປະສ້າງສັນ: ຂີດຂຽນສະຫຼະ x າ, ຕົວສະກົດຕາມຄຳສັບ ........ 69
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ແຂ່ງຂັນເຕັ້ນກົບ ........ 70
ກິດຈະກຳເກມການສຶກສາ: ເກມລຽນລຳດັບຮູບພາບການບົວລະບັດຮັກສາເລົາຄີງ ........ 71
ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ ........ 72

**11. ໜ່ວຍຕົວຂອງຂ້ອຍ, ອາທິດທີ 3: ມື້ທີ 1**
ຈຸດປະສົງສຳລັບອາທິດທີ 3 ........................................ 73-74
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດລຳຄ່ອງ ປາກສະອາດ ... 75
ກິດຈະກຳວົງມົນ: ເລົ່າຄືງ ........................................ 76
ກິດຈະກຳສິລະປະສ້າງສັນ: ຢອດສີໃສ່ຮູບພາບເສື້ອ. ........................................ 77
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ປ້ອງກັນຕົວ ........................................ 78
ກິດຈະກຳເກມການສຶກສາ: ເກມລຽນລຳດັບຮູບຈະຕຸລັດຕາມແບບ ........................................ 79
ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມອ່ານ. ........................................ 80
**12. ໜ່ວຍຕົວຂອງຂ້ອຍ, ອາທິດທີ 3: ມື້ທີ 2**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບ ຍ່າງປະກອບການນັບ ........................................ 81
ກິດຈະກຳວົງມົນ: ສ່ວນປະກອບຂອງແຂນ ແລະ ຄຸນປະໂຫຍດ. ........................................ 82
ກິດຈະກຳສິລະປະສ້າງສັນ: ພິມສີຮູບພາບຝາມື ........................................ 83
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ໂຍນບານເຂົ້າວົງມົນ ........................................ 84
ກິດຈະກຳເກມການສຶກສາ: ເກມລຽນລຳດັບຮູບພາບເດັກນ້ອຍລ້າງມືຕາມຂັ້ນຕອນ ........................................ 85
ກິດຈະກຳການຫຼິ້ນຕາມມຸມ: ມຸມເກມການສຶກສາ ແລະ ມຸມເຄື່ອງຫຼິ້ນສຳຜັດ ........................................ 86
**13. ໜ່ວຍຕົວຂອງຂ້ອຍ, ອາທິດທີ 3: ມື້ທີ 3**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູແນະນຳ ........................................ 87
ກິດຈະກຳວົງມົນ: ການບົວລະບັດຮັກສາມື ........................................ 88
ກິດຈະກຳສິລະປະສ້າງສັນ: ຕັດ, ຕິດຮູບພາບມື. ........................................ 89
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນພິມຮູບຕ່າງໆດ້ວຍດິນຊາຍ ........................................ 90
ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບເດັກນ້ອຍເຕະບານ ........................................ 91
ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມສິລະປະສ້າງສັນ. ........................................ 92
**14. ໜ່ວຍຕົວຂອງຂ້ອຍ, ອາທິດທີ 3: ມື້ທີ 4**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ ........................................ 93
ກິດຈະກຳວົງມົນ: ສ່ວນປະກອບ ແລະ ຄຸນປະໂຫຍດຂອງຂາ ........................................ 94
ກິດຈະກຳສິລະປະສ້າງສັນ: ພົ່ນສີໃສ່ຮູບພາບຕີນ. ........................................ 95
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ຊອກຫາເພື່ອນ ........................................ 96
ກິດຈະກຳເກມການສຶກສາ: ເກມລຽນລຳດັບຮູບພາບການບົວລະບັດຮັກສາຕີນ ........................................ 97
ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ. ........................................ 98
**15. ໜ່ວຍຕົວຂອງຂ້ອຍ, ອາທິດທີ 3: ມື້ທີ 5**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ ........................................ 99
ກິດຈະກຳວົງມົນ: ການບົວລະບັດຮັກສາຕີນ ........................................ 100
ກິດຈະກຳສິລະປະສ້າງສັນ: ຕັດ, ຕິດຮູບພາບເກີບ. ........................................ 101
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ແຂ່ງຂັນຍ່າງເຢ່ງແຢ້ປາຍຕີນ ........................................ 102
ກິດຈະກຳເກມການສຶກສາ: ເກມລຽນລຳດັບຮູບສີ່ແຈຕາມແບບ ........................................ 103
ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມບົດບາດສົມມຸດ. ........................................ 104

**16. ໜ່ວຍຕົວຂອງຂ້ອຍ, ອາທິດທີ 4: ມື້ທີ 1**
ຈຸດປະສົງສຳລັບອາທິດທີ 4 .......... 105-108
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຂໍ້ກົກລົງຕາມນາຍຄູແນະນຳ .......... 107
ກິດຈະກຳວົງມົນ: ອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ .......... 108
ກິດຈະກຳສິລະປະສ້າງສັນ: ທາສີຮູບພາບປາ, ໄຂ່ ແລະ ສາລີ .......... 109
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນນ້ຳ-ຫຼິ້ນຊາຍ ຫຼິ້ນຣ່າຍນ້ຳໃສ່ແກ້ວ ແລະ ປັ້ນຊາຍເປັນຮູບຕ່າງໆ .......... 110
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັບຮູບພາບອາຫານຕາມປະເພດ .......... 111
ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມອ່ານ .......... 112
**17. ໜ່ວຍຕົວຂອງຂ້ອຍ, ອາທິດທີ 4: ມື້ທີ 2**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດເພງ ອາຫານດີມີປະໂຫຍດ 113
ກິດຈະກຳວົງມົນ: ການກິນອາຫານ .......... 114
ກິດຈະກຳສິລະປະສ້າງສັນ: ຂີດຂຽນຕົວເລກ 2-3 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ .......... 115
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ແຂ່ງຂັນເຕັ້ນຂ້າມແກັດ .......... 116
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັບຮູບພາບອາຫານປະເພດໝາກໄມ້ .......... 117
ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ. .......... 118
**18. ໜ່ວຍຕົວຂອງຂ້ອຍ, ອາທິດທີ 4: ມື້ທີ 3**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບບົດເພງ ອາຫານດີມີປະໂຫຍດ .......... 119
ກິດຈະກຳວົງມົນ: ການປຸງແຕ່ງອາຫານ ແລະ ຄວາມປອດໄພ .......... 120
ກິດຈະກຳສິລະປະສ້າງສັນ: ຈີກ ແລະ ຕິດຮູບພາບ .......... 121
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ເສືອໄລ່ໝູ່ .......... 122
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັບຮູບພາບອາຫານປະເພດຜັກ .......... 123
ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສຳຜັດ. .......... 124
**19. ໜ່ວຍຕົວຂອງຂ້ອຍ, ອາທິດທີ 4: ມື້ທີ 4**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຂໍ້ກົກລົງຕາມນາຍຄູແນະນຳ .......... 125
ກິດຈະກຳວົງມົນ: ການປຸງແຕ່ງເຄື່ອງດື່ມ ແລະ ຄວາມປອດໄພ .......... 126
ກິດຈະກຳສິລະປະສ້າງສັນ: ແຕ້ມ ແລະ ທາສີຮູບພາບໝາກໄມ້ຕາມຈິນຕະນາການ. .......... 127
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ແຂ່ງຂັນຍ່າງຮັກສາຄວາມທ່ຽງ .......... 128
ກິດຈະກຳເກມການສຶກສາ: ເກມຈັດໝວດໝູ່ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດ ຕາມຂະໜາດ .......... 129
ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ. .......... 130
**20. ໜ່ວຍຕົວຂອງຂ້ອຍ, ອາທິດທີ 4: ມື້ທີ 5**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບບົດຄຳຄ່ອງ ນ້ຳໝາກໄມ້ .......... 131
ກິດຈະກຳວົງມົນ: ການຮັກສາສຸຂະພາບ .......... 132
ກິດຈະກຳສິລະປະສ້າງສັນ: ປັ້ນດິນ. .......... 133
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ເຕັ້ນໄຮ່ນາ .......... 134
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນ່ຮູບພາບການປະຕິບັດກິດຈະກຳຂອງເດັກນ້ອຍ .......... 135
ກິດຈະກຳການຫຼິ້ນຕາມມຸມ: ມຸມເກມການສຶກສາ ແລະ ມຸມອ່ານ .......... 136

- ເອກກະສານອ້າງອີງ .......... 137

# ຈຸດປະສົງລວມ

## ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ, ບົດຄຳຄ່ອງໄດ້ຖືກຕ້ອງ.
2. ສະແດງທ່າທາງຮຽນແບບກັບເງົາ ແວ່ນໄດ້ຖືກຕ້ອງ.
3. ສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດເພງ, ຄຳຄ່ອງ, ເລື່ອງການບົວລະບັດຮັກສາຕາຢ່າງມ່ວນຊື່ນ.
4. ສະແດງທ່າທາງຕາມນາຍຄູອອກແບບ ຢ່າງປະກອບການນັບໄດ້ຖືກຕ້ອງ.
5. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູແນະນຳໄດ້ຖືກຕ້ອງ.
6. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
7. ປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳໄດ້ຖືກຕ້ອງ.
8. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.
9. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.
10. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.
11. ກ້າສະແດງອອກໃນເວລາສະແດງທ່າທາງ.
12. ອົດທົນໃນເວລາສະແດງທ່າທາງ.
13. ມ່ວນຊື່ນໃນເວລາສະແດງທ່າທາງ.

## ກິດຈະກຳວົງມົນ

1. ບອກຊື່, ນາມສະກຸນ, ເພດ, ຮູບຮ່າງລັກສະນະຂອງຕົນເອງ ແລະ ໝູ່ເພື່ອນໄດ້ຖືກຕ້ອງ.
2. ບອກສ່ວນປະກອບຂອງຮ່າງກາຍ, ຫົວ ແລະ ໃບໜ້າໄດ້ຖືກຕ້ອງ.
3. ປຽບທຽບຄວາມສູງສູງກວ່າ, ຕ່ຳກວ່າໄດ້ຖືກຕ້ອງ.
4. ເວົ້າຄຳທີ່ສຸພາບ, ມີຄວາມສາມັກຄີ ແລະ ແບ່ງປັນເຄື່ອງໃຊ້ໃຫ້ໝູ່ເພື່ອນ.
5. ບອກລັກສະນະຂອງຜົມຕົນເອງ, ໝູ່ເພື່ອນ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາຜົມໄດ້ຖືກຕ້ອງ.
6. ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ, ຄຳສັບທີ່ປະສົມກັບສະຫຼະ ×າ, ຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ ×່, ×້, ຄຳສັບທີ່ມີຕົວສະກົດ: ກ, ງ, ບ, ມ ໄດ້ຊັດເຈນ.
7. ປະຕິບັດຕົວຈິງໃນການບົວລະບັດຮັກສາຜົມຫວີຜົມ, ເປຍຜົມ, ມັດຜົມ, ລ້າງໜ້າ, ເຊັດໜ້າ, ການສະແດງອາລົມອອກທາງສີໜ້າ, ການເກດເບິ່ງສິ່ງຂອງຕ່າງໆໃນຫ້ອງຮຽນ, ການຟັງສຽງ, ການດົມກິ່ນ, ການຖູແຂ້ວ, ການຈັບບາຍວັດຖຸສິ່ງຂອງ, ການລ້າງມື ແລະ ການໃສ່ເກີບ, ປຸງແຕ່ງອາຫານ (ຈືນໄຂ່), ນ້ຳໝາກນາວ.
8. ບອກຊື່ເຄື່ອງໃຊ້ໃນການລ້າງໜ້າໄດ້ຖືກຕ້ອງ.
9. ເລົ່າຄຳຄ່ອງ, ເວົ້າເປັນຄຳສັບ, ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ, ບົດເພງ, ບົດນິທານ ແລະ ຕາມຮູບພາບໄດ້ຊັດເຈນ.
10. ເວົ້າອອກສຽງຄຳສັບທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບໄດ້ຊັດເຈນ.
12. ບອກການສະແດງອາລົມອອກທາງສີໜ້າໄດ້ຖືກຕ້ອງ.

13. ມາລະຍາດໃນການຍິ້ມ, ຫົວ ແລະ ຮ້າຍ.
14. ບອກການປ້ອງກັນພະຍາດຕາແດງໄດ້ຖືກຕ້ອງ.
15. ຮ້ອງເພງດ້ວຍຄວາມເບີກບານມ່ວນຊື່ນ ແລະ ມີມາລະຍາດໃນການຟັງນິທານ.
16. ບອກສ່ວນປະກອບ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາເລົ່າຄີງ, ແຂນ, ຂາ, ມື, ຕີນ, ຕາ, ຫູ, ດັງ, ປາກໄດ້ຖືກຕ້ອງ.
17. ບອກຜົນການຮວມກຸ່ມຮູບພາບມື 1-5 ໄດ້ຖືກຕ້ອງ.
18. ບອກອາຫານ, ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ ແລະ ອາຫານ, ເຄື່ອງດື່ມທີ່ຄວນກິນ ແລະ ບໍ່ຄວນກິນໄດ້ຖືກຕ້ອງ.
19. ອ່ານຕາມລຳດັບຕົວເລກແຕ່ 0-5 ໄດ້ຖືກຕ້ອງ.
20. ບອກການປຸງແຕ່ງອາຫານ, ເຄື່ອງດື່ມ, ຄວາມປອດໄພໃນເວລາແຕ່ງອາຫານ ແລະ ເຄື່ອງດື່ມໄດ້ຖືກຕ້ອງ.
21. ບອກອະໄວຍະວະຂອງຮ່າງກາຍ ຫຼື ເຄື່ອງນຸ່ງຫົ່ມທີ່ເປັນຮູບວົງມົນ, ສາມແຈ, ຈະຕຸລັດ, ສີ່ແຈໄດ້ຖືກຕ້ອງ.
22. ບອກການຮັກສາສຸຂະພາບ: ອອກກຳລັງກາຍ, ພັກຜ່ອນ, ຂັບຖ່າຍ ແລະ ຫຼິ້ນໄດ້ຖືກຕ້ອງ.

## ກິດຈະກຳສິລະປະສ້າງສັນ

1. ບອກຂັ້ນຕອນການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບເດັກນ້ອຍຍິງ, ເດັກນ້ອຍຊາຍ, ພົ່ນສີໃສ່ໜ້າຄົນ, ເປຍເຊືອກຟາງຕາມແບບ, ຂີດຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບ, ຂີດຂຽນຕົວເລກ 2-3 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ, ແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບຕາ, ຮ້ອຍໝາກຕຸ້ມສະຫຼັບສີ, ພັບຜ້າຮູບຈະຕຸລັດ ເປັນຮູບສາມແຈ, ຂີດຂຽນຕົວເລກ 0-1 ຕາມຮອນຈ້ຳ ແລະ ຂຽນຕາມໃຈ, ແຕ້ມ ແລະ ຕັດ, ຕິດຮູບວົງມົນ, ສາມແຈ, ຈະຕຸລັດ ແລະ ສີ່ແຈ, ຂີດຂຽນສະຫຼະ ×າ, ຕົວສະກົດຕາມຄຳສັບ, ຢອດສີໃສ່ຮູບພາບເສື້ອ, ພິມສີໃສ່ຮູບພາບມື, ຕັດ-ຕິດຮູບພາບມື, ພົ່ນສີໃສ່ຮູບພາບຕີນ, ຕັດ-ຕິດຮູບພາບເກີບ, ທາສີຮູບພາບ: ປາ, ໄຂ່ ແລະ ສາລີ, ຈີກ, ແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບໝາກໄມ້ ຕິດຮູບພາບ: ໄຂ່ຈືນ ແລະ ຮູບພາບຜັກ, ປັ້ນດິນເປັນຮູບຕ່າງໆ ປັ້ນດິນເປັນຮູບຕ່າງໆ ປັ້ນດິນເປັນຮູບຕ່າງໆ ແລະ ແຕ້ມ ແລະ ທາສີຮູບພາບໝາກໄມ້ ໄດ້ຖືກຕ້ອງ.
2. ແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບເດັກນ້ອຍຍິງ, ເດັກນ້ອຍຊາຍ, ຮູບພາບຕາ, ແຕ້ມ, ຕັດ, ຕິດ, ຮູບວົງມົນ, ສາມແຈ, ຈະຕຸລັດ ແລະ ສີ່ແຈປະກອບເປັນຮູບຄົນ, ແຕ້ມ, ທາສີຮູບພາບ: ປາ, ໄຂ່ ແລະ ສາລີ, ທາສີຮູບພາບໝາກໄມ້ຕາມຈິນຕະນາການໄດ້ສະອາດຈົບງາມ ແລະ ຢູ່ໃນຂອບ.
3. ຂີດຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບໄດ້ສະອາດຈົບງາມ.
4. ແບ່ງປັນສໍສີ ແລະ ດິນປັ້ນໃຫ້ໝູ່ເພື່ອນ.
5. ພົ່ນສີໃສ່ໜ້າກາກຄົນ, ຮູບພາບຕີນ, ຢອດສີໃສ່ຮູບພາບເສື້ອ, ພິມສີຮູບພາບຝາມື, ໄດ້ສະອາດຈົບງາມ.
6. ເຝິກໃຫ້ເດັກນ້ອຍມີຄວາມລະມັດລະວັງໃນການພົ່ນສີ, ຢອດສີ, ພິມສີ.
7. ປັ້ນດິນເປັນຮູບຕ່າງໆຕາມຈິນຕະນາການໄດ້ຄ້າຍຄື.
8. ເປຍເຊືອກຟາງຕາມແບບໄດ້ຈົບງາມ.
9. ຕັດ, ຕິດຮູບພາບມື ແລະ ຮູບພາບເກີບໄດ້ສະອາດຈົບງາມ.
3. ມີຄວາມອົດທົນໃນການເປຍໃນການເປຍເຊືອກຟາງຕາມແບບ.
9. ມີຄວາມອົດທົນໃນການຂີດຂຽນສະຫຼະ ×າ, ຕົວສະກົດຕາມຄຳສັບ ແລະ ຂີດຂຽນຕົວເລກ 0-1 ຕາມຮອຍຈ້ຳ, ຂຽນຕາມໃຈ ແລະ ຂີດຂຽນຕົວເລກ 2-3 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ.
10. ຮ້ອຍໝາກຕຸ້ມສະຫຼັບສີໄດ້ຈົບງາມ.
12. ເຝິກປະສາດສຳພັນລະຫວ່າງມື ກັບ ສາຍຕາໃຫ້ຄ່ອງແຄ້ວໃນການຈີກ, ຕິດ.
11. ມີຄວາມອົດທົນໃນການຮ້ອຍໝາກຕຸ້ມສະຫຼັບສີ, ແຕ້ມ, ຕັດ, ຕິດຮູບພາບມື, ຕັດ, ຕິດຮູບພາບເກີບ.

13. ພັບຜ້າຮູບຈະຕຸລັດເປັນຮູບສາມແຈ, ພັບ ແລະ ພີ້ຜ້າຮູບສາມແຈເປັນຮູບຈະຕຸລັດ ໄດ້ຄ້າຍຄື.
14. ຊ່ວຍເຫຼືອໝູ່ເພື່ອນໃນເວລາພັບຜ້າ.
15. ມີຄວາມອົດທົນໃນການຈີກ, ຕິດ ຮູບພາບໄຂ່ຈືນ ແລະ ຮູບພາບຜັກ.

## ກິດຈະກໍາການຫຼິ້ນ ກາງແຈ້ງ

1. ບອກຂັ້ນຕອນ ແລະ ກະຕິກາໃນການຫຼິ້ນແບບຫຼິ້ນເຕັ້ນເຂົ້າວົງມົນຕາມສຽງສັນຍານ, ຫຼິ້ນແລ່ນໄລ່ຊ້ອນ, ຫຼິ້ນຜອງຊາຍ, ຫຼິ້ນເຊື່ອງຕຸກກະຕາ, ຫຼິ້ນແຂ່ງຂັນສົ່ງບານຂ້າມຫົວ, ຫຼິ້ນແຂ່ງຂັນມັດຕາແຕ້ມຮູບໃບໜ້າຄົນ, ຫຼິ້ນລູລີ່ເຂົ້າສານ, ຫຼິ້ນນໍ້າ-ຫຼິ້ນຊາຍ: ຜອງນໍ້າ ແລະ ຜອງຊາຍ, ຫຼິ້ນເຕັ້ນເຊືອກ, ຫຼິ້ນແຂ່ງຂັນເຕັ້ນກົບ, ຫຼິ້ນປ້ອງກັນຕົວເອງ, ຫຼິ້ນແຂ່ງຂັນໂຍນບານເຂົ້າວົງມົນ, ພິມຮູບຕ່າງໆດ້ວຍດິນຊາຍ, ຫຼິ້ນຊອກຫາເພື່ອນ, ຫຼິ້ນແຂ່ງ ຂັນຍ່າງແຍ່ງແຍ້ປາຍຕີນ, ຫຼິ້ນຮ່າຍນໍ້າໃສ່ແກ້ວ ແລະ ປັ້ນຊາຍເປັນຮູບຕ່າງໆ, ຫຼິ້ນແຂ່ງຂັນເຕັ້ນຂ້າມແກັດ, ຫຼິ້ນເສືອໄລ່ໝູ, ຫຼິ້ນແຂ່ງຂັນຍ່າງຮັກສາຄວາມທ່ຽງ ແລະ ຫຼິ້ນຕໍາຫຼວດຈັບໂຈນ.
2. ຫຼິ້ນແບບຫຼິ້ນເຕັ້ນເຂົ້າວົງມົນຕາມສຽງສັນຍານ, ຫຼິ້ນແລ່ນໄລ່ຊ້ອນ, ຫຼິ້ນເຊື່ອງຕຸກກະຕາ, ຫຼິ້ນແຂ່ງຂັນສົ່ງບານຂ້າມຫົວ, ຫຼິ້ນເຕັ້ນແຂ່ງຂັນມັດຕາຕ້ມຮູບໃບໜ້າຄົນ, ຫຼິ້ນລູລີ່ເຂົ້າສານ, ຫຼິ້ນເຕັ້ນເຊືອກ ແລະ ຫຼິ້ນແຂ່ງຂັນເຕັ້ນກົບ, ຫຼິ້ນປ້ອງກັນຕົວເອງ, ຫຼິ້ນແຂ່ງຂັນໂຍນບານເຂົ້າວົງມົນ, ຫຼິ້ນຊອກຫາເພື່ອນ, ຫຼິ້ນແຂ່ງຂັນຍ່າງແຍ່ງແຍ້ປາຍຕີນ, ຫຼິ້ນແຂ່ງຂັນເຕັ້ນຂ້າມແກັດ, ຫຼິ້ນເສືອໄລ່ໝູ, ຫຼິ້ນແຂ່ງຂັນຍ່າງຮັກສາຄວາມທ່ຽງ, ຫຼິ້ນຕໍາຫຼວດຈັບໂຈນໄດ້ຖືກຕ້ອງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.
4. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງ.
5. ປອດໄພໃນເວລາຫຼິ້ນແບບຫຼິ້ນ.
6. ເບີກບານມ່ວນຊື່ນໃນເວລາຫຼິ້ນ.
7. ອົດທົນໃນເວລາຫຼິ້ນແບບຫຼິ້ນ.
8. ມີມາລະຍາດທີ່ດີໃນເວລາຫຼິ້ນ.

## ກິດຈະກໍາເກມການສຶກສາ

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຕໍ່ຮູບພາບເດັກນ້ອຍຍິງ ແລະ ຊາຍຫຼິ້ນມ່ວນຊື່ນ, ເດັກນ້ອຍເຕາະບານໄດ້ຖືກຕ້ອງ.
3. ຈັດໝວດໝູ່ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດຕາມຂະໜາດໄດ້ຖືກຕ້ອງ.
4. ລຽນລໍາດັບຮູບພາບເດັກນ້ອຍຍິງ ແລະ ຊາຍສູງຕໍ່າ, ຮູບພາບເດັກນ້ອຍສະຜົມ, ຮູບວົງມົນຕາມແບບ, ຮູບຈະຕຸລັດຕາມແບບ, ລຽນລໍາດັບຮູບສີ່ແຈຕາມແບບ. ຮູບພາບເດັກນ້ອຍຖູແຂ້ວ, ການບົວລະບັດຮັກສາເລັບຕີງ. ຮູບພາບເດັກນ້ອຍລ້າງມືຕາມຂັ້ນຕອນ, ຮູບພາບການບົວລະບັດຮັກສາຕີນໄດ້ຖືກຕ້ອງ.
5. ຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນການລ້າງໜ້າ ແລະ ເຊັດໜ້າ, ຮູບພາບໃບໜ້າ, ຮູບພາບຄຸນປະໂຫຍດຂອງຫູ, ຮູບອາຫານຕາມປະເພດ, ຮູບພາບອາຫານປະເພດໝາກໄມ້, ຮູບພາບອາຫານປະເພດຜັກ, ຮູບພາບກິດຈະກໍາປະຈໍາວັນຂອງເດັກນ້ອຍໄດ້ຖືກຕ້ອງ.
6. ອົດທົນໃນເວລາຫຼິ້ນເກມ.
7. ເວົ້າຄໍາທີ່ສຸພາບກັບໝູ່ເພື່ອນ.
8. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.
9. ແບ່ງປັນເກມໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ສຳຜັດຕໍ່ບຼັອກຕາມແບບຮູບວົງມົນ, ສີ່ແຈ, ຈະຕຸລັດ, ທໍ່ກົມ, ສາມແຈເປັນຮູບຄົນ, ເຄື່ອງນຸ່ງຕາມແບບ ແລະ ສ້າງແບບຮູບຕາມຄວາມຄິດເດັກ, ຫຼິ້ນເຄື່ອງດົນຕີ, ພິມສະຫຼະ ×າ ໃສ່ອ້າງຊາຍ: ຕາ, ຂາ, ກະ, ສະ, ຕໍ່ບຼັອກເປັນຮູບຕ່າງໆຕາມຈິນຕະນາການ, ພິມຝ່າມືໃສ່ອ່າງດິນຊາຍ, ວາງຮູບເລຂາຄະນິດສະຫຼັບສີກັນຕາມແບບ, ຕໍ່ບຼັອກຕາມແບບ, ພິມຕົວເລກ 0-5 ໃສ່ອ່າງດິນຊາຍຢ່າງມ່ວນຊື່ນ.
3. ແຕ້ມຕາມຮອຍຈ້ຳ, ທາສີຮູບພາບເດັກນ້ອຍຍິງ, ເດັກນ້ອຍຊາຍ, ທາສີຮູບໜ້າກາກເດັກນ້ອຍ ແລະ ເດັກນ້ອຍຊາຍ, ເປຍເຊືອກຟາງ, ຮ້ອຍໝາກຕຸ້ມສະຫຼັບສີ, ແຕ້ມ-ທາສີຮູບພາບຕາ, ພັບຜ້າຮູບຈັດຕຸລັດເປັນຮູບສາມແຈ, ຂີດຂຽນສະຫຼະ ×າ, ຕົວສະກົດຕາມຄຳສັບ, ຂີດຂຽນຕົວເລກຕາມຮອຍຈ້ຳ ແລະ ຕາມໃຈ, ຢອດສີໃສ່ຮູບພາບເສື້ອ, ຕັດ-ຕິດຮູບມື, ພິມສີຮູບພາບມື, ທາສີຮູບພາບປາ, ໄຂ່, ສາລີ, ຕັດ-ຕິດຮູບພາບເກີບ, ແຕ້ມ-ທາສີຮູບພາບໝາກໄມ້, ຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບ: ຕາ, ຝາ, ຢາ, ນາ, ງາ, ຂາໄດ້ຖືກຕ້ອງ.
4. ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ, ອ່ານອອກສຽງຄຳສັບທີ່ມີສະຫຼະ ×າ, ອ່ານອອກສຽງຄຳສັບທີ່ມີສະຫຼະ ×າ ແລະ ເວົ້າຊື່ສ່ວນຕ່າງໆໃນຮ່າງກາຍຂອງຄົນຕາມຮູບພາບ, ອ່ານອອກສຽງຄຳສັບທີ່ມີວັນນະຍຸດ ×່, ×້, ອ່ານຄຳສັບທີ່ມີສະຫຼະ ×າ ແລ້ວບອກພະຍັນຊະນະຕົ້ນ, ອ່ານຕາມຮູບພາບໃນປຶ້ມນິທານເລື່ອງຂອງຂວັນທີ່ຖືກໃຈ, ອ່ານຕາມຮູບພາບຮ່າງກາຍຂອງຄົນ, ອ່ານອອກສຽງຄຳສັບທີ່ມີສະຫຼະ ×າ, ອ່ານຮູບພາບຕາມປຶ້ມນິທານເລື່ອງມື້ວິເສດ, ອ່ານຕາມຮູບພາບປຶ້ມນິທານເລື່ອງ ໜີນ້ອຍແຂງແຮງຕາມຮູບພາບໄດ້ຊັດເຈນ.
5. ຫຼິ້ນບົດບາດສົມມຸດເປັນພໍ່-ແມ່ແຕ່ງຕົວໃຫ້ລູກ: ຫວີຜົມ, ມັດຜົມ, ນຸ່ງເຄື່ອງ, ເປັນເອື້ອຍ-ອ້າຍປ້ອນເຂົ້ານ້ອງ, ແຕ່ງກາຍທາແປ້ງ, ເປັນນາຍຄູສອນນັກຮຽນ, ເປັນເອື້ອຍ-ອ້າຍອາບນ້ຳໃຫ້ນ້ອງ: ອາບນ້ຳ, ຫວີຜົມ, ມັດຜົມ, ທາແປ້ງ, ເປັນນາຍຄູພາເດັກນ້ອຍລ້າງມື ແລະ ຕັດເລັບ, ເປັນທ່ານໝໍນ້ອຍກວດຫູໃຫ້ຄົນເຈັບ, ເປັນພໍ່ຄ້າ-ແມ່ຄ້າ, ລູກຄ້າຊື້ຂາຍດອກໄມ້, ເປັນພໍ່ຄ້າ, ແມ່ຄ້າ, ລູກຄ້າຊື້ຂາຍອາຫານ, ເປັນແມ່ລ້ຽງປຸງແຕ່ງອາຫານ: ຈືນໄຂ່, ຂົ້ວຜັກກາດ, ປີ້ງຊີ້ນ, ເປັນເອື້ອຍລ້ຽງປຸງແຕ່ງອາຫານ: ຍຳສະຫຼັດ, ຈືນໄຂ່, ເປັນພໍ່ຄ້າ-ແມ່ຄ້າ, ລູກຄ້າຊື້ຂາຍເຄື່ອງດື່ມຢ່າງມ່ວນຊື່ນ.
6. ລຽນລຳດັບຮູບພາບເດັກນ້ອຍສູງ-ຕ່ຳ ແລະ ຈັບຄູ່ທີ່ຄືກັນຮູບພາບໃບໜ້າ, ລຽນລຳດັບຮູບສາມແຈຕາມແບບ ແລະ ລຽນລຳດັບຮູບພາບການປົວລະບັດຮັກສາເລົ່າຄີງ, ລຽນລຳດັບຮູບພາບເດັກນ້ອຍລ້າງມືຕາມຂັ້ນຕອນ ແລະ ລຽນລຳດັບຮູບພາບຈະຕຸລັດຕາມແບບ, ລຽນລຳດັບຮູບພາບການປົວລະບັດຮັກສາຕີນ ແລະ ການຕໍ່ ຮູບພາບເດັກນ້ອຍເຕາະບານ, ຈັບຄູ່ທີ່ຄືກັນຮູບພາບກິດຈະກຳປະຈຳວັນຂອງເດັກນ້ອຍ ແລະ ຈັດໝວດໝູ່ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດຕາມຂະໜາດໄດ້ຖືກຕ້ອງ.
7. ບອກຊື່ອະໄວຍະວະທີ່ຢູ່ໃບໜ້າ: ໜ້າຜາກ, ຄິ້ວ, ດັງ, ປາກ, ແກ້ມ, ຄາງ, ຫູ, ທອງລົດເຊັດໜ້າໃຫ້ຕຸກກະຕາໄດ້ຄ່ອງແຄ້ວ.
8. ເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.
9. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.
10. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.
11. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.
12. ມີມາລະຍາດໃນການອ່ານ ແລະ ຫຼິ້ນຮ່ວມກັບໝູ່ເພື່ອນ.
13. ຮັກສາບັດຄຳສັບ ແລະ ປຶ້ມນິທານບໍ່ໃຫ້ຈີກຂາດ.

## ຈຸດປະສົງສຳລັບ ອາທິດທີ 1
## ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ, ບົດຄຳຄ່ອງໄດ້ຖືກຕ້ອງ.
2. ສະແດງທ່າທາງຮຽນແບບກັບເວົ້າແວ່ນໄດ້ຖືກຕ້ອງ.
3. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
4. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.
5. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.
6. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.
7. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.



# ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່, ນາມສະກຸນ, ເພດ, ຮູບຮ່າງລັກສະນະຂອງຕົນເອງ ແລະ ໝູ່ເພື່ອນໄດ້ຖືກຕ້ອງ.
2. ບອກສ່ວນປະກອບຂອງຮ່າງກາຍ, ຫົວ ແລະ ໃບໜ້າໄດ້ຖືກຕ້ອງ.
3. ປຽບທຽບຄວາມສູງສູງກວ່າ, ຕ່ຳກວ່າໄດ້ຖືກຕ້ອງ.
4. ເວົ້າທີ່ສຸພາບກັບໝູ່ເພື່ອນ.
5. ບອກລັກສະນະຂອງຜົມຕົນເອງ, ໝູ່ເພື່ອນ ແລະ ຄຸນປະໂຫຍດຂອງຜົມໄດ້ຖືກຕ້ອງ.
6. ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ ແລະ ອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ×າ ໄດ້ຊັດເຈນ.
7. ບອກການບົວລະບັດຮັກສາຜົມໄດ້ຖືກຕ້ອງ.
8. ປະຕິບັດຕົວຈິງໃນການບົວລະບັດຮັກສາຜົມຫວີຜົມ, ເປຍຜົມ, ມັດຜົມ, ລ້າງໜ້າ, ເຊັດໜ້າ ແລະ ການສະແດງອາລົມອອກທາງສີໜ້າໄດ້.
9. ບອກຊື່ເຄື່ອງໃຊ້ໃນການລ້າງໜ້າໄດ້.
10. ເລົ່າຄຳຄ່ອງ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຄຳຄ່ອງ, ຕາມຮູບພາບໄດ້ຊັດເຈນ.
11. ເວົ້າອອກສຽງຄຳສັບທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບໄດ້ຊັດເຈນ.
12. ແບ່ງປັນເຄື່ອງໃຊ້ໃຫ້ໝູ່ເພື່ອນ.
13. ບອກການສະແດງອາລົມອອກທາງສີໜ້າໄດ້ຖືກຕ້ອງ.
14. ມາລະຍາດໃນການຍິ້ມ, ຫົວ ແລະ ຮ້າຍ.



# ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບເດັກນ້ອຍຍິງ, ເດັກນ້ອຍຊາຍ, ພົ່ນສີໃສ່ໜ້າຄົນ, ເປຍເຊືອກຟາງຕາມແບບ, ຂີດຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບ, ແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບຕາໄດ້ຖືກຕ້ອງ.
2. ແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບເດັກນ້ອຍຍິງ, ເດັກນ້ອຍຊາຍ ແລະ ແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບຕາໄດ້ຈົບງາມ ແລະ ຢູ່ໃນຂອບ.
3. ພົ່ນສີໃສ່ໜ້າກາກຄົນໄດ້ສະອາດຈົບງາມ.
4. ເປຍເຊືອກຟາງໄດ້ຈົບງາມ.
5. ຂີດຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບໄດ້ສະອາດຈົບງາມ.
6. ເຝິກໃຫ້ເດັກນ້ອຍມີຄວາມລະມັດລະວັງໃນການພົ່ນສີ.
7. ມີຄວາມອົດທົນໃນການເປຍໃນການເປຍເຊືອກຟາງຕາມແບບ.
8. ມີຄວາມອົດທົນໃນການຂີດຂຽນສະຫະ ×າ ທີ່ມີຢູ່ໃນຄຳສັບ.
9. ແບ່ງປັນສໍສີໃຫ້ໝູ່ເພື່ອນ.



# ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາໃນການຫຼິ້ນແບບຫຼິ້ນ: ເຕັ້ນເຂົ້າວົງມົນຕາມສຽງສັນຍານ, ແລ່ນໄລ່ຊ້ອນ, ຫຼິ້ນຜອງຊາຍໃສ່ກະປອງ, ເຊື່ອງຕຸກກະຕາ, ແຂ່ງຍັນສິ່ງບານຂ້າມຫົວໄດ້.
2. ຫຼິ້ນແບບຫຼິ້ນ ເຕັ້ນເຂົ້າວົງມົນຕາມສຽງສັນຍານ, ແລ່ນໄລ່ຊ້ອນ, ຫຼິ້ນຜອງຊາຍໃສ່ກະປອງ, ເຊື່ອງຕຸກກະຕາ, ແຂ່ງຍັນສິ່ງບານຂ້າມຫົວໄດ້ຖືກຕ້ອງ.
3. ມີສະຕິ ແລະ ມີຄວາມວ່ອງໄວໃນການຫຼິ້ນ.
4. ມີຄວາມປອດໄພໃນເວລາຫຼິ້ນແບບຫຼິ້ນ.
5. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງໃນການຜອງຊາຍ.
6. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.
7. ຄວາມເບີກບານມ່ວນຊື່ນ ແລະ ມີສະຕິໃນເວລາຫຼິ້ນ.
8. ມີຄວາມຄ່ອງແຄ້ວວ່ອງໄວໃນເວລາຫຼິ້ນ.



# ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຕໍ່ຮູບພາບເດັກນ້ອຍຍິງ ແລະ ຊາຍຫຼິ້ນມ່ວນຊື່ນໄດ້ຖືກຕ້ອງ.
3. ລຽນລຳດັບຮູບພາບເດັກນ້ອຍຍິງ ແລະ ຊາຍສູງຕ່ຳ ແລະ ຮູບພາບເດັກນ້ອຍສະຜົມໄດ້ຖືກຕ້ອງ.
4. ລຽນລຳດັບຮູບວົງມົນຕາມແບບໄດ້ຖືກຕ້ອງ.
5. ຈັບຄູ່ທີ່ຄືກັນຮູບພາບໃບໜ້າໄດ້ຖືກຕ້ອງ.
6. ອົດທົນໃນເວລາຫຼິ້ນເກມ.
7. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.



# ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ສຳຜັດຕໍ່ບັ໊ອກຕາມແບບຮູບວົງມົນ, ສີ່ແຈ, ຈະຕຸລັດ, ທໍ່ກົມ, ສາມແຈເປັນຮູບຄົນ, ເຄື່ອງນຸ່ງຕາມແບບ ແລະ ສ້າງແບບຮູບຕາມຄວາມຄິດເດັກ, ຫຼິ້ນເຄື່ອງດົນຕີ, ພິມສະຫຼະ ×າ ໃສ່ອ່າງຊາຍ: ຕາ, ຂາ, ກະ, ສະ, ຢ່າງມ່ວນຊື່ນ.
3. ແຕ້ມຕາມຮອຍຈໍ້າ, ທາສີຮູບພາບເດັກນ້ອຍຍິງ, ເດັກນ້ອຍຊາຍ, ທາສີຮູບໜ້າກາກເດັກນ້ອຍຍິງ ແລະ ເດັກນ້ອຍຊາຍ, ເປຍເຊືອກຟາງ, ຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບ: ຕາ, ຝາ, ຢາ, ນາ, ງາ, ຂາຕາມແບບໄດ້ຖືກຕ້ອງ.
4. ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ, ອ່ານອອກສຽງຄຳສັບທີ່ມີສະຫຼະ ×າ ໄດ້ຊັດເຈນ.
5. ຫຼິ້ນບົດບາດສົມມຸດເປັນພໍ່-ແມ່ແຕ່ງຕົວໃຫ້ລູກ: ຫວີຜົມ, ມັດຜົມ, ນຸ່ງເຄື່ອງ, ເປັນເອື້ອຍ-ອ້າຍປ້ອນເຂົ້ານ້ອງ, ແຕ່ງກາຍທາແປ້ງ, ເປັນນາຍຄູສອນນັກຮຽນຢ່າງມ່ວນຊື່ນ.
6. ລຽນລຳດັບຮູບພາບເດັກນ້ອຍສູງ-ຕ່ຳ ແລະ ຈັບຄູ່ທີ່ຄືກັນຮູບພາບໃບໜ້າໄດ້ຖືກຕ້ອງ.
7. ບອກຊື່ອະໄວຍະວະທີ່ຢູ່ໃບໜ້າ: ໜ້າຜາກ, ຄິ້ວ, ດັງ, ປາກ, ແກ້ມ, ຄາງ, ຫູ, ທອງລົດເຊັດໜ້າໃຫ້ຕຸກກະຕາໄດ້ຄ່ອງແຄ້ວ.
8. ເກັບມ້ຽນເຄື່ອງຫຼິ້ນໄວເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.
9. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.
10. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.
11. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.
12. ມີມາລະຍາດໃນການອ່ານ ແລະ ຫຼິ້ນຮ່ວມກັບໝູ່ເພື່ອນ.



# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມທີ່ນາຍຄູອອກແບບປະກອບບົດເພງ ເຈົ້າຊື່ຫຍັງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດເພງໄດ້ຖືກຕ້ອງ.
2. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດເພງ ເຈົ້າຊື່ຫຍັງ.

### III. ສື່ການຮຽນ-ການສອນ

1. ກອງ.
2. ບົດເພງ ເຈົ້າຊື່ຫຍັງ.
3. ທ່າຫັດກາຍະບໍລິຫານລຳຄໍ ແລະ ແຂນ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ເຈົ້າຊື່ຫຍັງ.
2. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຄໍ ແລະ ແຂນ: ທ່າໝູນລຳຄໍ ແລະ ແກວ່ງແຂນ.
3. ໃຫ້ເດັກນ້ອຍເຕັ້ນຊິກແຊັກໄປເບື້ອງຊ້າຍ-ຂວາໃນໄລຍະຍາວ 3 ແມັດ.
4. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດເພງ.
5. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
6. ໃຫ້ເດັກນ້ອຍຢືນເອົາມືກອດເອິກຫຼັບຕາຫາຍໃຈເຂົ້າ-ອອກ.
7. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດເພງ.
8. ສຶກສາອົບຮົມເດັກນ້ອຍກ່ຽວກັບເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດເພງ.
2. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກຳວົງມົນ

## ຫົວຂໍ້: ຊື່ ແລະ ນາມສະກຸນຕົນເອງ ແລະ ໝູ່ເພື່ອນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່, ນາມສະກຸນ, ເພດ, ຮູບຮ່າງລັກສະນະຂອງຕົນເອງ ແລະ ໝູ່ເພື່ອນໄດ້ຖືກຕ້ອງ.
2. ບອກສ່ວນປະກອບຂອງຮ່າງກາຍໄດ້ຖືກຕ້ອງ
3. ປຽບທຽບຄວາມສູງກວ່າ, ຕ່ຳກວ່າ, ສູງເທົ່າກັນ, ຕຸ້ຍຈ່ອຍໄດ້ຖືກຕ້ອງ.
4. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ຊື່, ນາມສະກຸນ, ຮູບຮ່າງລັກສະນະຕົນເອງ, ໝູ່ເພື່ອນ ແລະ ສ່ວນປະກອບຂອງຮ່າງກາຍ:
   - ຊື່ ແລະ ນາມສະກຸນຕົນເອງ ແລະ ໝູ່ເພື່ອນ ທ້າວ..... ເພດຊາຍ; ນາງ.... ເພດຍິງ.
   - ຮູບຮ່າງລັກສະນະ: ຕຸ້ຍ, ຈ່ອຍ, ຕ່ຳ. ສູງ.
   - ຮ່າງກາຍຂອງຄົນເຮົາປະກອບດ້ວຍ 3 ສ່ວນ: ຫົວ, ເລົາຄີງ, ແຂນ ແລະ ຂາ.
2. ການປຽບທຽບຄວາມສູງໂດຍໃຊ້ຄຳວ່າ: ຕ່ຳກວ່າ, ສູງກວ່າ, ສູງເທົ່າກັນ, ຕຸ້ຍຈ່ອຍ.

### III. ສື່ການຮຽນ-ການສອນ

1. ເດັກນ້ອຍຍິງ ແລະ ເດັກນ້ອຍຊາຍຕຸ້ຍຈ່ອຍ, ສູງຕ່ຳ.
2. ໂປສະເຕີຮ່າງກາຍຂອງຄົນ.
3. ບົດເພງ ເຈົ້າຊື່ຫຍັງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ເຈົ້າຊື່ຫຍັງ.
2. ໃຫ້ເດັກນ້ອຍກ່ຽວກັບຊື່, ນາມສະກຸນ, ເພດຮູບຮ່າງ, ໝູ່ເພື່ອນ ແລະ ເດັກນ້ອຍໃນຫ້ອງຮຽນ.
3. ໃຫ້ເດັກນ້ອຍສັງເກດໂປສະເຕີຮ່າງກາຍຂອງຄົນແລ້ວບອກສ່ວນປະກອບ.
4. ໃຫ້ເດັກນ້ອຍສັງເກດເດັກນ້ອຍສອງຄົນທີ່ມີຮູບຮ່າງຈ່ອຍ, ຕຸ້ຍ, ຕ່ຳ, ສູງ ແລ້ວປຽບທຽບ.
5. ໃຫ້ເດັກນ້ອຍເວົ້າຄືນຊື່, ນາມສະກຸນ, ເພດ ແລະ ຮູບຮ່າງຂອງຕົນເອງ, ສ່ວນປະກອບຂອງຮ່າງກາຍ. ແລະ ເວົ້າເປັນຄຳສັບຕາມຮູບພາບພ້ອມກັນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ ແລະ ການໃຊ້ຄຳເວົ້າ ແລະ ສຸພາບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່, ນາມສະກຸນ, ເພດ, ຮູບຮ່າງລັກສະນະຂອງຕົນເອງ ແລະ ໝູ່ເພື່ອນ.
2. ຄວາມຖືກຕ້ອງໃນການບອກສ່ວນປະກອບຂອງຮ່າງກາຍ.
3. ຄວາມຖືກຕ້ອງໃນການປຽບທຽບ: ຕ່ຳກວ່າ. ສູງກວ່າ, ສູງເທົ່າກັນ, ຕຸ້ຍຈ່ອຍ.
4. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ແຕ້ມ ແລະ ທາສີຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບເດັກນ້ອຍຍິງ, ຊາຍໄດ້ຖືກຕ້ອງ.
2. ແຕ້ມຕາມຮອຍຈ້ຳ ແລະ ທາສີຮູບ ພາບເດັກນ້ອຍຍິງ, ຊາຍໄດ້ສະອາດຈົບງາມ ແລະ ຢູ່ໃນຂອບ.
3. ແບ່ງປັນສໍສີໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບເດັກນ້ອຍຍິງ, ຊາຍ.

### III. ສື່ການຮຽນ-ການສອນ

1. ສໍສີທຽນ ຫຼື ສໍສີໄມ້ ແລະ ສໍດຳ.
2. ເຈ້ຍຮູບພາບເດັກນ້ອຍຍິງ ແລະ ເດັກນ້ອຍຊາຍທີ່ຮອຍຈ້ຳ.
3. ເຈ້ຍແບບຮູບພາບເດັກນ້ອຍຍິງ ແລະ ຊາຍທີ່ທາສີແລ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດດີ້ດນິ້ວ, ກຳມື, ແບມື ແລະ ສັ່ນຄໍ່ແຂນ.
2. ໃຫ້ເດັກນ້ອຍສັງເກດຮູບພາບເດັກນ້ອຍຍິງ, ຊາຍ; ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການແຕ້ມ ແລະ ທາສີຮູບພາບ.
3. ນາຍຄູແນະນຳ, ສາທິດວິທີ ແລະ  ຂັ້ນຕອນການແຕ້ມ ແລະ ທາສີຮູບພາບເດັກນ້ອຍຍິງ, ຊາຍ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການແຕ້ມຕາມຮ້ອຍຈ້ຳ ແລະ ທາສີຮູບພາບເດັກນ້ອຍຍິງ, ຊາຍ.
6. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການແບ່ງປັນ ແລະ ເກັບຜົນງານໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບເດັກນ້ອຍຍິງ, ຊາຍ.
2. ຄວາມສະອາດຈົບງາມໃນການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບ.
3. ການແບ່ງປັນສໍສີໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນເຕັ້ນເຂົ້າວົງມົນຕາມສຽງສັນຍານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາໃນການຫຼິ້ນແບບຫຼິ້ນເຕັ້ນເຂົ້າວົງມົນຕາມສຽງສັນຍານໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນເຕັ້ນເຂົ້າວົງມົນຕາມສຽງສັນຍານໄດ້ຖືກຕ້ອງ.
3. ມີສະຕິ ແລະ ມີຄວາມວ່ອງໄວໃນການຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບ ຫຼິ້ນເຕັ້ນເຂົ້າວົງມົນຕາມສຽງສັນຍານ.

### III. ສື່ການຮຽນ-ການສອນ

1. ສໍຂາວ ຫຼື ປູນຂາວ ແລະ ສະກັອດສີ.
2. ໝາກຫວີດ ຫຼື ເຄື່ອງເຄາະຈັງຫວະ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກນ້ອຍລຽນແຖວຊື່, ຢືນເປັນວົງມົນໝູນຄໍ່ຕີນ, ຄໍ່ມື ແລະ ເບັດແອວໄປຂ້າງຊ້າຍ, ຂ້າງຂວາ.
2. ນາຍຄູສະເໜີ ແບບຫຼິ້ນເຕັ້ນເຂົ້າວົງມົນຕາມສຽງສັນຍານ, ສາທິດວິທີຫຼິ້ນ ແລະ ຂັ້ນຕອນໃນການຫຼິ້ນແບບຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນ ເຕັ້ນເຂົ້າວົງມົນຕາມສຽງສັນຍານ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບ ວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບຄວາມລະມັດລະວັງ ມີສະຕິໃນເວລາຫຼິ້ນ.
6. ໃຫ້ເດັກນ້ອຍຍ່າງໄປຊ້າໆ ຕາມສຽງເຄາະຂອງນາຍຄູ, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາໃນການຫຼິ້ນເຕັ້ນເຂົ້າວົງມົນຕາມສຽງສັນຍານ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນເຕັ້ນເຂົ້າວົງມົນຕາມສຽງສັນຍານ.
3. ການມີສະຕິ ແລະ ຄວາມວ່ອງໄວໃນການຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບເດັກນ້ອຍຍິງ ແລະ ຊາຍຫຼິ້ນມ່ວນຊື່ນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຕໍ່ຮູບພາບເດັກນ້ອຍຍິງ ແລະ ຊາຍຫຼິ້ນມ່ວນຊື່ນໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຕໍ່ຮູບພາບເດັກນ້ອຍຍິງ ແລະ ຊາຍຫຼິ້ນມ່ວນຊື່ນ.

### III. ສື່ການຮຽນ-ການສອນ

ແຜ່ນເກມຕໍ່ຮູບພາບເດັກນ້ອຍຍິງ ແລະ ຊາຍຫຼິ້ນມ່ວນຊື່ນ (ສຳລັບນາຍຄູ ແລະ ເດັກນ້ອຍ).

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍ ກ່ຽວກັບຊື່, ນາມສະກຸນ ແລະ ເພດ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມ ແລະ ຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຕໍ່ຮູບພາບເດັກນ້ອຍຍິງ ແລະ ຊາຍຫຼິ້ນມ່ວນຊື່ນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຕໍ່ຮູບພາບເດັກນ້ອຍຍິງ ແລະ ຊາຍຫຼິ້ນມ່ວນຊື່ນ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ມຸມ ແລະ ຊື່ເຄື່ອງຫຼິ້ນຕາມມຸມ.
2. ຕໍ່ບ໋ອກເປັນຮູບຄືນຕາມແບບໄດ້ຖືກຕ້ອງ ແລະ ຕໍ່ບ໋ອກຕາມຈິນຕະນາການຂອງເດັກນ້ອຍຢ່າງມ່ວນຊື່ນ.
3. ແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບໄດ້ຖືກຕ້ອງ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ຊື່ມຸມ, ຊື່ເຄື່ອງຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
2. ການຕໍ່ບ໋ອກຮູບວົງມົນ, ສີ່ແຈ, ຈະຕຸລັດ, ທໍ່ກົມ, ສາມແຈເປັນຮູບຄືນຕາມແບບ ແລະ ສ້າງແບບຮູບຕາມຄວາມຄິດຂອງເດັກ.
3. ການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບເດັກນ້ອຍຍິງ ແລະ ຊາຍ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ບ໋ອກຮູບວົງມົນ, ສີ່ແຈ, ຈະຕຸລັດ, ທໍ່ກົມ ແລະ ສາມແຈ.
2. ມຸມສິລະປະສ້າງສັນ: ຊາມນ້ຳລ້າງມື, ສະບູ, ຜ້າເຊັດມື, ເຈ້ຍຮູບພາບເດັກນ້ອຍຍິງ ແລະ ເດັກນ້ອຍຊາຍ, ສໍດຳ, ຢາງລຶບ, ສໍສີໄມ້ ຫຼື ສີທຽນ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ ແລະ ຊື່ເຄື່ອງຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການຕໍ່ບ໋ອກເປັນຮູບຄືນຕາມແບບ ແລະ ຄວາມມ່ວນຊື່ນໃນການຕໍ່ບ໋ອກຕາມຈິນຕະນາການຂອງເດັກນ້ອຍ.
3. ຄວາມຖືກຕ້ອງໃນການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມນາຍຄູແນະນຳ: ເອົາມືແຕະຫົວ, ບ່າໄຫຼ່, ແຂນ ແລະ ແອວ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານມື ແລະ ແຂນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານມື ແລະ ແຂນ: ທ່າໝູນນິ້ວມື ແລະ ທ່າແກວ່ງແຂນ.
2. ໃຫ້ເດັກນ້ອຍເຕັ້ນໄປໜ້າ ແລະ ຫຼັງຕາມສຽງເຄາະ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງກັບພື້ນຄູ້ຂາເອົາມືທັງສອງຄ້ຳພື້ນທາງຫຼັງ, ພ້ອມທັງສັ່ນຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
2. ຄວາມຕັ້ງໃຈໃນການຟັງຄຳສັ່ງຂອງນາຍຄູ.

# ກິດຈະກຳວົງມົນ

## ຫົວຂໍ້: ຫົວຂອງຄົນເຮົາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກສ່ວນປະກອບຂອງຫົວ ແລະ ໃບໜ້າໄດ້ຖືກຕ້ອງ.
2. ບອກລັກສະນະ, ສີ, ຂະໜາດຂອງຜົມຕົນເອງ ແລະ ໝູ່ເພື່ອນໄດ້ຖືກຕ້ອງ.
3. ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ສ່ວນປະກອບຂອງຫົວ, ໃບໜ້າ ແລະ ລັກສະນະຂອງຜົມ:

- ສ່ວນປະກອບຂອງຫົວມີ ໃບໜ້າ ແລະ ຜົມ; ສີຂອງຜົມ: ສີດຳ, ສີທອງ; ຂະໜາດຂອງຜົມ: ຜົມສັ້ນ, ຜົມຍາວ.
- ສ່ວນປະກອບຂອງໃບໜ້າມີ ຕາ, ຫູ, ປາກ, ດັງ, ໜ້າຜາກ, ຄິ້ວ, ແກ້ມ, ຄາງ, ຄໍ.
- ລັກສະນະຂອງຜົມຕົນເອງ ແລະ ໝູ່ເພື່ອນ: ຜົມກູດ, ຜົມຊີ່.

2. ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ: ຫູ (ຫ), ຕາ (ຕ), ດັງ (ດ), ຜົມ (ຜ).

### III. ສື່ການຮຽນ-ການສອນ

1. ເດັກນ້ອຍຍິງ ແລະ ເດັກນ້ອຍຊາຍຜົມກູດ, ຜົມຊີ່ ຫຼື ຮູບພາບ.
2. ໂປສະເຕີຮ່າງກາຍຂອງຄົນ.
3. ບັດຄຳສັບ: ຕາ, ດັງ, ຜົມ, ຫູ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບສ່ວນປະກອບຂອງຮ່າງກາຍ.
2. ໃຫ້ເດັກນ້ອຍສັງເກດໂປສະເຕີຮ່າງກາຍຂອງຄົນແລ້ວບອກສ່ວນປະກອບຂອງຫົວ ແລະ ໃບໜ້າ.
3. ໃຫ້ເດັກນ້ອຍສັງເກດໝູ່ເພື່ອນສອງຄົນທີ່ມີຜົມກູດ, ຜົມຊີ່ແລ້ວບອກລັກສະນະສີ, ຂະໜາດຜົມຂອງໝູ່ ແລະ ຕົນເອງ.
4. ໃຫ້ເດັກນ້ອຍອ່ານພະຍັນຊະນະຕົ້ນຕາມຄຳສັບ ແລະ ຄູຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນສ່ວນປະກອບຂອງຫົວ, ໃບໜ້າ, ລັກສະນະຂອງຜົມ ແລະ ອ່ານພະຍັນຊະນະຕົ້ນຕາມຄຳສັບພ້ອມກັນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີຮັກແພງກັນ, ການອະນາໄມຫົວ ແລະ ໃບໜ້າ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກສ່ວນປະກອບຂອງຫົວ ແລະ ໃບໜ້າ.
2. ຄວາມຖືກຕ້ອງໃນການບອກລັກສະນະສີ, ຂະໜາດຜົມຂອງຕົນເອງ ແລະ ໝູ່ເພື່ອນ.
3. ຄວາມຊັດເຈນໃນການອ່ານອອກສຽງພະຍັນຊະນະຕົ້ນຄຳສັບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ພົ່ນສີໃສ່ໜ້າກາກຄົນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການພົ່ນສີໃສ່ໜ້າຄົນໄດ້ຖືກຕ້ອງ.
2. ພົ່ນສີໃສ່ໜ້າກາກຄົນໄດ້ສະອາດຈົບງາມ.
3. ເຝິກໃຫ້ເດັກນ້ອຍມີຄວາມລະມັດລະວັງໃນການພົ່ນສີ.

### II. ເນື້ອໃນຕົ້ນຕໍ

ການພົ່ນສີໃສ່ໜ້າກາກຄົນ.

### III. ສື່ການຮຽນ-ການສອນ

1. ສີນ້ຳ, ແປງຖູແຂ້ວ ແລະ ຕານ່າງເຫຼັກ.
2. ເຈ້ຍໜ້າກາກຄົນ.
3. ເຈ້ຍແບບຮູບໜ້າກາກທີ່ພົ່ນສີແລ້ວ.
4. ຊາມນ້ຳ, ສະບູ ແລະ ຜ້າເຊັດມື.
5. ບົດເພງ ຮ່າງກາຍຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ບົດເພງຮ່າງກາຍຂອງຂ້ອຍ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດໜ້າກາກຄົນ, ສົນທະນາ ແລະ ບອກຂັ້ນຕອນການພົ່ນສີ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນຂອງການພົ່ນສີໃສ່ໜ້າກາກຄົນ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການພົ່ນສີໃສ່ຮູບພາບໜ້າກາກຄົນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການຮັກສາຄວາມສະອາດມື ແລະ ເກັບຜົນງານໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການພົ່ນສີໃສ່ໜ້າການຄົນ.
2. ຄວາມສະອາດຈົບງາມໃນການພົ່ນສີໃສ່ໜ້າກາກຄົນ.
3. ຄວາມລະມັດລະວັງໃນການພົ່ນສີ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແລ່ນໄລ່ຊ້ອນ

### I. ຈຸດປະສົງ

ໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແລ່ນໄລ່ຊ້ອນໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແລ່ນໄລ່ຊ້ອນໄດ້ຖືກຕ້ອງ.
3. ມີຄວາມປອດໄພໃນເວລາຫຼິ້ນແບບຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແລ່ນໄລ່ຊ້ອນ.

### III. ສື່ການຮຽນ-ການສອນ.

1. ຕົວເດັກ.
2. ໝາກຫວິດ ຫຼື ເຄື່ອງເຄາະຈັງຫວະ.
3. ແບບຫຼິ້ນແລ່ນໄລ່ຊ້ອນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຢືນລຽນແຖວເປັນສອງແຖວເຮັດທ່າທາງຕັກນ້ຳອາບ, ຖູແຂ້ວ, ຖູສະບູ ແລະ ເຊັດຕົວ.
2. ນາຍຄູສະເໜີ ແບບຫຼິ້ນ ແລ່ນໄລ່ຊ້ອນ, ສາທິດວິທີຫຼິ້ນ ແລະ ຂັ້ນຕອນໃນການຫຼິ້ນແບບຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແລ່ນໄລ່ຊ້ອນ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ ແລະ ຄວາມປອດໄພ.
6. ໃຫ້ເດັກນ້ອຍເຄື່ອນໄຫວໄປຊ້າໆຕາມບໍລິເວນເດີ່ນ, ຫຼັງຈາກນັ້ນ ໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາໃນການຫຼິ້ນແລ່ນໄລ່ຊ້ອນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແລ່ນໄລ່ຊ້ອນ.
3. ຄວາມປອດໄພໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຮູບພາບເດັກນ້ອຍຍິງ ແລະ ຊາຍສູງຕ່ຳ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ເກມລຽນລຳດັບຮູບພາບເດັກນ້ອຍຍິງ ແລະ ຊາຍສູງ-ຕ່ຳໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການລຽນລຳດັບຮູບພາບເດັກນ້ອຍຍິງ ແລະ ຊາຍສູງ-ຕ່ຳ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມລຽນລຳດັບຮູບພາບເດັກນ້ອຍຍິງ ແລະ ຊາຍສູງ-ຕ່ຳ.
2. ແຜ່ນເກມເກົ່າ ເກມຕໍ່ຮູບພາບເດັກນ້ອຍຍິງ ແລະ ຊາຍຫຼິ້ນມ່ວນຊື່ນ (ສຳລັບນາຍຄູ ແລະ ເດັກນ້ອຍ).

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍ ກ່ຽວກັບສ່ວນປະກອບຂອງຮ່າງກາຍ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມລຽນລຳດັບຮູບພາບເດັກນ້ອຍຍິງ ແລະ ຊາຍສູງ-ຕ່ຳ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການລຽນລຳດັບຮູບພາບເດັກນ້ອຍຍິງ ແລະ ຊາຍສູງ-ຕ່ຳ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກໍາການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ມຸມ ແລະ ຊື່ເຄື່ອງຫຼິ້ນຕາມມຸມ.
2. ທາສີຮູບໜ້າກາກເດັກນ້ອຍຍິງ ແລະ ເດັກນ້ອຍຊາຍໄດ້ຖືກຕ້ອງ.
3. ອ່ານອອກສຽງພະຍັນຊະນະຕົ້ນຕາມຄໍາສັບ ແລະ ອ່ານອອກສຽງຄໍາສັບທີ່ມີສະຫຼະ ×າ ໄດ້ຊັດເຈນ.
4. ມີມາລະຍາດໃນການອ່ານ ແລະ ຫຼິ້ນຮ່ວມກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ຊື່ມຸມ, ຊື່ເຄື່ອງຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
2. ການພົ່ນສີໃສ່ໜ້າກາກຄົນ, ແຕ້ມຮູບເດັກນ້ອຍຍິງ ແລະ ເດັກນ້ອຍຊາຍ.
3. ການສັງເກດ ແລະ ການອ່ານອອກສຽງພະຍັນຊະນະຕົ້ນຕາມຄໍາສັບ: ຫູ (ຫ), ຕາ (ຕ), ດັງ (ດ), ຜົມ (ຜ), ການອ່ານອອກສຽງຄໍາສັບທີ່ມີສະຫຼະ ×າ: ຕາ, ຝາ, ຢາ, ນາ, ງາ, ຂາ.

### III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ໜ້າກາກຄົນ, ແປງຖູແຂ້ວ, ຕາໜ່າງ, ຮູບພາບເດັກນ້ອຍຍິງ ແລະ ເດັກນ້ອຍຊາຍ; ສີນໍ້າ, ສໍດໍາ, ຢາງລຶບ, ສໍສີໄມ້ ຫຼື ສີທຽນ, ຊາມນໍ້າ, ສະບູ ແລະ ຜ້າເຊັດມື.
2. ມຸມອ່ານ: ບັດຄໍາສັບ ຫູ, ຕາ, ດັງ, ຜົມ; ບັດພະຍັນຊະນະ: ຫ, ຕ, ດ, ຜ; ບັດຄໍາສັບ: ຕາ, ຝາ, ຢາ, ນາ, ງາ, ຂາ, ບັດພະຍັນຊະນະ: ຕ, ຝ, ຢ, ນ, ງ, ຂ, ບັດສະຫຼະ ×າ; ກະດານສຽບ ຫຼື ຕິດ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກໍາການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ມຸມ ແລະ ຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນໍາວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນໍາ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບມາລະຍາດໃນການອ່ານ ແລະ ຫຼິ້ນຮ່ວມກັບໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ ແລະ ຊື່ເຄື່ອງຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການພົ່ນສີໃສ່ໜ້າກາກຄົນ ແລະ ແຕ້ມຮູບພາບ.
3. ຄວາມຊັດເຈນໃນການອ່ານອອກສຽງພະຍັນຊະນະຕົ້ນຕາມຄໍາສັບ ແລະ ອ່ານອອກສຽງຄໍາສັບທີ່ມີສະຫຼະ ×າ.
4. ການມີມາລະຍາດໃນການອ່ານ ແລະ ຫຼິ້ນຮ່ວມກັບໝູ່ເພື່ອນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຮຽນແບບກັບເງົາແວ່ນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຮຽນແບບກັບເງົາ ແວ່ນໄດ້ຖືກຕ້ອງ.
2. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຮຽນແບບກັບເງົາແວ່ນ: ຄົນໜຶ່ງເປັນແວ່ນ, ຄົນໜຶ່ງເປັນຄົນແຍງແວ່ນຫວີຜົມ ແລະ ມັດຜົມ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານລຳຄໍ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຄໍ ແລະ ຂາ: ທ່າຫງຽງລຳຄໍ ແລະ ໂຢ່ງໂຢະຂາ.
2. ໃຫ້ເດັກນ້ອຍແລ່ນຊິກແຊັກ ໄລຍະ 10 ແມັດ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຮຽນແບບກັບເງົາແວ່ນ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຢືນເຮັດທ່າທາງຈັບດອກໄມ້ມາດົມ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຮຽນແບບກັບເງົາແວ່ນ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງຮຽນແບບກັບເງົາແວ່ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຮຽນແບບກັບເງົາແວ່ນ.
2. ການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ຜົມ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຄຸນປະໂຫຍດ ແລະ ການບົວລະບັດຮັກສາຜົມໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງໃນການບົວລະບັດຮັກສາຜົມ (ເຝິກປະຕິບັດຕົວຈິງຫວີຜົມ, ເປຍຜົມ, ມັດຜົມ).
3. ເວົ້າເປັນຄຳສັບ ແລະ ປະໂຫຍກຕາມຮູບພາບຕາມຄູໄດ້ຊັດເຈນ.
4. ແບ່ງປັນເຄື່ອງໃຊ້ໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ການບົວລະບັດຮັກສາຜົມ ແລະ ຄຸນປະໂຫຍດ:
- ການບົວລະບັດຮັກສາຜົມ: ສະຜົມ, ຕັດຜົມ, ຫວີຜົມ, ມັດຜົມ ຫຼື ເປຍຜົມ (ເຝິກປະຕິບັດ).
- ຄຸນປະໂຫຍດຂອງຜົມ: ປົກຫຸ້ມໜັງຫົວ, ເຮັດໃຫ້ໃບໜ້າປ່ຽນແປງ ແລະ ສວຍງາມ.

2. ເວົ້າຄຳສັບ ແລະ ເວົ້າເປັນປະໂຫຍກຕາມຮູບພາບ:
- ຄຳສັບ: ສະຜົມ, ເປຍຜົມ, ຫວີຜົມ, ມັດຜົມ.
- ປະໂຫຍກ: ຜົມປົກຫຸ້ມໜັງຫົວ, ຂ້ອຍສະຜົມໃຫ້ສະອາດ, ລາວເປຍຜົມເປັນລະບຽບ, ລາວຕັດຜົມໃຫ້ສັ້ນ.

### III. ສື່ການຮຽນ-ການສອນ

1. ຫວີ, ຢາງມັດຜົມ.
2. ຮູບພາບ: ຫົວຄົນມີຜົມ, ເດັກນ້ອຍສະຜົມ, ເດັກນ້ອຍຫວີຜົມ, ເດັກນ້ອຍເປຍຜົມ, ເດັກນ້ອຍມັດຜົມ, ຄົນຕັດຜົມໃຫ້ເດັກນ້ອຍ.

### IV. ກິດຈະກຳການຮຽນ - ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບສ່ວນປະກອບຂອງຫົວ.
2. ໃຫ້ເດັກນ້ອຍບອກກ່ຽວກັບການບົວລະບັດຮັກສາຜົມ ແລະ ຄຸນປະໂຫຍດຂອງຜົມ.
3. ໃຫ້ເດັກນ້ອຍປະຕິບັດຕົວຈິງໃນການຫວີຜົມ, ມັດຜົມ ຫຼື ເປຍຜົມ.
4. ໃຫ້ເດັກນ້ອຍເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
5. ໃຫ້ເດັກນ້ອຍເວົ້າຄືນການບົວລະບັດຮັກສາຜົມ ແລະ ຄຸນປະໂຫຍດຂອງຜົມ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການບົວລະບັດຮັກສາຜົມ ແລະ ການແບ່ງປັນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການບົວລະບັດຮັກສາຜົມ ແລະ ຄຸນປະ ໂຫຍດຂອງຜົມ.
2. ການການປະຕິບັດຕົວຈິງໃນການບົວລະບັດຮັກສາຜົມ.
3. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
4. ການແບ່ງປັນເຄື່ອງໃຊ້ໃຫ້ໝູ່ເພື່ອນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ເປຍເຊືອກຟາງ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກກຂັ້ນຕອນການເປຍເຊືອກຟາງຕາມແບບໄດ້ຖືກຕ້ອງ.
2 ເປຍເຊືອກຟາງໄດ້ຈົບງາມ.
3. ມີຄວາມອົດທົນໃນການເປຍເຊືອກຟາງຕາມແບບ.

## II. ເນື້ອໃນຕົ້ນຕໍ

ການເປຍເຊືອກຟາງຕາມແບບ.

## III. ສື່ການຮຽນ-ການສອນ

1. ເຊືອກຟາງ.
2. ແບບເຊືອກຟາງທີ່ເປຍແລ້ວ ແລະ ເຊືອກສຳລັບມັດ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍ ບີບນວດອົ້ງມື, ດຶງນິ້ວມື ແລະ ດີດນິ້ວມື.
2. ໃຫ້ເດັກນ້ອຍສັງເກດເຊືອກຟາງທີ່ເປຍແລ້ວ, ສົນທະນາ ແລະ ບອກຂັ້ນຕອນຕອນເປຍເຊືອກຟາງ ຕາມແບບ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການເປຍເຊືອກຟາງຕາມແບບ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການເປຍເຊືອກຟາງຕາມແບບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການຮັກສາຄວາມສະອາດມື ແລະ ເກັບຜົນງານໄວ້.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການເປຍເຊືອກຟາງຕາມແບບ.
2. ຄວາມຈົບງາມໃນການເປຍເຊືອກຟາງຕາມແບບ.
3. ຄວາມອົດທົນໃນການເປຍເຊືອກຟາງຕາມແບບ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ຫຼິ້ນຜອງຊາຍໃສ່ກະປ໋ອງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນຜອງຊາຍໃສ່ກະປອງໄດ້ຖືກຕ້ອງ.
2. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງໃນການຜອງຊາຍ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນດິນຊາຍ: ຫຼິ້ນຜອງຊາຍໃສ່ກະປ໋ອງ.

### III. ສື່ການຮຽນ-ການສອນ

1. ຄຸນໍ້າ, ໂອ ແລະ ຊາມ.
2. ຜ້າເຊັດມື.
3. ກະປ໋ອງ, ຊວ້ານນ້ອຍ ແລະ ອ່າງດິນຊາຍ.
4. ວິທີຫຼິ້ນຜອງຊາຍໃສ່ກະປ໋ອງ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍລຽນແຖວຊື່ເປັນສອງແຖວຕັ້ງ ແລ້ວ ຍົກມືຂຶ້ນສູງກາຍຫົວ ແລ້ວແກ່ວງໄປແກ່ວງມາ.
2. ນາຍຄູສະເໜີ ແບບຫຼິ້ນດິນຊາຍ: ຫຼິ້ນຜອງຊາຍ ໃສ່ກະປ໋ອງ, ສາທິດວິທີຫຼິ້ນ ແລະ ຂັ້ນຕອນໃນການຫຼິ້ນແບບຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນຜອງຊາຍໃສ່ກະປ໋ອງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບໃນເວລາຫຼິ້ນບໍ່ໃຫ້ເອົາຊາຍຫວ່ານໃສ່ກັນ, ຫຼິ້ນແລ້ວໃຫ້ລ້າງຕີນ-ມືໃຫ້ສະອາດ ແລະ ເກັບມ້ຽນອຸປະກອນຊ່ວຍກັນ.
6. ໃຫ້ເດັກນ້ອຍເຮັດທ່າທາງລູບຊາຍອອກຈາກແຂນ, ລຳຕົວ ແລະ ຂາຊ້າໆ, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນຜອງຊາຍໃສ່ກະປ໋ອງ.
2. ຄວາມແຂງແຮງຂອງກ້າມຊີ້ນມືໃນເວລາຫຼິ້ນ.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຮູບພາບເດັກນ້ອຍສະຜົມ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ລຽນລຳດັບຮູບພາບເດັກນ້ອຍສະຜົມໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການລຽນລຳດັບຮູບພາບເດັກນ້ອຍສະຜົມ: ເອົາຢາສະຫົວ (ແຊມພູ) ໃສ່ເທິງຝາມືຂອງຕົນເອງ, ເອົາປາຍນິ້ວມືນວນໜັງຫົວ, ລ້າງຢາສະຜົມດ້ວຍນ້ຳສະອາດ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມລຽນລຳດັບຮູບພາບເດັກນ້ອຍສະຜົມ: ເອົາຢາສະຫົວ (ແຊມພູ) ໃສ່ເທິງຝາມືຂອງຕົນເອງ, ເອົາປາຍນິ້ວມືນວນໜັງຫົວ, ລ້າງຢາສະຜົມດ້ວຍນ້ຳສະອາດ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມລຽນລຳດັບຮູບພາບເດັກນ້ອຍຍິງ ແລະ ຊາຍສູງ-ຕ່ຳ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການປົວລະບັດຮັກສາຜົມ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມລຽນລຳດັບຮູບພາບເດັກນ້ອຍສະຜົມ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການລຽນລຳດັບຮູບພາບເດັກນ້ອຍສະຜົມ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ມຸມ ແລະ ຊື່ເຄື່ອງຫຼິ້ນຕາມມຸມ.
2. ຫຼິ້ນບົດບາດສົມມຸດເປັນພໍ່, ແມ່ ແລະ ລູກຢ່າງມ່ວນຊື່ນ.
3. ທາສີໃສ່ຮູບໜ້າກາກເດັກນ້ອຍຍິງ ແລະ ເດັກນ້ອຍຊາຍໄດ້ຖືກຕ້ອງ.
4. ເວົ້າຄຳສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ມຸມ, ຊື່ເຄື່ອງຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
2. ການຫຼິ້ນສົມມຸດເປັນພໍ່ ແມ່ ແຕ່ງຕົວໃຫ້ລູກຫວີຜົມ, ມັດຜົມ ແລະ ນຸ່ງເຄື່ອງ; ເປັນເອື້ອຍ, ອ້າຍປ້ອນເຂົ້ານ້ອງ.
3. ການທາສີໃສ່ຮູບໜ້າກາກເດັກນ້ອຍຍິງ ແລະ ເດັກນ້ອຍຊາຍ.

### III. ສື່ການຮຽນ-ການສອນ.

1. ມຸມບົດບາດສົມມຸດ: ຕຸກກະຕາ, ເຄື່ອງຫຼິ້ນເຮືອນນ້ອຍຈຳລອງ, ຫວີ, ຢາງມັດຜົມ, ເຄື່ອງນຸ່ງ.
2. ມຸມສິລະປະສ້າງສັນ: ສີນ້ຳ, ຮູບໜ້າກາກເດັກນ້ອຍຍິງ ແລະ ເດັກນ້ອຍຊາຍ, ສໍສີ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການບອກຊື່ມຸມ ແລະ ຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອເດັກ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳສຸພາບກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ ແລະ ຊື່ເຄື່ອງຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນພໍ່, ແມ່ ແລະ ລູກ.
3. ຄວາມຖືກຕ້ອງໃນການທາສີໃສ່ຮູບໜ້າກາກເດັກນ້ອຍຍິງ ແລະ ເດັກນ້ອຍຊາຍ.
4. ການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມນາຍຄູແນະນຳ: ລ້າງໜ້າ, ເຊັດໜ້າ ແລະ ທາແປ້ງ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານແຂນ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານທ່າຫາຍໃຈ (ແຂນ) ແລະ ຂາ: ທ່າຍົກແຂນ ແລະ ທ່າຢຽດຂາ.
2. ໃຫ້ເດັກນ້ອຍເຕັ້ນໄປທາງໜ້າ ແລະ ຫຼັງຕາມສຽງເຄາະ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນອນຫງາຍຫຼັບຕາວາແຂນອອກພ້ອມທັງຈ່າງຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ກົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
2. ຄວາມຕັ້ງໃຈໃນການຟັງຄຳສັ່ງຂອງນາຍຄູ.

# ກິດຈະກຳວົງມົນ

## ຫົວຂໍ້: ການບົວລະບັດຮັກສາໃບໜ້າ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງໃຊ້ໃນການລ້າງໜ້າໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງວິທີການລ້າງໜ້າ, ເຊັດໜ້າ ແລະ ທາແປ້ງ.
3. ເລົ່າຄຳຄ່ອງ, ເວົ້າຄຳສັບຕາມຄຳຄ່ອງໄດ້ຊັດເຈນ.
4. ເວົ້າອອກສຽງຄຳສັບທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ເຄື່ອງໃຊ້ໃນການລ້າງໜ້າ, ເຊັດໜ້າ, ວິທີລ້າງໜ້າ ແລະ ທາແປ້ງ:

- ເຄື່ອງໃຊ້: ນ້ຳ, ສະບູ, ຜ້າເຊັດໜ້າ, ໂອ; ວິທີການລ້າງໜ້າ: ເອົານ້ຳລ້າງໃສ່ໜ້າ, ເອົາສະບູທາໃສ່ໜ້າ, ລູບໃບໜ້າໃຫ້ທົ່ວທຸກບ່ອນຄ່ອຍໆ ແລ້ວຈິ່ງລ້າງໃຫ້ສະອາດ (ລະວັງບໍ່ໃຫ້ນ້ຳສະບູເຂົ້າຕາ).
- ວິທີການເຊັດໜ້າ: ພາຍຫຼັງລ້າງໜ້າໃຫ້ສະອາດແລ້ວເຊັດໜ້າໃຫ້ແຫ້ງທົ່ວທຸກບ່ອນຂອງໃບໜ້າ.
- ວິທີການທາແປ້ງ: ຖອກແປ້ງໃສ່ມືແລ້ວທາໃສ່ໃບໜ້າໃຫ້ທົ່ວ.

2. ການເລົ່າຄຳຄ່ອງ ໃບໜ້າສະອາດ, ເວົ້າຄຳສັບຕາມເນື້ອໃນຄຳຄ່ອງ: ຜ້າເຊັດໜ້າ, ສະບູ, ໂອ, ນ້ຳ, ເຊັດໜ້າ, ຕັກນ້ຳ.
3. ການເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນ: ຂາ, ຂ່າ; ຜາ, ຜ້າ; ກາ, ກ້າ.

### III. ສື່ການຮຽນ-ການສອນ

1. ໂອ, ສະບູ, ຜ້າເຊັດໜ້າ, ນ້ຳສະອາດ, ແປ້ງເດັກນ້ອຍ ແລະ ຮູບພາບ: ຂາ, ຂ່າ; ຜາ, ຜ້າ; ກາ, ກ້າ.
2. ບົດຄຳຄ່ອງ ໃບໜ້າສະອາດ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການບົວລະບັດຮັກສາຜົມ.
2. ໃຫ້ເດັກນ້ອຍສັງເກດ ໂອ, ສະບູ, ຜ້າເຊັດໜ້າ, ນ້ຳສະອາດ, ຄູສົນທະນາກ່ຽວກັບເຄື່ອງໃຊ້ໃນການລ້າງໜ້າ.
3. ໃຫ້ເດັກນ້ອຍເລົ່າຄຳຄ່ອງ, ຄູເວົ້າຄຳສັບຕາມຄຳຄ່ອງ.
4. ໃຫ້ເດັກນ້ອຍເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບ.
5. ໃຫ້ເດັກນ້ອຍປະຕິບັດຕົວຈິງໃນການລ້າງໜ້າ, ເຊັດໜ້າ ແລະ ທາແປ້ງ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການບົວລະບັດຮັກສາໃບໜ້າ ແລະ ການເກັບຮັກສາເຄື່ອງໃຊ້ໃນການລ້າງໜ້າ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເຄື່ອງໃຊ້ໃນການລ້າງໜ້າ.
2. ການປະຕິບັດຕົວຈິງວິທີການລ້າງໜ້າ, ເຊັດໜ້າ ແລະ ທາແປ້ງ.
3. ຄວາມຖືກຕ້ອງໃນການເລົ່າຄຳຄ່ອງ, ເວົ້າຄຳສັບຕາມເນື້ອໃນຄຳຄ່ອງ.
4. ຄວາມຊັດເຈນໃນການເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບຕາມຮອຍຈ້ຳ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຂີດຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບໄດ້ຖືກຕ້ອງ.
2. ຂີດຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບໄດ້ສະອາດຈົບງາມ.
3. ມີຄວາມອົດທົນໃນການຂີດຂຽນສະຫະ ×າ ທີ່ມີຢູ່ໃນຄຳສັບ.

## II. ເນື້ອໃນຕົ້ນຕໍ

ການຂີດຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບ: ຕາ, ຝາ, ຢາ, ນາ, ງາ, ຂາ ຕາມຮອຍຈ້ຳ.

## III. ສື່ການຮຽນ-ການສອນ

1. ສໍດຳ, ຢາງລຶບ.
2. ປື້ມບົດຝຶກຫັດພາສາລາວເຫຼັ້ມທີ 1 ຫຼື ເຈ້ຍຂີດຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບທີ່ມີຮອຍຈ້ຳ.
3. ເຈ້ຍ ×າ ທີ່ມີຢູ່ໃນຄຳສັບ: ຕາ, ຝາ, ຢາ, ນາ, ງາ, ຂາ  ທີ່ຂຽນແລ້ວ.
4. ບົດຄຳຄ່ອງ ໃບໜ້າສະອາດ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ໃບໜ້າສະອາດ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດສະຫຼະ ×າ ທີ່ມີຢູ່ໃນຄຳສັບແລ້ວອ່ານຄຳສັບ, ສົນທະນາ ແລະ ບອກຂັ້ນຕອນການຂີດຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຂີດຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບ: ຕາ, ຝາ, ຢາ, ນາ, ງາ, ຂາ ຕາມຮອຍຈ້ຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ຂັ້ນຕອນການຂີດຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບຕາມຮອຍຈ້ຳ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມການຮັກສາຄວາມສະອາດມື ແລະ ເກັບຜົນງານໄວ້.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຂີດຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບ.
2. ຄວາມສະອາດຈົບງາມໃນການຂີດຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບ.
3. ຄວາມອົດທົນຂອງໃນການຂີດຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນເຊືອງຕຸກກະຕາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນເຊືອງຕຸກກະຕາໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນເຊືອງຕຸກກະຕາໄດ້ຖືກຕ້ອງ.
3. ມີຄວາມເບີກບານມ່ວນຊື່ນ ແລະ ມີສະຕິໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນເຊືອງຕຸກກະຕາ.

### III. ສື່ການຮຽນ-ການສອນ

1. ຜ້າ.
2. ຄຳຄ່ອງ. ເຊືອງຕຸກກະຕາ, ໃບໜ້າສະອາດ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ໃບໜ້າສະອາດປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນເຊືອງຕຸກກະຕາ, ສາທິດວິທີຫຼິ້ນ ແລະ ຂັ້ນຕອນໃນການຫຼິ້ນແບບຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນເຊືອງຕຸກກະຕາ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບເວລາຫຼິ້ນໃຫ້ລະວັງບໍ່ແລ່ນຕຳກັນ, ຫຼິ້ນແລ້ວຊ່ວຍກັນເກັບມ້ຽນອຸປະກອນ.
6. ໃຫ້ເດັກນ້ອຍເອົາມືສອງເບື້ອງຍົກຂຶ້ນກາຍຫົວເຮັດທ່າທາງພັດໄປມາຊ້າໆ, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ.

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນເຊືອງຕຸກກະຕາ.
2. ຄວາມຖືກຕ້ອງໃນເວລາຫຼິ້ນແບບຫຼິ້ນເຊືອງຕຸກກະຕາ.
3. ຄວາມເບີກບານມ່ວນຊື່ນ ແລະ ມີສະຕິໃນເວລາຫຼິ້ນເຊືອງຕຸກກະຕາ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບໃບໜ້າ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບໃບໜ້າໄດ້ຖືກຕ້ອງ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການເກມຈັບຄູ່ທີ່ຄືກັນຮູບພາບໃບໜ້າທຳມະດາ, ຍິ້ມ, ຮ້ອງໄຫ້.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບໃບໜ້າທຳມະດາ, ຍິ້ມ, ຮ້ອງໄຫ້ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມລຽນລຳດັບຮູບພາບເດັກນ້ອຍສະຜົມ.
3. ບົດຄຳຄ່ອງ ໃບໜ້າສະອາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ໃບໜ້າສະອາດ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ເກມຈັບຄູ່ທີ່ຄືກັນຮູບພາບໃບໜ້າ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບໃບໜ້າ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ມຸມ ແລະ ຊື່ເຄື່ອງຫຼິ້ນຕາມມຸມ.
2. ຫຼິ້ນບົດບາດສົມມຸດແຕ່ງກາຍ, ເປັນນາຍຄູ ແລະ ນັກຮຽນຢ່າງມ່ວນຊື່ນ.
3. ຂີດຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບ ແລະ ເປຍເຊືອກຟາງໄດ້ຖືກຕ້ອງ.
4. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ມຸມ ແລະ ຊື່ເຄື່ອງຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
2. ການຫຼິ້ນສົມມຸດແຕ່ງກາຍທາແປ້ງ, ຫວີຜົມ, ມັດຜົມ ແລະ ເປັນນາຍຄູສອນນັກຮຽນ.
3. ການຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບ: ຕາ, ຝາ ຢາ, ນາ, ງາ, ຂາ ແລະ ເປຍເຊືອກຟາງ.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ແປ້ງ, ຫວີ, ຢາງມັດຜົມ.
2. ມຸມສິລະປະສ້າງສັນ: ເຈ້ຍສະຫຼະ ×າ ທີ່ມີຢູ່ໃນຄຳສັບ ຕາ, ຝາ ຢາ, ນາ, ງາ, ຂາ ເຊືອກຟາງ ແລະ ສໍດຳ.
3. ບົດຄຳຄ່ອງ ໃບໜ້າສະອາດ; ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ໃບໜ້າສະອາດປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກນ້ອຍ ກ່ຽວກັບຊື່ມຸມ: ຊື່ເຄື່ອງຫຼິ້ນໃນມຸມ ແລະ ແນະນຳວິທີຫຼິ້ນ; ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ ແລະ ຊື່ເຄື່ອງຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດແຕ່ງກາຍ, ເປັນນາຍຄູ ແລະ ນັກຮຽນ.
3. ຄວາມຖືກຕ້ອງໃນການຂີດຂຽນສະຫຼະ ແລະ ເປຍເຊືອກຟາງ.
4. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດລຳລ່ອງໃບໜ້າສະອາດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງໄດ້ຖືກຕ້ອງ.
2. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ ໃບໜ້າສະອາດ.

### III. ສື່ການຮຽນ-ການສອນ

1. ກອງ ແລະ ເຊືອກ.
2. ບົດລຳລ່ອງ ໃບໜ້າສະອາດ.
3. ທ່າຫັດກາຍະບໍລິຫານຫົວເຂົ່າ ແລະ ຕີນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານຫົວເຂົ່າ ແລະ ຕີນ: ທ່າໝູນຫົວເຂົ່າ ແລະ ທ່າໝູນຂໍ່ຕີນ.
2. ໃຫ້ເດັກນ້ອຍໂດດຢຽບເສັ້ນເຊືອກໄລຍະຫ່າງ 20-50 ຊມ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງກັບພື້ນຄູ້ຂາ, ເອົາມືທັງສອງຄ້ຳພື້ນທາງຫຼັງ, ພ້ອມທັງສັ່ນຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
2. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກໍາວົງມົນ

## ຫົວຂໍ້: ການສະແດງອາລົມອອກທາງສີໜ້າ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການສະແດງອາລົມອອກທາງສີໜ້າໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງໃນການສະແດງອາລົມອອກທາງສີໜ້າ.
3. ອ່ານອອກສຽງຄໍາສັບທີ່ປະສົມກັບສະຫຼະ ×າ ໄດ້ຊັດເຈນ.
4. ມີມາລະຍາດໃນການຍິ້ມ, ຫົວ ແລະ ຮ້າຍ.

### II. ເນື້ອໃນຕົ້ນຕໍ

1. ການສະແດງອາລົມອອກທາງສີໜ້າຍິ້ມ, ຫົວ, ຮ້າຍ;
   - ຍິ້ມ: ຍິ້ມແຍ້ມແຈ່ມໃສ.
   - ຫົວ: ຫົວສຽງດັງ, ຫົວສຽງຄ່ອຍ.
   - ຮ້າຍ: ໜ້າຕາເຄັ່ງຂຶມ.
2. ອ່ານອອກສຽງຄໍາສັບທີ່ປະສົມກັບສະຫຼະ ×າ: ຂາ, ງາ ສາ, ຕາ, ບາ, ປາ, ຢາ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ຄົນຍິ້ມ, ຄົນຫົວ, ຄົນໜ້າຕາເຄັ່ງຂຶມ.
2. ບັດຄໍາສັບ: ຂາ, ງາ ສາ, ຕາ, ບາ, ປາ, ຢາ.

### IV. ກິດຈະກໍາການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການບົວລະບັດຮັກສາໃບໜ້າ.
2. ນາຍຄູໃຫ້ເດັກນ້ອຍປະຕິບັດຕົວຈິງໃນການສະແດງອາລົມອອກທາງສີໜ້າ.
3. ໃຫ້ເດັກນ້ອຍສັງເກດຮູບພາບ, ຄູສົນທະນາກ່ຽວກັບການສະແດງອາລົມອອກທາງສີໜ້າ.
4. ໃຫ້ເດັກນ້ອຍອ່ານອອກສຽງຄໍາສັບທີ່ປະສົມກັບສະຫຼະ ×າ.
5. ໃຫ້ເດັກນ້ອຍປະຕິບັດຄືນການສະແດງອາລົມອອກທາງສີໜ້າ ແລະ ອ່ານອອກສຽງຄໍາສັບທີ່ປະສົມສະຫຼະ ×າ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບມາລະຍາດໃນການຍິ້ມ ແລະ ຫົວ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກ, ການສະແດງອາລົມອອກທາງສີໜ້າ.
2. ການປະຕິບັດຕົວຈິງໃນການສະແດງອາລົມອອກທາງສີໜ້າ.
3. ຄວາມຊັດເຈນໃນການອ່ານອອກສຽງຄໍາສັບທີ່ປະສົມກັບສະຫຼະ ×າ.
4. ມາລະຍາດໃນການຍິ້ມ ແລະ ຫົວ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ແຕ້ມ ແລະ ທາສີຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບຕາໄດ້ຖືກຕ້ອງ.
2. ແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບຕາໄດ້ຈົບງາມ ແລະ ຢູ່ໃນຂອບ.
3. ແບ່ງປັນສໍສີໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບຕາ.

### III. ສື່ການຮຽນ-ການສອນ

1. ສໍດຳ, ສໍສີໄມ້ ຫຼື ສໍສີທຽນ.
2. ເຈ້ຍຮູບພາບຕາທີ່ມີຮອຍຈ້ຳ.
3. ເຈ້ຍແບບຮູບພາບຕາທີ່ແຕ້ມ ແລະ ທາສີແລ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງແຕ້ມເທິງກາງຫາວ.
2. ໃຫ້ເດັກນ້ອຍສັງເກດຮູບພາບຕາ, ສົນທະນາ ແລະ ບອກຂັ້ນຕອນການ ແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບຕາ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນໃນການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບຕາ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບຕາ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມການຮັກສາຄວາມສະອາດມື ການແບ່ງປັນ ແລະ ເກັບຜົນງານໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບຕາ.
2. ຄວາມຈົບງາມໃນການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບຕາ.
3. ການແບ່ງປັ້ນສໍສີໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແຂ່ງຂັນສົ່ງບານຂ້າມຫົວ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນສົ່ງບານຂ້າມຫົວໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນສົ່ງບານຂ້າມຫົວໄດ້ຖືກຕ້ອງ.
3. ມີຄວາມຄ່ອງແຄ້ວວ່ອງໄວໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫິ້ນສົ່ງບານຂ້າມຫົວ.

### III. ສື່ການຮຽນ-ການສອນ

1. ໝາກບານ.
2. ໝາກຫວິດ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກນ້ອຍເຮັດທ່າທາງແກວ່ງແຂນສະລັບກັບການຍົກຂາໄປ-ມາ.
2. ນາຍຄູສະເໜີແບບຫຼິ້ນ ສົ່ງບານຂ້າມຫົວ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນສົ່ງບານຂ້າມຫົວ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ຫຼິ້ນແລ້ວອະນາໄມຕີນມືໃຫ້ສະອາດ ແລະ ຊ່ວຍກັນເກັບມ້ຽນອຸປະກອນການຫຼິ້ນ.
6. ໃຫ້ເດັກນ້ອຍເຮັດທ່າທາງຜູ້ເຖົ້າຈັບໄມ້ເທົ້າຍ່າງໄປຊ້າໆ, ຫຼັງຈາກນັ້ນ ໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນສົ່ງບານຂ້າມຫົວ.
2. ຄວາມຖືກຕ້ອງໃນເວລາຫຼິ້ນແບບຫຼິ້ນແຂ່ງຂັນສົ່ງບານຂ້າມຫົວ.
3. ຄວາມຄ່ອງແຄ້ວວ່ອງໄວໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຮູບວົງມົນຕາມແບບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີໃນເກມໄດ້ຖືກຕ້ອງ.
2. ລຽນລຳດັບຮູບວົງມົນຕາມແບບໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການລຽນລຳດັບຮູບວົງມົນຕາມແບບ: ນ້ອຍ, ກາງ, ໃຫຍ່.

### III. ສື່ການຮຽນ-ການສອນ

1. ແຜ່ນເກມລຽນລຳດັບຮູບວົງມົນຕາມແບບ: ນ້ອຍ, ກາງ, ໃຫຍ່ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບໃບໜ້າ: ທຳມະດາ, ຍິ້ມ, ຮ້ອງໄຫ້.
3. ບົດຄຳຄ່ອງ ໃບໜ້າສະອາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ໃບໜ້າສະອາດ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມລຽນລຳດັບຮູບວົງມົນຕາມແບບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການລຽນລຳດັບຮູບວົງມົນຕາມແບບ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ມຸມ ແລະ ຊື່ເຄື່ອງຫຼິ້ນຕາມມຸມ.
2. ຫຼິ້ນເຄື່ອງດົນຕີຢ່າງມ່ວນຊື່ນ. ແລະ ພິມສະຫຼະ ×າ ໃສ່ອ່າງຊາຍໄດ້ຖືກຕ້ອງ.
3. ລຽນລຳດັບຮູບພາບເດັກນ້ອຍສູງ-ຕໍ່າ ແລະ ຈັບຄູ່ທີ່ຄືກັນຮູບພາບໃບໜ້າໄດ້ຖືກຕ້ອງ.
4. ເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ.

### II. ເນື້ອໃນຕົ້ນຕໍ

1. ຊື່ມຸມ, ຊື່ເຄື່ອງຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ.
2. ການຫຼິ້ນເຄື່ອງດົນຕີ: ຕີກອງ, ຕີລະນາດ, ຈັບໄມໂຄໂຟນຮ້ອງເພງ, ພິມສະຫຼະ ×າ ໃສ່ອ່າງດິນຊາຍ.
3. ການລຽນລຳດັບຮູບພາບເດັກນ້ອຍສູງ-ຕໍ່າ ແລະ ຈັບຄູ່ທີ່ຄືກັນຮູບພາບໃບໜ້າ: ທຳມະດາ, ຍິ້ມ, ຮ້ອງໄຫ້.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ເຄື່ອງດົນຕີຂອງຈິງ ຫຼື ຈຳລອງ: ກອງ, ລະນາດ, ໄມໂຄໂຟນ, ແບບພິມສະຫຼະ ×າ; ອ່າງດິນຊາຍ.
2. ມຸມເກມການສຶກສາ: ແຜ່ນເກມລຽນລຳດັບຮູບພາບເດັກນ້ອຍສູງ-ຕໍ່າ ແລະ ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບໃບໜ້າທຳມະດາ, ຍິ້ມ, ຮ້ອງໄຫ້ (ກະດານສຽບ ຫຼື ຕິດ).
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ມຸມ ແລະ ຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ ແລະ ຊື່ເຄື່ອງຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນເຄື່ອງດົນຕີ ແລະ ຄວາມຖືກຕ້ອງໃນການພິມສະຫຼະ ×າ ໃສ່ອ່າງດິນຊາຍ.
3. ຄວາມຖືກຕ້ອງໃນການລຽນລຳດັບຮູບພາບເດັກນ້ອຍສູງ-ຕໍ່າ ແລະ ຈັບຄູ່ທີ່ຄືກັນຮູບພາບໃບໜ້າ.
4. ການເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ.

## ຈຸດປະສົງສຳລັບ ອາທິດທີ 2

## ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມຈິນຕະນາການປະກອບເລື່ອງ ການບົວລະບັດຮັກສາຕາຢ່າງມ່ວນຊື່ນ.
2. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
3. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ, ບົດເພງໄດ້ຖືກຕ້ອງ.
4. ກ້າສະແດງອອກໃນເວລາສະແດງທ່າທາງ.
5. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.
6. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.
7. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.
8. ມ່ວນຊື່ນໃນເວລາສະແດງທ່າທາງ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກສ່ວນປະກອບ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາຕາ, ຫູ, ດັງ, ປາກໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງໃນການເກດເບິ່ງສິ່ງຂອງຕ່າງໃນຫ້ອງຮຽນ, ການຟັງສຽງ, ການດົມກິ່ນ ແລະ ການຖູແຂ້ວ.
3. ເລົ່າຄຳຄ່ອງ, ເວົ້າເປັນຄຳສັບ, ເປັນປະໂຫຍກຕາມເນື້ອໃນຄຳຄ່ອງ, ຕາມເນື້ອໃນບົດເພງ ແລະ ຕາມຮູບພາບໄດ້ຊັດເຈນ.
4. ບອກການປ້ອງກັນພະຍາດຕາແດງໄດ້ຖືກຕ້ອງ.
5. ອ່ານອອກສຽງຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ ່ ້ ໄດ້ຊັດເຈນ.
6. ຮ້ອງເພງດ້ວຍຄວາມເບີກບານມ່ວນຊື່ນ

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນຮ້ອຍໝາກຕຸ້ມສະຫຼັບສີ. ພັບຜ້າຮູບຈະຕຸລັດເປັນຮູບສາມແຈ, ແຕ້ມ ແລະ ຕັດ, ຕິດຮູບວົງມົນ, ສາມແຈ,ຈະຕຸລັດ ແລະ ສີ່ແຈ ແລະ ບອກຂັ້ນຕອນການຂີດຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບໄດ້ຖືກຕ້ອງ.
2. ຮ້ອຍໝາກຕຸ້ມສະຫຼັບສີໄດ້ຈົບງາມ.
3. ພັບຜ້າຮູບຈະຕຸລັດເປັນຮູບສາມແຈໄດ້ຄ້າຍຄື.
4. ແຕ້ມ, ຕັດ, ຕິດ, ຮູບວົງມົນ, ສາມແຈ, ຈະຕຸລັດ ແລະ ສີ່ແຈປະກອບເປັນຮູບຄົນໄດ້ຈົບງາມ.
5. ຂີດຂຽນສະຫຼະ ×າ, ຕົວສະກົດຕາມຄຳສັບ, ຂຽນຕົວເລກ 0-1 ຕາມຮອຍຈ້ຳ, ຂຽນຕາມໃຈ ແລະ ຂີດຂຽນຕົວເລກ 1-2 ຕາມຮອຍຈ້ຳ ແລະ ຂຽນຕາມໃຈໄດ້ຈົບງາມ.
6. ມີຄວາມອົດທົນໃນການຮ້ອຍໝາກຕຸ້ມສະຫຼັບສີ ແລະ ການແຕ້ມ, ຕັດ-ຕິດຮູບວົງມົນ, ສາມແຈ,ຈະຕຸລັດ ແລະ ສີ່ແຈ ,
7. ຊ່ວຍເຫຼືອໝູ່ເພື່ອນໃນເວລາພັບຜ້າ.
8. ມີຄວາມອົດທົນໃນການຂີດຂຽນສະຫຼະ ×າ, ຕົວສະກົດຕາມຄຳສັບ ແລະ ຂີດຂຽນຕົວເລກ 0-1 ຕາມຮອຍຈ້ຳ ແລະ ຂີດຂຽນຕາມໃຈ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາ ການຫຼິ້ນ: ແຂ່ງຂັນ ມັດຕາແຕ້ມຮູບໃບໜ້າຄົນ, ລູ່ລີ່ເອົ້າສານ, ການຫຼິ້ນນ້ຳ-ຫຼິ້ນຊາຍ:ຜອງ ນ້ຳ- ຜອງຊາຍ, ເຕັ້ນເຊືອກ, ຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນກົບໄດ້.
2. ຫຼິ້ນແບບຫຼິ້ນແຂ່ງຂັນມັດຕາແຕ້ມຮູບໃບໜ້າຄົນ , ລູ່ລີ່ເອົ້າສານ, ການ ຫຼິ້ນນ້ຳ-ຫຼິ້ນຊາຍ:ຜອງນ້ຳ- ຜອງຊາຍ, ເຕັ້ນເຊືອກ, ຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນກົບໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນແບບຫຼິ້ນ.
4. ເບີກບານມ່ວນຊື່ນໃນເວລາຫຼິ້ນ.
5. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງ.
6. ເຝິກການຊ່ວຍເຫຼືອກັນໃນເວລາຫຼິ້ນ.
7. ມີຄວາມຄ່ອງແຄ້ວໃນເວລາຫຼິ້ນແບບຫຼິ້ນ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຈັບຄູ່ທີ່ຄືກັນຮູບພາບເຄື່ອງ ໃຊ້ໃນການລ້າງໜ້າ ແລະ ເຊັດໜ້າ, ຈັບຄູ່ທີ່ຄືກັນຮູບພາບຄຸນປະໂຫຍດຂອງຫູໄດ້ຖືກຕ້ອງ.
3. ລຽນລຳດັບຮູບສາມແຈຕາມແບບ, ລຽນລຳດັບຮູບພາບເດັກນ້ອຍຖູແຂ້ວ, ລຽນລຳດັບຮູບພາບການບົວລະບັດຮັກສາເລົາຄິວໄດ້ຖືກຕ້ອງ.
4. ອົດທົນໃນເວລາຫຼິ້ນເກມ.
5. ແບ່ງປັນເກມໃຫ້ໝູ່ເພື່ອນ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນເຄື່ອງດົນຕີ, ຕໍ່ບຼັອກເປັນຮູບຕ່າງໆຕາມຈິນຕະນາການຢ່າງມ່ວນຊື່ນ.
3. ຮ້ອຍໝາກຕຸ້ມສະຫຼັບສີ, ແຕ້ມ-ທາສີຮູບພາບຕາ, ພັບຜ້າຮູບຈັດຕຸລັດເປັນຮູບສາມແຈ, ຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບ: ຕາ, ຝາ, ຢາ, ນາ, ງາ, ຂາ, ຕັດ-ຕິດຮູບຄົນຕາມແບບໄດ້ຖືກຕ້ອງ.
4. ອ່ານອອກສຽງຄຳສັບທີ່ມີສະຫຼະ ×າ, ອ່ານອອກສຽງຄຳສັບທີ່ມີສະຫຼະ ×າ ແລະ ເວົ້າຊື່ສ່ວນຕ່າງໆໃນຮ່າງກາຍຂອງຄົນຕາມຮູບພາບ, ອ່ານຕາມຮູບພາບໃນປຶ້ມນິທານເລື່ອງ ຂອງຂວັນທີ່ຖືກໃຈ, ອ່ານຕາມຮູບພາບຮ່າງກາຍຂອງຄົນຕາມຮູບພາບໄດ້ຊັດເຈນ.
5. ຫຼິ້ນບົດບາດສົມມຸດເປັນເອື້ອຍ-ອ້າຍອາບນ້ຳໃຫ້ນ້ອງ: ອາບນ້ຳ, ຫວີຜົມ, ມັດຜົມ, ທາແປ້ງ, ເປັນທ່ານໝໍນ້ອຍກວດຫູໃຫ້ຄົນເຈັບ, ເປັນພໍ່ຄ້າ-ແມ່ຄ້າ, ລູກຄ້າຊື້ຂາຍດອກໄມ້, ເປັນພໍ່ຄ້າຢ່າງມ່ວນຊື່ນ.
6. ລຽນລຳດັບຮູບສາມແຈຕາມແບບ ແລະ ຈັບຄູ່ທີ່ຄືກັນຮູບພາບຄຸນປະໂຫຍດຂອງຫູໄດ້ຖືກຕ້ອງ.
7. ບອກຊື່ອະໄວຍະວະທີ່ຢູ່ໃບໜ້າ: ໜ້າຜາກ, ຄິ້ວ, ດັງ, ປາກ, ແກ້ມ, ຄາງ, ຫູ, ທອງລົດເຊັດໜ້າໃຫ້ຕຸກກະຕາໄດ້ຄ່ອງແຄ້ວ.
8. ເກັບມ້ຽນເຄື່ອງຫຼິ້ນໄວເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.
9. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.
10. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.
11. ຮັກສາບັດຄຳສັບ ແລະ ປຶ້ມນິທານບໍ່ໃຫ້ຈີກຂາດ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນຕະນາການປະກອບເລື່ອງ ການບົວລະບັດຮັກສາຕາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມຈິນຕະນາການປະກອບເລື່ອງ ການບົວລະບັດຮັກສາຕາຢ່າງມ່ວນຊື່ນ.
2. ກ້າສະແດງອອກໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາປະກອບເລື່ອງ ການບົວລະບັດຮັກສາຕາ: ຝຸ່ນເຂົ້າຕາແລ້ວໄປລ້າງໜ້າ, ເຊັດໜ້າໃຫ້ສະອາດ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານຂາ ແລະ ແອວ (ເບິ່ງປຶ້ມຄູ່ມືຄູ).

### VI. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານຂາ ແລະ ແອວ: ທ່າໝູນຫົວເຂົ່າ ແລະ ເບັດແອວ.
2. ໃຫ້ເດັກນ້ອຍຍ່າງເຢ່ງເຢ້ຕາມເສັ້ນຊື່.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມຈິນຕະນາປະກອບເລື່ອງ ການບົວລະບັດຮັກສາຕາ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງອັດສະໝາດຫຼັບຕາສະມາທິ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມຈິນຕະນາປະກອບເລື່ອງ ການບົວລະບັດຮັກສາຕາ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການກ້າສະແດງອອກໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງການບົວລະບັດຮັກສາຕາ.
2. ການກ້າສະແດງອອກໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ຕາ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກສ່ວນປະກອບ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາຕາໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງໃນການສັງເກດເບິ່ງສິ່ງຂອງຕ່າງໆໃນຫ້ອງຮຽນ.
3. ເລົ່າຄຳຄ່ອງ, ເວົ້າຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນຄຳຄ່ອງໄດ້ຊັດເຈນ.

## II. ເນື້ອໃນຕົ້ນຕໍ

1. ສ່ວນປະກອບ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາຕາ:
   - ສ່ວນປະກອບຂອງຕາ: ໜ່ວຍຕາ, ຂົນຕາ.
   - ຄຸນປະໂຫຍດຂອງຕາ: ໃຊ້ໄວ້ເບິ່ງ ແລະ ສັງເກດສິ່ງຕ່າງໆທີ່ຢູ່ອ້ອມຕົວ.
   - ການບົວລະບັດຮັກສາຕາ: ລະວັງບໍ່ໃຫ້ຂີ້ຝຸ່ນ ຫຼື ແມງໄມ້ເຂົ້າຕາ, ບໍ່ເອົາມືເປື້ອນສີຕາ, ບໍ່ຢູ່ບ່ອນມືດ ແລະ ບໍ່ເບິ່ງສິ່ງຂອງທີ່ມີສີຂາວກາງແດດກ້າ.
2. ການເລົ່າຄຳຄ່ອງ ຮັກສາຕາ, ເວົ້າຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ.
   - ຄຳສັບ: ໜ່ວຍຕາ, ມືນຕາ, ແສງແດດ, ຂີ້ຝຸ່ນ, ແມງໄມ້.
   - ເວົ້າເປັນປະໂຫຍກ: ຂ້ອຍບໍ່ເບິ່ງແສງແດດກ້າ, ຂ້ອຍບໍ່ມືນຕາໃສ່ຂີ້ຝຸ່ນ, ຂ້ອຍຮັກສາຕາ.

## III. ສື່ການຮຽນ-ການສອນ

1. ຮູບພາບ ຕາ.
2. ບົດຄຳຄ່ອງ ຮັກສາຕາ (ເບິ່ງປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ, ສົນທະນາ, ເວົ້າຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນຄຳຄ່ອງ.
2. ໃຫ້ເດັກນ້ອຍສັງເກດຮູບຕາ, ສົນທະນາ ແລ້ວບອກກ່ຽວກັບສ່ວນປະກອບຂອງຕາ.
3. ນາຍຄູພາເດັກນ້ອຍປະຕິບັດຕົວຈິງໃນການສັງເກດເບິ່ງສິ່ງຕ່າງໆຢູ່ອ້ອມຕົວ, ສົນທະນາກ່ຽວກັບຄຸນປະໂຫຍດ ແລະ ການບົວລະບັດຮັກສາຕາ.
4. ໃຫ້ເດັກນ້ອຍເວົ້າຄືນສ່ວນປະກອບ ແລະ ປະໂຫຍດຂອງຕາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການບົວລະບັດຮັກສາຕາ ແລະ ຄວາມສາມັກຄີ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກສ່ວນປະ ກອບ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາຕາ.
2. ການປະຕິບັດຕົວຈິງໃນການສັງເກດສິ່ງຕ່າງໆ.
3. ຄວາມຊັດເຈນໃນການເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນຄຳຄ່ອງ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຮ້ອຍໝາກຕຸ້ມ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນໃນການຮ້ອຍໝາກຕຸ້ມສະຫຼັບສີໄດ້ຖືກຕ້ອງ.
2. ຮ້ອຍໝາກຕຸ້ມສະຫຼັບສີໄດ້ຈົບງາມ.
3. ມີຄວາມອົດທົນຮ້ອຍໝາກຕຸ້ມສະຫຼັບສີ.

### II. ເນື້ອໃນຕົ້ນຕໍ

ການຮ້ອຍໝາກຕຸ້ມສະຫຼັບສີ.

### III. ສື່ການຮຽນ-ການສອນ

1. ໝາກຕຸ້ມຫຼາຍສີ.
2. ເຊືອກຟາງ.
3. ໝາກຕູ້ມທີ່ຮ້ອຍແລ້ວ.

### IV. ກິດຈະກຳການຮຽນ -ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງກຳມື, ແບມື, ຢິບ, ຍູບ.
2. ໃຫ້ເດັກນ້ອຍສັງເກດໝາກຕຸ້ມທີ່ຮ້ອຍແລ້ວ, ສົນທະນາ ແລະ ບອກຂັ້ນຕອນການຮ້ອຍໝາກຕຸ້ມ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຮ້ອຍໝາກຕຸ້ມສະຫຼັບສີ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານການ ແລະ ເວົ້າຄືນຂັ້ນຕອນການຮ້ອຍໝາກຕຸ້ມມສະຫຼັບສີ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ຄວາມອົດທົນ ແລະ ເກັບມ້ຽນຜົນງານ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຮ້ອຍໝາກໝາກຕຸ້ມສະຫຼັບສີ.
2. ຄວາມຈົບງາມໃນການຮ້ອຍໝາກຕູ້ມສະຫຼັບສີ.
3. ຄວາມອົດທົນໃນການຮ້ອຍໝາກຕຸ້ມສະຫຼັບສີ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ແຂ່ງຂັນມັດຕາແຕ້ມຮູບໃບໜ້າຄົນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແຂ່ງຂັນມັດຕາແຕ້ມຮູບໃບໜ້າຄົນໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນເຕັ້ນແຂ່ງຂັນມັດຕາຕ້ມຮູບໃບໜ້າຄົນໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນແບບຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນມັດຕາແຕ້ມຮູບໃບໜ້າຄົນ.

### III. ສື່ການຮຽນ-ການສອນ

1. ໝາກຫວິດ, ກະແຊັກ ແລະ ກອງ.
2. ສໍດຳ, ເຈ້ຍຂາວ.
3. ຜ້າສຳລັບມັດຕາ.
4. ບົດຄຳຄ່ອງ ຮັກສາຕາ.
5. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງຮັກສາຕາປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນ ແຂ່ງຂັນມັດຕາແຕ້ມຮູບໃບໜ້າຄົນ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນແບບຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນ ແຂ່ງຂັນມັດຕາແຕ້ມຮູບໃບໜ້າຄົນ, ນາຍຄູຕິດຕາມ ແລະຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ ແລະ ມີຄວາມຄ່ອງແຄ້ວ ວ່ອງໄວໃນການຫຼິ້ນ.
6. ໃຫ້ເດັກນ້ອຍຈັບແຂນກັນຍ່າງໄປທາງຂ້າງຊ້າຍ 5 ບາດກ້າວ, ຍ່າງໄປທາງຂ້າງຂວາ 5 ບາດກ້າວ ຫຼັງຈາກນັ້ນ ໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ:

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ ແຂ່ງຂັນມັດຕາແຕ້ມຮູບໃບໜ້າຄົນ.
2. ຄວາມຖືກຕ້ອງໃນການຫຼິ້ນແຂ່ງຂັນມັດຕາແຕ້ມຮູບໃບໜ້າຄົນ.
3. ຄວາມອົດທົນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນການລ້າງໜ້າ ແລະ ເຊັດໜ້າ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນການລ້າງໜ້າ ແລະ ເຊັດໜ້າໄດ້ຖືກຕ້ອງ.
3. ແບ່ງປັນເກມໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນການລ້າງໜ້າ ແລະ ເຊັດໜ້າ: ນ້ຳ, ສະບູ, ໂອ, ຜ້າເຊັດໜ້າ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນການລ້າງໜ້າ ແລະ ເຊັດໜ້າ: ນ້ຳ, ສະບູ, ໂອ, ຜ້າເຊັດໜ້າ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມລຽນລຳດັບຮູບວົງມົນຕາມແບບ: ນ້ອຍ, ກາງ, ໃຫຍ່.
3. ບົດຄຳຄ່ອງ ຮັກສາຕາ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງຮັກສາຕາ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່ ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນການລ້າງໜ້າ ແລະ ເຊັດໜ້າ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການແບ່ງປັນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນການລ້າງໜ້າ ແລະ ເຊັດໜ້າ.
3. ການແບ່ງປັນເກມໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມວິທະຍາສາດ ແລະ ທຳມະຊາດ, ສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ມຸມ ແລະ ຊື່ເຄື່ອງຫຼິ້ນຕາມມຸມ.
2. ບອກຊື່ອະໄວຍະວະທີ່ຢູ່ໃບໜ້າໄດ້ຖືກຕ້ອງ ແລະ ທົດລອງເຊັດໜ້າໃຫ້ຕຸກກະຕາໄດ້ຄ່ອງແຄ້ວ.
3. ຮ້ອຍໝາກຕຸ້ມສະຫຼັບສີ, ແຕ້ມ ແລະ ທາສີຮູບພາບໄດ້ຖືກຕ້ອງ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ມຸມ, ຊື່ເຄື່ອງຫຼິ້ນຕາມມຸມ ແລະ ວິທີຫຼິ້ນຕາມມຸມວິທະຍາສາດ ແລະ ທຳມະຊາດ, ມຸມສິລະປະສ້າງສັນ.
2. ການສັງເກດ ແລະ ບອກຊື່ອະໄວຍະວະທີ່ຢູ່ໃບໜ້າ: ໜ້າຜາກ, ຄິ້ວ, ຕາ, ດັງ, ປາກ, ແກ້ມ, ຄາງ, ຫູ; ສັງເກດ ແລະ ທົດລອງເຊັດໜ້າໃຫ້ຕຸກກະຕາ.
3. ການຮ້ອຍໝາກຕຸ້ມສະຫຼັບສີ, ແຕ້ມ ແລະ ທາສີຮູບພາບຕາ.

### III. ສື່ການຮຽນ-ການສອນ

1. ມຸມວິທະຍາສາດ ແລະ ທຳມະຊາດ: ຕຸກກະຕາ, ຊາມນ້ຳ, ຜ້າເຊັດໜ້າ.
2. ມຸມສິລະປະສ້າງສັນ: ໝາກຕຸ້ມ, ເຊືອກສຳລັບຮ້ອຍ, ເຈ້ຍຮູບພາບຕາ, ສໍດຳ, ສໍສີໄມ້ ຫຼື ສີທຽນ.
3. ບົດຄຳຄ່ອງ ຮັກສາຕາ; ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ຮັກສາຕາ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູ ສົນທະນາກັບເດັກນ້ອຍກ່ຽວກັບມຸມ, ເຄື່ອງຫຼິ້ນໃນມຸມ ແລະ ແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນມຸມວິທະຍາສາດ ແລະ ທຳມະຊາດ, ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມວິທະຍາສາດ ແລະ ທຳມະຊາດ, ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ, ຊື່ເຄື່ອງຫຼິ້ນ.
2. ຄວາມຖືກຕ້ອງໃນການບອກຊື່ອະໄວຍະວະທີ່ຢູ່ໃບໜ້າ ແລະ ຄວາມຄ່ອງແຄ້ວໃນການເຊັດໜ້າໃຫ້ຕຸກກະຕາ.
3. ຄວາມຖືກຕ້ອງໃນການຮ້ອຍໝາກຕຸ້ມສະຫຼັບສີ, ແຕ້ມ ແລະ ທາສີຮູບພາບ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຕາມຄຳສັ່ງຕາມນາຍຄູແນະນຳ: ຫັນໄປເບື້ອງຊ້າຍ ແລະ ຫັນໄປເບື້ອງຂວາ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານລຳຕົວ ແລະ ຂາ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຕົວ ແລະ ຂາ: ທ່າຫວ່ຽງລຳຕົວ ແລະ ທ່າຢືນຂາດຽວຍົກຂາ.
2. ໃຫ້ເດັກນ້ອຍຍ່າງໄປທາງໜ້າ-ຖອຍຫຼັງ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຕາມຄຳສັ່ງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຢຽດຂາໄປທາງໜ້າ, ຈ່າງຂາອອກ, ກົ້ມລົງເອົາມືທັງສອງຈັບປາຍຕີນ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຕາມຄຳສັ່ງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການເຄື່ອນໄຫວຮ່າງກາຍປະຕິບັດຄຳສັ່ງຕາມນາຍຄູແນະນຳ.
2. ຄວາມຕັ້ງໃຈໃນການຟັງຄຳສັ່ງຂອງນາຍຄູ.

# ກິດຈະກຳວົງມົນ

## ຫົວຂໍ້: ການປ້ອງກັນພະຍາດຕາແດງ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການປ້ອງກັນພະຍາດຕາແດງໄດ້ຖືກຕ້ອງ.
2. ເວົ້າເປັນປະໂຫຍກຕາມຮູບພາບໄດ້ຊັດເຈນ.
3. ອ່ານອອກສຽງຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ ່ ້ ໄດ້ຊັດເຈນ.

## II. ເນື້ອໃນຕົ້ນຕໍ

1. ການປ້ອງກັນພະຍາດຕາແດງ: ລະວັງບໍ່ເອົາມືເປື້ອນສີຕາ, ບໍ່ໃຫ້ຂີ້ຝຸ່ນເຂົ້າຕາ ແລະ ບໍ່ເອົານ້ຳເປື້ອນລ້າງຕາ, ກິນອາຫານທີ່ມີທາດບຳລຸງຕໍ່ສາຍຕາ.
2. ການເວົ້າເປັນປະໂຫຍກຕາມຮູບພາບ: ຕາໃຊ້ໄວ້ເບິ່ງ, ເດັກນ້ອຍລ້າງຕາ, ເດັກນ້ອຍກິນໝາກຫຸ່ງສຸກ.
3. ການອ່ານອອກສຽງຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ ່ ້: ຕາ, ຕ່າ, ຕ້າ; ບາ, ບ່າ, ບ້າ; ປາ, ປ່າ, ປ້າ.

## III. ສື່ການຮຽນ-ການສອນ

1. ຮູບພາບ: ໝາກຫຸ່ງສຸກ, ໝາກອຶ, ຜັກບົ້ງ, ຫົວກາລົດ, ເດັກນ້ອຍລ້າງຕາ, ເດັກນ້ອຍກິນໝາກຫຸ່ງສຸກ.
2. ບັດຄຳສັບ: ຕາ, ຕ່າ, ຕ້າ; ບາ, ບ່າ, ບ້າ; ປາ, ປ່າ, ປ້າ.

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກນ້ອຍກ່ຽວກັບຄຸນປະໂຫຍດຂອງຕາ ແລະ ການປ້ອງກັນພະຍາດຕາແດງ.
2. ໃຫ້ເດັກນ້ອຍສັງເກດຮູບພາບ: ໝາກຫຸ່ງສຸກ, ໝາກອຶ, ຜັກບົ້ງ, ຫົວກາລົດ, ສົນທະນາກ່ຽວກັບອາຫານບຳລຸງສາຍຕາ.
3. ໃຫ້ເດັກນ້ອຍເວົ້າເປັນປະໂຫຍກຕາມຮູບພາບ.
4. ໃຫ້ເດັກນ້ອຍອ່ານອອກສຽງຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ ່ ້.
5. ໃຫ້ເດັກນ້ອຍເວົ້າຄືນການປ້ອງກັນພະຍາດຕາແດງ ແລະ ອາຫານທີ່ມີທາດບຳລຸງສາຍຕໍ່ຕາ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການກິນອາຫານທີ່ມີທາດບຳລຸງສາຍຕາ ແລະ ລະວັງເພື່ອປ້ອງກັນພະຍາດຕາແດງ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການປ້ອງກັນພະຍາດຕາແດງ.
2. ຄວາມຊັດເຈນໃນການເວົ້າເປັນປະໂຫຍກຕາມຮູບພາບ.
3. ຄວາມຊັດເຈນໃນການອ່ານອອກສຽງຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ ່ ້.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ພັບຜ້າ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການພັບຜ້າຮູບຈະຕຸລັດເປັນຮູບສາມແຈໄດ້ຖືກຕ້ອງ.
2. ພັບຜ້າຮູບຈະຕຸລັດເປັນຮູບສາມແຈໄດ້ຄ້າຍຄື.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາພັບ.

### II. ເນື້ອໃນຕົ້ນຕໍ

ການພັບຜ້າຮູບຈະຕຸລັດເປັນຮູບສາມແຈ.

### III. ສື່ການຮຽນ-ການສອນ

1. ຜ້າທີ່ເປັນຮູບຈະຕຸລັດ.
2. ຜ້າທີ່ພັບເປັນຮູບສາມແຈແລ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງຖູຝາມື, ດີດນິ້ວມືເທື່ອລະນິ້ວ.
2. ໃຫ້ເດັກນ້ອຍສັງເກດຜ້າທີ່ພັບເປັນຮູບສາມແຈແລ້ວ, ສົນທະນາ ແລະ ບອກຂັ້ນຕອນການພັບຜ້າ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຂັ້ນຕອນຂອງການພັບຜ້າຮູບຈະຕຸລັດເປັນຮູບສາມແຈ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການພັບຜ້າຮູບຈະຕຸລັດເປັນຮູບສາມແຈ.
6. ສຶກສາອົບຮົມເດັກນ້ອຍ ກ່ຽວກັບຄວາມສາມັກຄີ, ມີຄວາມອົດທົນ ແລະ ເກັບຜົນງານໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການພັບຜ້າຮູບຈະຕຸລັດເປັນຮູບສາມແຈ.
2. ຄວາມຄ້າຍຄືໃນການພັບຜ້າຮູບຈະຕຸລັດເປັນຮູບສາມແຈ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາພັບ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນລູ່ລີ່ເຂົ້າສານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນລູ່ລີ່ເຂົ້າສານໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນລູ່ລີ່ເຂົ້າສານໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນລູ່ລີເຂົ້າສານ.

### III. ສື່ການຮຽນ-ການສອນ

1. ກອງ.
2. ຄຳຄ່ອງ ລູ່ລີ່ເຂົ້າສານ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຄື່ອນໄຫວຕາມສຽງສັນຍານຂອງການຕີບກອງຊ້າ-ໄວ.
2. ນາຍຄູສະເໜີແບບຫຼິ້ນ ລູ່ລີເຂົ້າສານ, ສາທິດວິທີຫຼິ້ນ ແລະ ຂັ້ນຕອນໃນການຫຼິ້ນແບບຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນ ລູ່ລີເຂົ້າສານ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ບໍ່ຍູ້ກັນລົ້ມ ແລະ ໃຫ້ມີສະຕິລະວັງຕົວ.
6. ໃຫ້ເດັກນ້ອຍເຮັດທ່າທາງລ້າງໜ້າ ແລະ ເຊັດໜ້າ ຫຼັງຈາກນັ້ນ ໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນລູ່ລີ່ເຂົ້າສານ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນລູ່ລີ່ເຂົ້າສານ.
3. ຄວາມເບີກບານມ່ວນຊື່ນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບພາບຄຸນປະໂຫຍດຂອງຫູ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບພາບຄຸນປະໂຫຍດຂອງຫູໄດ້ຖືກຕ້ອງ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບພາບຄຸນປະໂຫຍດຂອງຫູ: ຮູບພາບເດັກນ້ອຍຟັງວິທະຍຸ, ຟັງໂທລະໂຄ່ງ, ຟັງເທັບ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັບຮູບພາບຄຸນປະໂຫຍດຂອງຫູ: ຮູບພາບເດັກນ້ອຍຟັງວິທະຍຸ, ຟັງໂທລະໂຄ່ງ, ຟັງເທັບ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນການລ້າງໜ້າ ແລະ ຕາ: ນ້ຳ, ສະບູ, ໂອ, ຜ້າເຊັດໜ້າ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍ ເລົ່າຄຳຄ່ອງ ຮັກສາຕາ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັບຮູບພາບຄຸນປະໂຫຍດຂອງຫູ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບພາບຄຸນປະໂຫຍດຂອງຫູ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ມຸມ ແລະ ຊື່ເຄື່ອງຫຼິ້ນຕາມມຸມ.
2. ອ່ານຄຳສັບທີ່ມີສະຫຼະ ×າ ແລະ ອ່ານຕາມຮູບພາບໃນປຶ້ມນິທານໄດ້ຊັດເຈນ.
3. ພັບຜ້າ ແລະ ຮ້ອຍໝາກຕຸ້ມໄດ້ຖືກຕ້ອງ.
4. ຮັກສາບັດຄຳສັບ ແລະ ປຶ້ມນິທານບໍ່ໃຫ້ຈີກຂາດ.

### II. ເນື້ອໃນຕົ້ນຕໍ

1. ມຸມເຄື່ອງຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
2. ການສັງເກດ ແລະ ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບທີ່ມີສະຫຼະ ×າ: ຕາ ຝາ ຢາ ງາ ຂາ ຂາ; ອ່ານຕາມຮູບພາບໃນປຶ້ມນິທານເລື່ອງ: ຂອງຂວັນທີ່ຖືກໃຈ.
3. ການພັບຜ້າຮູບຈະຕຸລັດເປັນຮູບສາມແຈ; ຮ້ອຍໝາກຕຸ້ມສະຫຼັບສີ: ແດງ, ຟ້າ, ເຫຼືອງ.

### III. ສື່ການຮຽນ-ການສອນ

1. ມຸມອ່ານ: ປຶ້ມບົດເຝິກຫັດພາສາລາເຫຼັ້ມ 1 (ໜ້າ 2) ຫຼື ບັດຄຳສັບທີ່ມີສະຫຼະ ×າ: ຕາ (×າ), ຂາ (×າ), ຝາ (×າ), ຢາ (×າ), ງ (×າ), ຂາ (×າ), ປຶ້ມນິທານເລື່ອງຂອງຂວັນທີ່ຖືກໃຈ; ກະດານສຽບ ຫຼື ຕິດ.
2. ມຸມສິລະປະສ້າງສັນ: ຜ້າຮູບຈະຕຸລັດ, ໝາກຕຸ້ມສີແດງ, ຟ້າ, ເຫຼືອງ; ເຊືອກສຳລັບຮ້ອຍ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ຳມຸມ ແລະ ຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກກ່ຽວກັບການຮັກສາບັດຄຳສັບ ແລະ ປຶ້ມນິທານບໍ່ໃຫ້ຈີກຂາດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ ແລະ ຊື່ເຄື່ອງຫຼິ້ນຕາມມຸມ.
2. ຄວາມຊັດເຈນໃນການອ່ານຄຳສັບທີ່ມີສະຫຼະ ×າ ແລະ ອ່ານຕາມຮູບພາບໃນປຶ້ມນິທານ.
3. ຄວາມຖືກຕ້ອງໃນການພັບຜ້າ ແລະ ຮ້ອຍໝາກຕຸ້ມ.
4. ການຮັກສາບັດຄຳສັບ ແລະ ປຶ້ມນິທານບໍ່ໃຫ້ຈີກຂາດ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດຄຳລ່ອງ ຮັກສາຕາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳລ່ອງໄດ້ຖືກຕ້ອງ.
2. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳລ່ອງ ຮັກສາຕາ.

### III. ສື່ການຮຽນ-ການສອນ

1. ບົດຄຳລ່ອງ ຮັກສາຕາ.
2. ທ່າຫັດກາຍະບໍລິຫານແຂນ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານແຂນ ແລະ ຂາ: ທ່າພັບແຂນສອກ ແລະ ທ່າຢືນຂາດຽວຍົກຂາ.
2. ໃຫ້ເດັກນ້ອຍແລ່ນຊິກແຊັກ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳລ່ອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນອນຫງາຍຫຼັບຕາວາແຂນອອກ, ພ້ອມທັງຈ່າງຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການ ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳລ່ອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳລ່ອງ.
2. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກຳວົງມົນ

## ຫົວຂໍ້: ຫູ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກສ່ວນປະກອບ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາຫູໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງໃນການຟັງສຽງ.
3. ເວົ້າຄຳສັບ, ປະໂຫຍກຕາມເນື້ອໃນບົດເພງ ແລະ ເວົ້າເປັນປະໂຫຍກຕາມຮູບພາບໄດ້ຊັດເຈນ.

## II. ເນື້ອໃນຕົ້ນຕໍ

1. ສ່ວນປະກອບ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາຫູ:

- ສ່ວນປະກອບຂອງຫູ: ໃບຫູ, ຮູຫູ; ຄຸນປະໂຫຍດຂອງຫູ: ໃຊ້ໄວ້ຟັງ, ຈຳແນກສຽງດັງຄ່ອຍ, ດັງແຮງຂອງຄົນ, ສັດ, ວັດຖຸສິ່ງຂອງທຳມະຊາດ, ເຄື່ອງດົນຕີ; ການບົວລະບັດຫູ: ເຊັດຫູດ້ວຍສຳລີ ຫຼື ຜ້າທີ່ສະອາດ, ລະວັງບໍ່ໃຫ້ນ້ຳ ແລະ ແມງໄມ້ເຂົ້າຫູ, ບໍ່ຟັງສຽງທີ່ດັງເກີນໄປ ແລະ ບໍ່ໃຊ້ຂອງແຂງແຫຍ່ຫູ.

2. ການຮ້ອງເພງ ຫູ, ເວົ້າຄຳສັບຕາມເນື້ອໃນບົດເພງ ແລະ ເວົ້າເປັນປະໂຫຍກຕາມຮູບພາບ:

- ຄຳສັບຕາມບົດເພງ: ໃບຫູ, ຮູຫູ, ສຽງດົນຕີ, ເຊັດຫູ, ສຳລີ, ຜ້າສະອາດ.
- ປະໂຫຍກຕາມຮູບພາບ: ເດັກນ້ອຍເຊັດຫູດ້ວຍຜ້າທີ່ສະອາດ, ບໍ່ຟັງສຽງດັງເກີນໄປ, ບໍ່ໃຊ້ຂອງແຂງແຫຍ່ຫູ.

## III. ສື່ການຮຽນ-ການສອນ

1. ເຄື່ອງດົນຕີ: ກະແຊັກ, ກອງ, ໄມ້, ກະປ໋ອງ; ບົດເພງ ຫູຂອງຫຼານ (ເບິ່ງປຶ້ມຄູ່ມືຄູ).
2. ຮູບພາບ: ຫູ, ເດັກນ້ອຍໃຊ້ຜ້າເຊັດຫູ, ເດັກນ້ອຍບໍ່ຟັງສຽງວິທະຍຸດັງ, ເດັກນ້ອຍບໍ່ເອົາໄມ້ແຍ່ຫູ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ, ສົນທະນາ, ເວົ້າຄຳສັບຕາມເນື້ອໃນບົດເພງ.
2. ໃຫ້ເດັກນ້ອຍສັງເກດຮູບພາບຫູ, ສົນທະນາກ່ຽວກັບສ່ວນປະກອບຂອງຫູ.
3. ນາຍຄູພາເດັກນ້ອຍປະຕິບັດຕົວຈິງໃນການຟັງສຽງເຄາະເຄື່ອງດົນຕີ, ສົນທະນາກ່ຽວກັບຄຸນປະໂຫຍດ ແລະ ການບົວລະບັດຮັກສາຫູ.
4. ນາຍຄູພາເດັກນ້ອຍເວົ້າເປັນປະໂຫຍກຕາມຮູບພາບ.
5. ໃຫ້ເດັກນ້ອຍເວົ້າຄືນການບົວລະບັດຮັກສາຫູ ແລະ ເວົ້າຄຳສັບຕາມບົດເພງ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການບົວລະບັດຮັກສາຫູ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກສ່ວນປະກອບ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາຫູ.
2. ການປະຕິບັດຕົວຈິງໃນການຟັງສຽງ.
3. ຄວາມຊັດເຈນໃນການເວົ້າຄຳສັບຕາມເນື້ອໃນບົດເພງ ແລະ ເວົ້າເປັນປະໂຫຍກຕາມຮູບພາບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນຕົວເລກ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຂີດຂຽນຕົວເລກ 0-1 ຕາມຮອຍຈ້ຳ ແລະ ຂຽນຕາມໃຈໄດ້ຖືກຕ້ອງ.
2. ຂີດຂຽນຕົວເລກ 0-1 ຕາມຮອຍຈ້ຳ ແລະ ຂຽນຕາມໃຈໄດ້ຈົບງາມ.
3. ອົດທົນໃນເວລາຂີດຂຽນຕົວເລກ.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນຕົວເລກ 0-1 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ.

### III. ສື່ການຮຽນ-ການສອນ

1. ສໍດຳ, ຢາງລຶບ, ປື້ມບົດເຝິກຫັດລະນິດສາດເຫຼັ້ມທີ 1 (ໜ້າທີ 1) ຫຼື ເຈ້ຍຕົວເລກ.
2. ບົດເພງ ຮ່າງກາຍຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຮ່າງກາຍຂອງຂ້ອຍ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຜ້າທີ່ພັບແລ້ວ, ສົນທະນາ ແລະ ບອກຂັ້ນຕອນການຂີດຂຽນຕົວເລກ 0-1 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຂີດຂຽນຕົວເລກ 0-1 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ຂັ້ນຕອນການຂີດຂຽນຕົວເລກ 0-1 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ມີຄວາມອົດທົນ ແລະ ເກັບຜົນງານໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຂີດຂຽນຕົວເລກ 0-1 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ.
2. ຄວາມຈົບງາມໃນການຂີດຂຽນຕົວເລກ 0-1 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ.
3. ຄວາມອົດທົນໃນເວລາຂີດຂຽນຕົວເລກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ຫຼິ້ນຜອງນໍ້າ, ຮ່ອນຊາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນຜອງນ້ຳ, ຮ່ອນຊາຍໄດ້ຖືກຕ້ອງ.
2. ຫຼິ້ນຜອງນໍ້າ, ຮ່ອນຊາຍໄດ້ຄ່ອງແຄ້ວ.
3. ຊ່ວຍເຫຼືອກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນຜອງນໍ້າ, ຮ່ອນຊາຍ.

### III. ສື່ການຮຽນ-ການສອນ

1. ຄຸນໍ້າ, ໂອ, ຊາມ, ຈອກ, ກະປ໋ອງ, ກະຕຸກເປົ່າ ແລະ ພາຖາດ.
2. ອ່າງຊາຍ, ຊວ້ານນ້ອຍ ແລະ ເຂີງນ້ອຍ.
3. ວິທີຫຼິ້ນ (ເບິ່ງປື້ມຄູ່ມືຄູ).
4. ບົດເພງ ຮ່າງກາຍຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກນ້ອຍ ຮ້ອງເພງ ຮ່າງກາຍຂອງຂ້ອຍ ປະກອບທ່າທາງ.
2. ນາຍຄູສະເໜີການຫຼິ້ນຜອງນໍ້າ, ຮ່ອນຊາຍ, ສາທິດວິທີຫຼິ້ນ ແລະ ຂັ້ນຕອນໃນການຫຼິ້ນແບບຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນຜອງນໍ້າ, ຮ່ອນຊາຍ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ບໍ່ຫົດນໍ້າ ແລະ ຫວ່ານຊາຍໃສ່ກັນ.
6. ໃຫ້ເດັກນ້ອຍເຮັດທ່າທາງລອຍນໍ້າ, ຫຼັງຈາກນັ້ນ ໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນຜອງນໍ້າ, ຮ່ອນຊາຍ.
2. ຄວາມຄ່ອງແຄ້ວໃນການຫຼິ້ນຜອງນໍ້າ, ຮ່ອນຊາຍ.
3. ການຊ່ວຍເຫຼືອກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຮູບສາມແຈຕາມແບບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ລຽນລຳດັບຮູບສາມແຈຕາມແບບໄດ້ຖືກຕ້ອງ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການລຽນລຳດັບຮູບສາມແຈຕາມແບບ: ນ້ອຍ, ກາງ, ໃຫຍ່.

### III. ສື່ການຮຽນ-ການສອນ

1. ແຜ່ນເກມລຽນລຳດັບຮູບສາມແຈຕາມແບບ: ນ້ອຍ, ກາງ, ໃຫຍ່ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບຄຸນປະໂຫຍດຂອງຫູ: ເດັກນ້ອຍຟັງວິທະຍຸ, ຟັງໂທລະໂຄ່ງ, ຟັງເທັບ.
3. ບົດເພງ ຫູຂອງຫຼານ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຫູຂອງຫຼານ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່ ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມລຽນລຳດັບຮູບສາມແຈຕາມແບບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບໃນເກມ.
2. ຄວາມຖືກຕ້ອງໃນການລຽນລຳດັບຮູບສາມແຈຕາມແບບ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ມຸມ ແລະ ຊື່ເຄື່ອງຫຼິ້ນຕາມມຸມ.
2. ຫຼິ້ນບົດບາດສົມມຸດເປັນອ້າຍ, ເອື້ອຍ, ນ້ອງ ແລະ ເປັນທ່ານໝໍນ້ອຍໄດ້ມ່ວນຊື່ນ.
3. ອ່ານອອກສຽງຄຳສັບທີ່ມີສະຫຼະ ×າ ແລະ ເວົ້າຊື່ສ່ວນຕ່າງໆໃນຮ່າງກາຍຂອງຄົນຕາມຮູບພາບໄດ້ຊັດເຈນ.
4. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ມຸມ ເຄື່ອງຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມອ່ານ.
2. ການຫຼິ້ນບົດບາດສົມມຸດເປັນເອື້ອຍ ຫຼື ອ້າຍອາບນ້ຳໃຫ້ນ້ອງ; ເປັນທ່ານໝໍນ້ອຍກວດຫູໃຫ້ຄົນເຈັບ.
3. ການສັງເກດ, ອ່ານອອກສຽງຄຳສັບທີ່ມີ ×າ: ຕາ ຝາ ຢາ ນາ ຂາ ງາ ແລະ ເວົ້າຊື່ສ່ວນຕ່າງໆໃນຮ່າງກາຍຂອງຄົນຕາມຮູບພາບ.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ຕຸກກະຕາ, ຊາມນ້ຳ, ຜ້າເຊັດຕົວ, ຊຸດທ່ານໝໍນ້ອຍ, ເຄື່ອງມືໝໍຈຳລອງ ຫຼື ຂອງຈິງ.
2. ມຸມອ່ານ: ປຶ້ມບົດເຝິກຫັດພາສາລາວເຫຼັ້ມ 1 (ໜ້າ 3) ຫຼື ບັດຄຳສັບ: ຕາ ຝາ ຢາ ນາ ຂາ ງາ, ຮູບພາບຮ່າງກາຍຂອງຄົນ.
3. ບົດເພງ ຫູຂອງຫຼານ ແລະ ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງ ເພງ ຫູຂອງຫຼານ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ມຸມ, ເຄື່ອງຫຼິ້ນໃນມຸມ ແລະ ແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ ແລະ ຊື່ເຄື່ອງຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນອ້າຍ, ເອື້ອຍ, ນ້ອງ ແລະ ເປັນທ່ານໝໍນ້ອຍ.
3. ຄວາມຊັດເຈນໃນການອ່ານອອກສຽງຄຳສັບທີ່ມີສະຫຼະ ×າ ແລະ ເວົ້າຊື່ສ່ວນຕ່າງໆໃນຮ່າງກາຍຂອງຄົນຕາມຮູບພາບ.
4. ການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດເພງ ຫູຂອງຫຼານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງໄດ້ຖືກຕ້ອງ.
2. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ ຫູຂອງຫຼານ.

### III. ສື່ການຮຽນ-ການສອນ

1. ກອງ.
2. ບົດເພງ ຫູຂອງຫຼານ.
3. ທ່າຫັດກາຍະບໍລິຫານຂາ ແລະ ທ້ອງ-ຫຼັງ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານຂາ ແລະ ທ້ອງ-ຫຼັງ: ທ່າເຕັ້ນຂຶ້ນ ແລະ ທ່າທ້ອງຫຼັງກົ້ມຕົວລົງທາງໜ້າ-ເງີຍຂຶ້ນແອນຕົວໄປທາງຫຼັງ.
2. ໃຫ້ເດັກນ້ອຍເຕັ້ນໄປທາງໜ້າ ແລະ ຫຼັງຕາມສຽງເຄາະ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຢ່ອງຢັ້ເອົາແຂນໄຂ່ວກັນວາງເທິງຫົວເຂົ່າ, ເງີຍໜ້າຂຶ້ນຫາຍໃຈເຂົ້າ, ກົ້ມໜ້າລົງຫາຍໃຈອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
2. ການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

# ກິດຈະກຳການວົງມົນ

## ຫົວຂໍ້: ດັງ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກສ່ວນປະກອບ, ຄຸນປະໂຫຍດ ແລະການບົວລະບັດຮັກສາດັງໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງການດົມກິ່ນ.
3. ເລົ່າຄຳຄ່ອງ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດຄຳຄ່ອງໄດ້ຊັດເຈນ.

## II. ເນື້ອໃນຕົ້ນຕໍ

1. ສ່ວນປະກອບ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາດັງ:
   - ສ່ວນປະກອບ: ໂຄງດັງ ແລະ ຮູດັງ; ຄຸນປະໂຫຍດ: ໃຊ້ໄວ້ຫາຍໃຈ ແລະ ດົມກິ່ນຕ່າງໆທີ່ຢູ່ຮອບຕົວ ເຊັ່ນ: ຫອມ, ເໝັນ, ຂີວ, ຄາວ;
   - ການບົວລະບັດຮັກສາ: ເຊັດດັງໃຫ້ສະອາດ, ສັ່ງ ແລະ ເຊັດຂີ້ມູກອອກຈາກດັງດ້ວຍຜ້າທີ່ສະອາດ ຫຼື ເຈ້ຍເຊັດທີ່ອ່ອນນຸ້ມ.
2. ການເລົ່າຄຳຄ່ອງ ດັງສະອາດ, ເວົ້າຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ.
   - ຄຳສັບ: ດັງ, ຫາຍໃຈ, ດົມກິ່ນ, ກິ່ນເໝັນ, ກິ່ນຫອມ, ກິ່ນຄາວ, ເຊັດດັງ.
   - ປະໂຫຍກ: ຂ້ອຍເຊັດດັງໃຫ້ສະອາດ, ດັງຂອງຂ້ອຍໃຊ້ໄວ້ຫາຍໃຈ, ດັງໃຊ້ໄວ້ດົມກິ່ນ.

## III. ສື່ການຮຽນ-ການສອນ

1. ດອກດາວເຮືອງ, ດອກຈຳປາ, ປາດິບ, ກະປິ; ຮູບພາບ ດັງ.
2. ບົດຄຳຄ່ອງ ດັງສະອາດ (ເບິ່ງປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ, ສົນທະນາ, ເວົ້າຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນຄຳຄ່ອງ.
2. ໃຫ້ເດັກສັງເກດຮູບພາບດັງ, ສົນທະນາກ່ຽວກັບສ່ວນປະກອບຂອງດັງ.
3. ໃຫ້ເດັກນ້ອຍປະຕິບັດຕົວຈິງກ່ຽວກັບການດົມກິ່ນ, ສົນທະນາກ່ຽວກັບຄຸນປະໂຫຍດ ແລະ ການບົວລະບັດຮັກສາຂອງດັງ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຄຸນປະໂຫຍດ ແລະ ການບົວລະບັດຮັກສາດັງ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການບົວລະບັດຮັກສາດັງ ແລະ ຄວາມສາມັກຄີກັນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກສ່ວນປະກອບ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາດັງ.
2. ຄວາມຊັດເຈນໃນການເລົ່າຄຳຄ່ອງ, ເວົ້າຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ.
3. ການປະຕິບັດຕົວຈິງໃນການດົມກິ່ນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ແຕ້ມ ແລະ ຕັດ-ຕິດຮູບເລຂາຄະນິດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນໃນການແຕ້ມ ແລະ ຕັດ, ຕິດຮູບວົງມົນ, ສາມແຈ,ຈະຕຸລັດ ແລະ ສີ່ແຈໄດ້ຖືກຕ້ອງ.
2. ແຕ້ມ, ຕັດ, ຕິດ, ຮູບວົງມົນ, ສາມແຈ, ຈະຕຸລັດ ແລະ ສີ່ແຈປະກອບເປັນຮູບຄົນໄດ້ຈົບງາມ.
3. ມີຄວາມອົດທົນໃນການແຕ້ມ, ຕັດ, ຕິດ,

### II. ເນື້ອໃນຕົ້ນຕໍ

ການແຕ້ມ ແລະ ຕັດ, ຕິດຮູບວົງມົນ, ສາມແຈ, ຈະຕຸລັດ ແລະ ສີ່ແຈປະກອບເປັນຮູບຄົນ.

### III. ສື່ການຮຽນ-ການສອນ

1. ສໍດຳ ແລະ ເຈ້ຍຂາວ.
2. ມີດຕັດປາຍມົນ.
3. ກາວສຳເລັດຮູບ ຫຼື ເຂົ້າໜຽວຕົ້ມ.
4. ຮູບ ວົງມົນ, ສາມແຈ, ຈະຕຸລັດ ແລະ ສີ່ແຈທີ່ຕັດແລ້ວ.
5. ແບບຮູບຄົນທີ່ຕິດແລ້ວ.
6. ຊາມນ້ຳ, ຜ້າເຊັດມື ແລະ ສະບູ.
7. ບົດຄຳຄ່ອງ ດັງວະອາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ດັງສະອາດ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຮູບຄົນ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການແຕ້ມ, ຕັດ ແລະ ຕິດ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການແຕ້ມ ແລະ ຕັດ, ຕິດຮູບວົງມົນ, ສາມແຈ, ຈະຕຸລັດ ແລະ ສີ່ແຈປະກອບເປັນຮູບຄົນ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການແຕ້ມ ແລະ ຕັດ, ຕິດຮູບວົງມົນ, ສາມແຈ, ຈະຕຸລັດ ແລະ ສີ່ແຈປະກອບເປັນຮູບຄົນ.
6. ສຶກສາອົບຮົມເດັກ ກ່ຽວກັບຄວາມສາມັກຄີ, ມີຄວາມອົດທົນ ແລະ ເກັບຜົນງານໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການແຕ້ມ ແລະ ຕັດ, ຕິດຮູບວົງມົນ, ສາມແຈ,ຈະຕຸລັດ ແລະ ສີ່ແຈ.
2. ຄວາມຈົບງາມໃນການແຕ້ມ, ຕັດ, ຕິດ, ຮູບວົງມົນ, ສາມແຈ, ຈະຕຸລັດ ແລະ ສີ່ແຈປະກອບເປັນຮູບຄົນ.
3. ຄາມອົດທົນໃນການແຕ້ມ, ຕັດ, ຕິດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນເຕັ້ນເຊືອກ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນເຕັ້ນເຊືອກໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນເຕັ້ນເຊືອກໄດ້ຖືກຕ້ອງ.
3. ມີຄວາມຄ່ອງແຄ້ວໃນເວລາຫຼິ້ນແບບຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນເຕັ້ນເຊືອກ.

### III. ສື່ການຮຽນ-ການສອນ

1. ເຊືອກ.
2. ກອງ.
3. ຄຳຄ່ອງ ດັງສະອາດ
4. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າ ຄຳຄ່ອງ ດັງສະອາດ ປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນເຕັ້ນເຊືອກ ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນ ເຕັ້ນເຊືອກ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນໃຫ້ມີຄວາມອົດທົນ, ມີຄວາມສາມັກຄີໃນເວລາຫຼິ້ນ
6. ໃຫ້ເດັກນ້ອຍເຮັດທ່າທາງດົມດອກໄມ້, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນເຕັ້ນເຊືອກ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນ ເຕັ້ນເຊືອກ.
3. ຄວາມຄ່ອງແຄ້ວໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ລຽນລຳດັບຮູບພາບເດັກນ້ອຍຖູແຂ້ວ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ລຽນລຳດັບຮູບພາບເດັກນ້ອຍຖູແຂ້ວໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການລຽນລຳດັບຮູບພາບເດັກນ້ອຍຖູແຂ້ວ: ຖູແຂ້ວເບື້ອງເທິງດ້ານນອກຊ້າຍ-ຂວາ, ຖູແຂ້ວເບື້ອງເທິງດ້ານໃນຊ້າຍ-ຂວາ, ຖູແຂ້ວເບື້ອງລຸ່ມດ້ານນອກຊ້າຍ-ຂວາ, ຖູແຂ້ວເບື້ອງລຸ່ມດ້ານໃນຊ້າຍ-ຂວາ, ຖູແຂ້ວທາງຂ້າງບ່ອນກົກແຂ້ວຖູໄປມາຊ້າຍ-ຂວາ, ງັບແຂ້ວເຂົ້າຫາກັນຖູແປງໄປມາຊ້າຍ-ຂວາ, ເອົາລີ້ນອອກມາແລ້ວຖູແປງໄປມາ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມເກມລຽນລຳດັບຮູບພາບເດັກນ້ອຍຖູແຂ້ວ: ຖູແຂ້ວເບື້ອງເທິງດ້ານນອກຊ້າຍ-ຂວາ, ຖູແຂ້ວເບື້ອງ ເທິງດ້ານໃນຊ້າຍ-ຂວາ, ຖູແຂ້ວເບື້ອງລຸ່ມດ້ານນອກຊ້າຍ-ຂວາ, ຖູແຂ້ວເບື້ອງລຸ່ມດ້ານໃນຊ້າຍ-ຂວາ, ຖູແຂ້ວທາງຂ້າງບ່ອນກົກແຂ້ວຖູໄປມາຊ້າຍ-ຂວາ, ງັບແຂ້ວເຂົ້າຫາກັນຖູແປງໄປມາຊ້າຍ-ຂວາ, ເອົາລີ້ນອອກມາແລ້ວຖູແປງໄປມາ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມລຽນລຳດັບຮູບສາມແຈຕາມແບບ: ນ້ອຍ, ກາງ, ໃຫຍ່.
3. ບົດຄຳຄ່ອງ ດັງສະອາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ດັງສະອາດ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່ ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມລຽນລຳດັບຮູບພາບເດັກນ້ອຍຖູແຂ້ວ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການລຽນລຳດັບຮູບພາບເດັກນ້ອຍຖູແຂ້ວ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ຫຼິ້ນບົດບາດສົມມຸດເປັນພໍ່ຄ້າ-ແມ່ຄ້າ ແລະ ລູກຄ້າຢ່າງມ່ວນຊື່ນ.
3. ລຽນລຳດັບຮູບສາມແຈຕາມແບບ ແລະ ຈັບຄູ່ທີ່ຄືກັນຮູບພາບຄຸນປະໂຫຍດຂອງຫູໄດ້ຖືກຕ້ອງ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ.
2. ການຫຼິ້ນບົດບາດສົມມຸດເປັນພໍ່ຄ້າ-ແມ່ຄ້າຂາຍດອກໄມ້ ແລະ ລູກຄ້າຊື້ດອກໄມ້.
3. ການຫຼິ້ນເກມລຽນລຳດັບຮູບສາມແຈຕາມແບບ: ນ້ອຍ, ກາງ, ໃຫຍ່ ແລະ ການຈັບຄູ່ທີ່ຄືກັນຮູບພາບຄຸນປະໂຫຍດຂອງຫູ: ເດັກນ້ອຍຟັງວິທະຍຸ, ຟັງໂທລະໂຄ່ງ, ຟັງເທັບ.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ດອກໄມ້ຈຳລອງ ຫຼື ຂອງຈິງ, ກະຕ່າ, ເຈ້ຍບັດເງິນ.
2. ມຸມເກມການສຶກສາ: ແຜ່ນເກມລຽນລຳດັບຮູບສາມແຈຕາມແບບ: ນ້ອຍ, ກາງ, ໃຫຍ່ ແລະ ແຜ່ນເກມ, ຈັບຄູ່ທີ່ຄືກັນຮູບພາບຄຸນປະໂຫຍດຂອງຫູ: ເດັກນ້ອຍຟັງວິທະຍຸ, ຟັງໂທລະໂຄ່ງ, ຟັງເທັບ.
3. ບົດຄຳຄ່ອງ ດັງສະອາດ ແລະ ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ດັງສະອາດ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ ແລະ ເຄື່ອງຫຼິ້ນຕາມມຸມ ແລະ ແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມ ການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນພໍ່ຄ້າ-ແມ່ຄ້າ ແລະ ລູກຄ້າ.
3. ຄວາມຖືກຕ້ອງໃນການລຽນລຳດັບຮູບສາມແຈຕາມແບບ ແລະ ຈັບຄູ່ທີ່ຄືກັນຮູບພາບຄຸນປະໂຫຍດຂອງຫູ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ ດັງສະອາດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງໄດ້ຖືກຕ້ອງ.
2. ມ່ວນຊື່ນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ ດັງສະອາດ.

### III. ສື່ການຮຽນ-ການສອນ

1. ກອງ.
2. ບົດຄຳຄ່ອງ ດັງສະອາດ.
3. ທ່າຫັດກາຍະບໍລິຫານຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານຂາ ທ່າເຍ່ງແຍ້.
2. ໃຫ້ເດັກນ້ອຍຍ່າງຢ້ຳເທົ້າຕາມຈັງຫວະສຽງກອງຊ້າ-ໄວ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຢືນເອົາມືກອດເອິກຫຼັບຕາຫາຍໃຈເຂົ້າ-ອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຄວາມມ່ວນຊື່ນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ.
2. ຄວາມມ່ວນຊື່ນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ປາກ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກສ່ວນປະກອບ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາປາກໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງການຖູແຂ້ວ.
3. ເລົ່າຄຳຄ່ອງ, ເວົ້າຄຳສັບ, ເວົ້າປະໂຫຍກໃນບົດຄຳຄ່ອງ ແລະ ເວົ້າເປັນປະໂຫຍກຕາມຮູບພາບໄດ້ຊັດເຈນ.

## II. ເນື້ອໃນຕົ້ນຕໍ

1. ສ່ວນປະກອບ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາປາກ:
   - ສ່ວນປະກອບ: ຮີມປາກ, ແຂ້ວ, ລີ້ນ; ຄຸນປະໂຫຍດຂອງປາກ: ແຂ້ວໃຊ້ໄວ້ຫຍ້ຳອາຫານ, ລີ້ນໃຊ້ໄວ້ຊີມລົດຊາດຫວານ, ສົ້ມ, ເຜັດ, ເຄັມ, ຂົມຫວານຂອງອາຫານ.
   - ການບົວລະບັດຮັກສາປາກ: ຖູແຂ້ວຖືກຕາມວິທີ, ຂັ້ນຕອນ, ບ້ວນປາກດ້ວຍນ້ຳ ແລະ ເຊັດປາກດ້ວຍຜ້າທີ່ສະອາດ.
2. ການເລົ່າຄຳຄ່ອງ ປາກສະອາດ, ເວົ້າຄຳສັບຕາມເນື້ອໃນຄຳຄ່ອງ ແລະ ເວົ້າເປັນປະໂຫຍກຕາມຮູບພາບ.
   - ຄຳສັບຕາມຄຳຄ່ອງ: ປາກ, ແຂ້ວ, ສົ້ມ, ຫວານ, ເຄັມ, ຈາງ, ເຜັດ, ຝາດ, ຖູແຂ້ວ.
   - ປະໂຫຍກຕາມຮູບພາບ: ແຂ້ວໃຊ້ໄວ້ຫຍ້ຳອາຫານ, ລີ້ນໃຊ້ໄວ້ຊີມລົດຊາດ.

## III. ສື່ການຮຽນ-ການສອນ

1. ໝາກນາວ, ໝາກເຜັດ, ເກືອ, ນ້ຳຫວານ, ຜັກກະເດົາ, ນ້ຳສະອາດ, ແປງຖູແຂ້ວ, ຢາຖູແຂ້ວ, ຜ້າເຊັດໜ້າ; ບົດຄຳຄ່ອງ ປາກສະອາດ (ເບິ່ງປຶ້ມຄູ່ມືຄູ).
2. ຮູບພາບປາກ, ແຂ້ວລີ້ນ, ໂປສະເຕີຂັ້ນຕອນການຖູແຂ້ວ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ, ສົນທະນາ, ເວົ້າຄຳສັບຕາມເນື້ອໃນບົດຄຳຄ່ອງ.
2. ໃຫ້ເດັກນ້ອຍສັງເກດຮູບປາກ, ແຂ້ວ, ລີ້ນ, ສົນທະນາກ່ຽວກັບສ່ວນປະກອບຂອງປາກ ແລະ ເວົ້າເປັນປະໂຫຍກຕາມຮູບພາບ.
3. ໃຫ້ເດັກນ້ອຍປະຕິບັດຕົວຈິງກ່ຽວການຊີມລົດຊາດຂອງອາຫານ, ສົນທະນາກ່ຽວກັບຄຸນ ປະໂຫຍດ, ການບົວລະບັດຮັກສາປາກ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງໃນການບົວລະບັດຮັກສາປາກຕາມຂັ້ນຕອນໃນໂປສະເຕີ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການກິນອາຫານ ແລະ ການບົວລະບັດຮັກສາປາກ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກສ່ວນປະກອບ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາປາກ.
2. ການປະຕິບັດຕົວໃນການຖູແຂ້ວ.
3. ຄວາມຊັດເຈນໃນການເວົ້າຄຳສັບ, ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ ແລະ ຕາມຮູບພາບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນສະຫຼະ ×າ, ຕົວສະກົດຕາມຄຳສັບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຂີດຂຽນສະຫຼະ ×າ, ຕົວສະກົດຕາມຄຳສັບໄດ້ຖືກຕ້ອງ.
2. ຂີດຂຽນສະຫຼະ ×າ, ຕົວສະກົດຕາມຄຳສັບໄດ້ຈົບງາມ.
3. ມີຄວາມອົດທົນໃນການຂີດຂຽນສະຫຼະ ×າ, ຕົວສະກົດຕາມຄຳສັບ.

### II. ເນື້ອໃນຕົ້ນຕໍ

ຂີດຂຽນສະຫຼະ ×າ, ຕົວສະກົດຕາມຄຳສັບ: ຈານ, ຟານ, ຫາງ, ຫາມ, ຫາບ, ພາຍ, ດາວ, ປາກ.

### III. ສື່ການຮຽນ-ການສອນ

1. ສໍດຳ, ຢາງລຶບ.
2. ປຶ້ມບົດຝຶກຫັດພາສາລາວເຫຼັ້ມທີ 1 (ໜ້າທີ 4) ຫຼື ເຈ້ຍແບບຂຽນຄຳສັບ: ຈານ, ຟານ, ຫາງ, ຫາມ, ຫາບ, ພາຍ, ດາວ, ປາກ.
3. ບົດຄຳຄ່ອງ ໃບໜ້າສະອາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ປາກສະອາດ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດສະຫຼະ ×າ, ຕົວສະກົດຕາມຄຳສັບ ແລ້ວອ່ານຄຳສັບ, ສົນທະນາ ແລະ ບອກຂັ້ນຕອນການຂີດຂຽນສະຫຼະ ×າ, ຕົວສະກົດຕາມຄຳສັບ.
3. ນາຍຄູແນະນຳ, ສາທິດ ແລະ ຂັ້ນຕອນການຂີດຂຽນສະຫຼະ ×າ, ຕົວສະກົເດຕາມຄຳສັບ: ຈານ, ຟານ, ຫາງ, ຫາມ, ຫາບ, ພາຍ, ດາວ, ປາກ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍນຳສະເໜີຜົນງານການ ແລະ ຂັ້ນຕອນການຂີດຂຽນສະຫຼະ ×າ, ຕົວສະກົດຕາມຄຳສັບ. ສຶກສາອົບຮົມເດັກນ້ອຍ ກ່ຽວກັບຄວາມສາມັກຄີ, ມີຄວາມອົດທົນ ແລະ ເກັບຜົນງານໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຂີດຂຽນສະຫຼະ ×າ, ຕົວສະກົດຕາມຄຳສັບ.
2. ຄວາມສະອາດຈົບງາມໃນການຂີດຂຽນສະຫຼະ ×າ, ຕົວສະກົດຕາມຄຳສັບ.
3. ຄວາມອົດທົນຂອງໃນການຂີດຂຽນສະຫຼະ ×າ, ຕົວສະກົດຕາມຄຳສັບ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ແຂ່ງຂັນເຕັ້ນກົບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນກົບໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນ ແຂ່ງຂັນເຕັ້ນກົບໄດ້ຖືກຕ້ອງ.
3. ມີຄວາມອົດທົນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ແຂ່ງຂັນເຕັ້ນກົບ.

### III. ສື່ການຮຽນ-ການສອນ

1. ໝາກຫວີດ ແລະ ກອງ.
2. ຄຳຄ່ອງ ປາກນ້ອຍສະອາດ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ປາກນ້ອຍສະອາດ ປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນແຂ່ງຂັນເຕັ້ນກົບສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ.
3. ໃຫ້ເດັກນ້ອຍຫຼິ້ນແຂ່ງຂັນເຕັ້ນກົບ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນໃຫ້ມີຄວາມອົດທົນ, ວອງໄວ ແລະ ມີຄວາມສາມັກຄີກັນໃນການຫຼິ້ນ.
6. ໃຫ້ເດັກນ້ອຍເອົາມືຄ້ຳແອວຍືດຕົວຂຶ້ນສູງໆ ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແຂ່ງຂັນເຕັ້ນກົບ.
2. ຄວາມຖືກຕ້ອງໃນການຫຼິ້ນແຂ່ງຂັນເຕັ້ນກົບ.
3. ຄວາມອົດທົນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຮູບພາບການບົວລະບັດຮັກສາເລົາຄີງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ລຽນລຳດັບຮູບພາບການບົວລະບັດຮັກສາເລົາຄີງໄດ້ຖືກຕ້ອງ.
3. ແບ່ງປັນເກມໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການລຽນລຳດັບຮູບພາບການບົວລະບັດຮັກສາເລົາຄີງ: ເດັກນ້ອຍອາບນ້ຳ, ເຊັດຕົວ ແລະ ນຸ່ງເຄື່ອງ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມລຽນລຳດັບຮູບພາບການບົວລະບັດຮັກສາເລົາຄີງ: ເດັກນ້ອຍອາບນ້ຳ, ເຊັດຕົວ ແລະ ນຸ່ງເຄື່ອງ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມລຽນລຳດັບຮູບພາບເດັກນ້ອຍຖູແຂ້ວ: ຖູແຂ້ວເບື້ອງເທິງດ້ານນອກຊ້າຍ-ຂວາ, ຖູແຂ້ວເບື້ອງເທິງດ້ານໃນຊ້າຍ-ຂວາ, ຖູແຂ້ວເບື້ອງລຸ່ມດ້ານນອກຊ້າຍ-ຂວາ, ຖູແຂ້ວເບື້ອງລຸ່ມດ້ານໃນຊ້າຍ- ຂວາ, ຖູແຂ້ວທາງຂ້າງບ່ອນກົກແຂ້ວໄປມາຊ້າຍ-ຂວາ, ງັບແຂ້ວເຂົ້າຫາກັນຖູແປງໄປມາຊ້າຍ-ຂວາ, ເອົາລີ້ນອອກມາແລ້ວຖູແປງໄປມາ.
3. ບົດຄຳຄ່ອງ ປາກສະອາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ປາກສະອາດ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່ ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມລຽນລຳດັບຮູບພາບການບົວລະບັດຮັກສາເລົາຄີງ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການລຽນລຳດັບຮູບພາບການບົວລະບັດຮັກສາເລົາຄີງ.
3. ການແບ່ງປັນເກມໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ  ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ຫຼິ້ນເຄື່ອງດົນຕີ ແລະ ຕໍ່ບຼັອກເປັນຮູບຕ່າງໆຕາມຈິນຕະນາການຢ່າງມ່ວນຊື່ນ.
3. ຂີດຂຽນສະຫຼະ ×າ ຕາມຄຳສັບ; ແຕ້ມ, ຕັດ, ຕິດຮູບຄົນໄດ້ຖືກຕ້ອງ.
4. ເກັບມ້ຽນເຄື່ອງຫຼິ້ນໄວ້ຖືກບ່ອນທີ່ກຳນົດ.

### II. ເນື້ອໃນຕົ້ນຕໍ

1. ຊື່ມຸມ, ເຄື່ອງຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
2. ການຫຼິ້ນເຄື່ອງດົນຕີ: ຕີກອງ, ຕີລະນາດ, ຈັບໄມໂຄຼໂຟນຮ້ອງເພງ, ຕໍ່ບຼັອກເປັນຮູບຕ່າງໆຕາມຈິນຕະນາການ.
3. ການສັງເກດ ແລະ ຂີດຂຽນສະຫຼະ ×າ ຕາມຄຳສັບ: ຕາ, ຝາ, ຢາ, ນາ, ຂາ, ງາ; ແຕ້ມ, ຕັດ, ຕິດຮູບຄົນໂດຍນຳໃຊ້ຮູບວົງມົນ, ສາມແຈ, ຈະຕຸລັດ, ສີ່ແຈ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ເຄື່ອງດົນຕີຂອງຈິງ ຫຼື ຈຳລອງກອງ, ລະນາດ, ໄມໂຄຼໂຟນ, ຊຸດໄມ້ບຼັອກ.
2. ມຸມສິລະປະສ້າງສັນ: ປຶ້ມບົດເຝິກຫັດພາສາລາວເຫຼັ້ມ 1 (ໜ້າ 3) ຫຼື ເຈ້ຍແບບຂຽນສະຫຼະ ×າ ຕາມຄຳສັບ: ຕາ, ຝາ, ຢາ, ນາ, ຂາ, ງາ. ເຈ້ຍຮູບວົງມົນ, ສາມແຈ, ຈະຕຸລັດ ແລະ ສີ່ແຈ; ມີດຕັດ, ກາວ, ໄມ້ທາກາວ, ສໍສີໄມ້ ຫຼື ສີທຽນ.
3. ບົດຄຳຄ່ອງ ປາກສະອາດ ແລະ ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ປາກສະອາດ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ມຸມ, ເຄື່ອງຫຼິ້ນຕາມມຸມ ແລະ ແນະນຳວິທີຫຼິ້ນໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນໄວ້ຖືກບ່ອນທີ່ກຳນົດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນເຄື່ອງດົນຕີ ແລະ ຕໍ່ບຼັອກເປັນຮູບຕ່າງໆຕາມຈິນຕະນາການ.
3. ຄວາມຖືກຕ້ອງໃນການຂີດຂຽນສະຫຼະ ×າ ຕາມຄຳສັບ; ແຕ້ມ, ຕັດ, ຕິດຮູບຄົນ.
4. ການເກັບມ້ຽນເຄື່ອງຫຼິ້ນໄວ້ຖືກບ່ອນທີ່ກຳນົດ.

# ຈຸດປະສົງສຳລັບອາທິດທີ 3

## ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງໄດ້ຖືກຕ້ອງ.
2. ສະແດງທ່າທາງຕາມນາຍຄູອອກແບບ ຢ່າງປະກອບການນັບໄດ້ຖືກຕ້ອ.
3. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູແນະນຳໄດ້ຖືກຕ້ອງ.
4. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
5. ອົດທົນໃນເວລາສະແດງທ່າທາງ.
6. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.
7. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກສ່ວນປະກອບ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາເລົ້າຄົງໄດ້ຖືກຕ້ອງ
2. ຮ້ອງເພງດ້ວຍຄວາມເບີກບານມ່ວນຊື່ນ.
3. ເລົ່າຄຳຄ່ອງ, ເວົ້າເປັນຄຳສັບ, ເປັນປະໂຫຍກຕາມເນື້ອໃນຄຳຄ່ອງ, ບົດເພງ, ນິທານ ແລະ ຕາມຮູບພາບໄດ້ຊັດເຈນ.
4. ບອກສ່ວນປະກອບ ແລະ ຄຸນປະໂຫຍດຂອງແຂນ ແລະ ຂາໄດ້ຖືກຕ້ອງ.
5. ປະຕິບັດຕົວຈິງໃນການຈັບບາຍວັດຖຸສິ່ງຂອງ, ການລ້າງມື ແລະ ການໃສ່ເກີບ.
6. ມີຄວາມມ່ວນຊື່ນ ແລະ ມີມາລະຍາດໃນການຟັງນິທານ.
7. ບອກການບົວລະບັດຮັກສາມື ແລະ ຕີນໄດ້ຖືກຕ້ອງ.
8. ອ່ານອອກສຽງຄຳສັບທີ່ມີຕົວສະກົດ: ກ, ງ, ບ, ມ.ໄດ້ຊັດເຈນ.
9. ບອກຜົນການຮວມກຸ່ມຮູບພາບມື 1-5 ໄດ້ຖືກຕ້ອງ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຢອດສໃສ່ຮູບພາບເສື້ອ, ພິມສໃສ່ຮູບພາບມື, ຕັດ-ຕິດຮູບພາບມື, ພົ່ນສີໃສ່ຮູບພາບຕີນ ແລະ ຂັ້ນຕອນການຕັດ-ຕິດໄດ້ຖືກຕ້ອງ.
2. ຢອດສີໃສ່ຮູບພາບເສື້ອ, ພິມສີຮູບຝາມື ແລະ ພົ່ນສີໃສ່ຮູບພາບຕີນໄດ້ສະອາດຈົບງາມ.
3. ຕັດ, ຕິດຮູບພາບມື ແລະ ຕັດ, ຕິດຮູບພາບເກີບໄດ້ຈົບງາມ.
4. ເຝິກໃຫ້ເດັກມີຄວາມລະມັດລະວັງໃນການຢອດສີໃສ່ຮູບພາບເສື້ອ, ພົ່ນສີໃສ່ຮູບພາບຕີນ ແລະ ພິມສີຮູບຝາມື.
5. ມີຄວາມອົດທົນໃນການຕັດ- ຕິດຮູບພາບມື ແລະ ຕັດ, ຕິດຮູບພາບເກີບ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນປ້ອງກັນຕົວ, ແຂ່ງຂັນໂຍນບານເຂົ້າວົງມົນ, ພິມຮູບຕ່າງໆດ້ວຍດິນຊາຍ, ຊອກຫາເພື່ອນ, ແຂ່ງຂັນຍ່າງແຢ່ງແຢ້ປາຍຕີນໄດ້.

2. ຫຼິ້ນແບບຫຼິ້ນປ້ອງກັນຕົວ, ແຂ່ງຂັນໂຍນບານເຂົ້າວົງມົນ, ພິມຮູບຕ່າງໆດ້ວຍດິນຊາຍ, ຊອກຫາເພື່ອນ, ແຂ່ງຂັນຍ່າງແຍ່ງແຍ້ປາຍຕີນໄດ້ຖືກຕ້ອງ.
3. ມີຄວາມປອດໄພໃນເວລາຫຼິ້ນ.
4. ມີຄວາມອົດທົນໃນເວລາຫຼິ້ນ.
5. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງ.
6. ເບີກບານມ່ວນຊື່ນໃນ ເວລາຫຼິ້ນ.
7. ເຝິກຄວາມແຂງແຮງຂອງ ປາຍຕີນ ແລະ ກ້າມຊີ້ນຂາ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:
1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ລຽນລຳດັບຮູບຈະຕຸລັດຕາມແບບ, ລຽນລຳດັບຮູບສີ່ແຈຕາມແບບ. ລຽນລຳດັບຮູບພາບເດັກນ້ອຍລ້າງມື, ລຽນລຳດັບຮູບພາບການບົວລະບັດຮັກສາຕີນໄດ້ຖືກຕ້ອງ.
3. ຕໍ່ຮູບພາບເດັກນ້ອຍເຕະບານໄດ້ຖືກຕ້ອງ.
4. ອົດທົນໃນເວລາຫຼິ້ນເກມ.
5. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.
6. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:
1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນເຄື່ອງດົນຕີ, ຕໍ່ບ໋ອກເປັນຮູບຕ່າງໆຕາມຈິນຕະນາການ, ພິມຄຳສັບທີ່ມີສະຫຼະ ×າ: ຕາ, ຝາ, ຢາ, ບາ, ງາ, ຂາ ໃສ່ອ່າງດິນຊາຍ, ວາງຮູບເລຂາຄະນິດສະຫຼັບສີກັນຕາມແບບຢ່າງມ່ວນຊື່ນ.
3. ຢອດສີໃສ່ຮູບພາບເສື້ອ, ຕັດ-ຕິດຮູບພາບມື , ພິມສີຮູບພາບມື, ຂຽນສະຫຼະ ×າ ທີ່ມີຢູ່ໃນຄຳສັບ: ຕາ, ຝາ, ຢາ, ບາ, ງາ, ຂາ, ຕາມແບບໄດ້ຖືກຕ້ອງ.
4. ອ່ານອອກສຽງຄຳສັບທີ່ມີສະຫຼະ ×າ: ຕາ, ຝາ, ຢາ, ບາ, ງາ, ຂາ, ເວົ້າເປັນປະໂຫຍກຕາມຮູບພາບ: ບ່າໄຫຼ່ມີສອງເບື້ອງ, ເດັກນ້ອຍເຊັດໂຕ, ນົມສອງເບື້ອງ, ເດັກນ້ອຍນຸ່ງເຄື່ອງ, ແອວນາງນ້ອຍກິ່ວ, ນາງນ້ອຍມີສະໂພກງາມ, ອ່ານອອກສຽງຄຳສັບທີ່ມີຕົວສະກົດ: ກ, ງ, ບ, ມ, ອ່ານຮູບພາບຕາມປື້ມນິທານເລື່ອງມືວິເສດໄດ້ຊັດເຈນ.
5. ເປັນເອື້ອຍ-ອ້າຍອາບນ້ຳໃຫ້ນ້ອງ: ອາບນ້ຳ, ຫວີຜົມ, ມັດຜົມ, ທາແປ້ງ, ເປັນນາຍຄູພາເດັກນ້ອຍລ້າງມື ແລະ ຕັດເລັບຢ່າງມ່ວນຊື່ນ.
6. ລຽນລຳດັບຮູບພາບເດັກນ້ອຍລ້າງມືຕາມຂັ້ນຕອນ ແລະ ລຽນລຳດັບຮູບຈະຕຸລັດຕາມແບບ, ລຽນລຳດັບຮູບພາບການບົວລະບັດຮັກສາຕີນ ແລະ ເກມຕໍ່ຮູບພາບເດັກນ້ອຍເຕະບານໄດ້ຖືກຕ້ອງ.
7. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.
8. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.
9. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດຄຳຄ່ອງ ປາກສະອາດ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງໄດ້ຖືກຕ້ອງ.
2. ອົດທົນໃນເວລາສະແດງທ່າທາງ.

## II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ ປາກສະອາດ.

## III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ປາກສະອາດ.
2. ທ່າຫັດກາຍະບໍລິຫານລຳຄໍ ແລະ ແຂນ (ເບິ່ງປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຄໍ ແລະ ແຂນ: ທ່າໝູນລຳຄໍ ແລະ ຍົກແຂນຂຶ້ນເທິງຫົວ.
2. ໃຫ້ເດັກນ້ອຍແລ່ນຊິກແຊັກ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງອັດສະໝາດຫຼັບຕາສະມາທິ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນໃນເວລາສະແດງທ່າທາງ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ.
2. ຄວາມອົດທົນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ເລົາຄີງ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກສ່ວນປະກອບ ແລະ ການບົວລະບັດຮັກສາເລົາຄີງໄດ້.
2. ປະຕິບັດຕົວຈິງໃນການນຸ່ງເຄື່ອງ.
3. ເວົ້າເປັນຄຳສັບຕາມເນື້ອໃນບົດເພງ ແລະ ເວົ້າເປັນປະໂຫຍກຕາມຮູບພາບໄດ້ຊັດເຈນ.

## II. ເນື້ອໃນຕົ້ນຕໍ

1. ສ່ວນປະກອບຂອງເລົາຄີງ ແລະ ການບົວລະບັດຮັກສາ:
   - ສ່ວນປະກອບ: ມີບ່າໄຫຼ່, ໜ້າເອິກ, ນົມ, ທ້ອງ, ແອວ, ກະໂພກ.
   - ການບົວລະບັດຮັກສາ: ອາບນ້ຳ, ເຊັດໂຕໃຫ້ແຫ້ງ, ນຸ່ງເຄື່ອງສະອາດ
2. ການຮ້ອງເພງ ຮ່າງກາຍຂອງຂ້ອຍ, ເວົ້າເປັນຄຳສັບຕາມເນື້ອໃນບົດເພງ ແລະ ເວົ້າເປັນປະໂຫຍກຕາມຮູບພາບ:
   - ຄຳສັບຕາມບົດເພງ: ບ່າໄຫຼ່, ເອິກ, ນົມ, ທ້ອງ, ແອວ, ກະໂພກ, ອາບນ້ຳ, ເຊັດໂຕ, ນຸ່ງເຄື່ອງ.
   - ປະໂຫຍກຕາມຮູບພາບ: ບ່າໄຫຼ່ມີສອງເບື້ອງ, ເດັກນ້ອຍເຊັດໂຕ, ນົມສອງເບື້ອງ, ເດັກນ້ອຍນຸ່ງເຄື່ອງ, ແອວນາງນ້ອຍກິ່ວ, ນາງນ້ອຍມີກະໂພກງາມ.

## III. ສື່ການຮຽນ-ການສອນ

1. ເສື້ອ, ໂສ້ງ, ສິ້ນ ຫຼື ກະໂປ່ງ; ຮູບພາບ: ບ່າໄຫຼ່, ເດັກນ້ອຍເຊັດໂຕ, ເດັກນ້ອຍນຸ່ງເຄື່ອງ; ໂປສະເຕີຮ່າງກາຍຂອງຄົນ.
2. ບົດເພງ ຮ່າງກາຍຂອງຂ້ອຍ ເບິ່ງໃນປຶ້ມຄູ່ມືຄູ.

## IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາຖາມເດັກນ້ອຍກ່ຽວກັບສ່ວນປະກອບຂອງຮ່າງກາຍ.
2. ນາຍຄູພາເດັກນ້ອຍຮ້ອງເພງ, ສົນທະນາ, ເວົ້າຄຳສັບຕາມເນື້ອໃນບົດເພງ.
3. ໃຫ້ເດັກນ້ອຍສັງເກດໂປສະເຕີຮ່າງກາຍຂອງຄົນ, ສົນທະນາກ່ຽວກັບສ່ວນປະກອບຂອງເລົາຄີງ ແລະ ການບົວລະບັດຮັກສາ.
4. ນາຍຄູພາເດັກນ້ອຍເວົ້າເປັນປະໂຫຍກຕາມຮູບພາບ.
5. ນາຍຄູພາເດັກນ້ອຍປະຕິບັດຕົວຈິງໃນການນຸ່ງເຄື່ອງ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ ແລະ ການບົວລະບັດຮັກສາເລົາຄີງ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກສ່ວນປະກອບ ແລະ ການບົວລະບັດຮັກສາເລົາຄີງ.
2. ການປະຕິບັດຕົວຈິງໃນການນຸ່ງເຄື່ອງ.
3. ຄວາມຊັດເຈນຂອງການເວົ້າຄຳສັບ, ເປັນປະໂຫຍກຕາມເນື້ອໃນບົດເພງ ແລະ ຮູບພາບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຢອດສີ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຢອດສີໃສ່ຮູບພາບເສື້ອໄດ້ຖືກຕ້ອງ.
2. ຢອດສີໃສ່ຮູບພາບເສື້ອໄດ້ສະອາດຈົບງາມ.
3. ເຝິກໃຫ້ເດັກມີຄວາມລະມັດລະວັງໃນການຢອດສີ.

## II. ເນື້ອໃນຕົ້ນຕໍ

ການຢອດສີໃສ່ຮູບພາບເສື້ອ.

## III. ສື່ການຮຽນ-ການສອນ

1. ສີນ້ຳ ແລະ ເຊືອກສຳລັບຈຸ່ມສີນ້ຳ.
2. ຮູບພາບເສື້ອ,
3. ແບບຮູບພາບເສື້ອທີ່ຢອດສີແລ້ວ.
4. ຊາມນ້ຳ, ຜ້າເຊັດມື ແລະ ສະບູ.
5. ບົດເພງ ຮ່າງກາຍຂອງຂ້ອຍ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຮ່າງກາຍຂອງຂ້ອຍ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຮູບພາບເສື້ອ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຢອດສີ.
3. ນາຍຄູແນະນຳ, ສາທິດວິທີ ແລະ  ຂັ້ນຕອນການຢອດສີໃສ່ຮູບພາບເສື້ອ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຢອດສີໃສ່ຮູບພາບເສື້ອ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ຄວາມອົດທົນ ແລະ ເກັບມ້ຽນຜົນງານ.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງມນການບອກຂັ້ນຕອນການຢອດສີ.
2. ຄວາມສະອາດຈົບງາມໃນການຢອດສີໃສ່ຮູບພາບເສື້ອ.
3. ຄວາມລະມັດລະວັງໃນການຢອດສີ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນປ້ອງກັນຕົວ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນປ້ອງກັນຕົວໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນປ້ອງກັນຕົວໄດ້ຖືກຕ້ອງ.
3. ມີຄວາມປອດໄພໃນເວລາຫຼິ້ນ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປ້ອງກັນຕົວ.

## III. ສື່ການຮຽນ-ການສອນ

1. ບົດເພງ ຮ່າງກາຍຂອງຂ້ອຍ.
2. ກອງ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ອາບນ້ຳ ປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນປ້ອງກັນຕົວສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນປ້ອງກັນຕົວ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ ແລະ ມີສະຕິໃນການຫຼິ້ນ.
6. ໃຫ້ເດັກນ້ອຍເຮັດທ່າທາງລ້າງມື, ເຊັດໜ້າ ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນປ້ອງກັນຕົວ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນປ້ອງກັນຕົວ.
3. ຄວາມປອດໄພໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຮູບຈະຕຸລັດ ຕາມແບບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ລຽນລຳດັບຮູບຈະຕຸລັດຕາມແບບໄດ້ຖືກຕ້ອງ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການລຽນລຳດັບຮູບຈະຕຸລັດຕາມແບບ: ນ້ອຍ, ກາງ, ໃຫຍ່.

### III. ສື່ການຮຽນ-ການສອນ

1. ແຜ່ນເກມລຽນລຳດັບຮູບຈະຕຸລັດຕາມແບບ: ນ້ອຍ, ກາງ, ໃຫຍ່ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມລຽນລຳດັບຮູບພາບການບົວລະບັດຮັກສາເລົາຄືງ: ເດັກນ້ອຍອາບນ້ຳ, ເຊັດຕົວ ແລະ ນຸ່ງເຄື່ອງ.
3. ບົດເພງ ຫູຂອງຫຼານ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຫູຂອງຫຼານ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່ ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມລຽນລຳດັບຮູບຈະຕຸລັດຕາມແບບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີໃນເກມ.
2. ຄວາມຖືກຕ້ອງໃນການລຽນລຳດັບຮູບຈະຕຸລັດຕາມແບບ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສີລະປະສ້າງສັນ ແລະ ມຸມອ່ານ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ປອດສີໃສ່ຮູບພາບ, ຂີດຂຽນສະຫຼະ ×າ, ຕົວສະກົດຕາມຄຳສັບໄດ້ຖືກຕ້ອງ.
3. ອ່ານອອກສຽງຄຳສັບທີ່ມີສະຫຼະ ×າ, ເວົ້າເປັນປະໂຫຍກຕາມຮູບພາບໄດ້ຊັດເຈນ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

## II. ເນື້ອໃນຕົ້ນຕໍ

1. ຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມສີລະປະສ້າງສັນ ແລະ ມຸມອ່ານ.
2. ການປອດສີໃສ່ຮູບພາບເສື້ອ; ສັງເກດ ແລະ ຂີດຂຽນສະຫຼະ ×າ ຕາມຄຳສັບ: ຈານ, ຟານ, ຫາງ, ຫາມ, ຫາບ, ພາຍ, ດາວ, ປາກ; ເວົ້າເປັນປະໂຫຍກຕາມຮູບພາບ: ບ່າໄຫຼ່ມີສອງເບື້ອງ, ເດັກນ້ອຍ ເຊັດຕົວ, ນົມຂ້ອຍມີສອງເບື້ອງ, ເດັກນ້ອຍນຸ່ງເຄື່ອງ, ແອວນາງນ້ອຍກິ່ວ, ນາງນ້ອຍມີກະໂພກງາມ.

## III. ສື່ການຮຽນ-ການສອນ

1. ມຸມສີລະປະສ້າງສັນ: ສີນ້ຳ, ສໍສີໄມ້ ຫຼື ສີທຽນ ແລະ ສໍດຳ, ຮູບພາບເສື້ອ, ປຶ້ມບົດເຝິກຫັດພາສາລາວເຫຼັ້ມ 1 (ໜ້າ 4) ຫຼື ເຈ້ຍຂີດຂຽນສະຫຼະ ×າ ຕາມຄຳສັບ: ຈານ, ຟານ, ຫາງ, ຫາມ, ຫາບ, ພາຍ, ດາວ, ປາກ.
2. ມຸມອ່ານ: ບັດຄຳສັບ: ຕາ, ຝາ, ຢາ, ນາ, ຂາ, ງາ ໂປສະເຕີ ຮ່າງກາຍຂອງຄົນ, ຮູບພາບບ່າໄຫຼ່, ເດັກນ້ອຍເຊັດໂຕ, ເດັກນ້ອຍນຸ່ງເຄື່ອງ, ກະດານສຽນ ຫຼື ຕິດ.
3. ບົດເພງ ຮ່າງກາຍຂອງຂ້ອຍ ແລະ ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ອາບນ້ຳ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່, ເຄື່ອງຫຼິ້ນຕາມມຸມ ແລະ ແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສີລະປະສ້າງສັນ ແລະ ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສີລະປະສ້າງສັນ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການປອດສີໃສ່ຮູບພາບ, ຂຽນຄຳສັບທີ່ມີພະຍັນຊະນະປະສົມສະຫຼະ ແລະ ຕົວສະກົດ.
3. ຄວາມຊັດເຈນໃນການຂີດຂຽນສະຫຼະ ×າ, ຕົວສະກົດຕາມຄຳສັບ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບ ຍ່າງປະກອບການນັບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບ ຍ່າງປະກອບການນັບໄດ້ຖືກຕ້ອງ.
2. ອົດທົນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບ ຍ່າງປະກອບການນັບ 1-5.

### III. ສື່ການຮຽນ-ການສອນ

1. ເຊືອກ ຫຼື ສໍຂາວ.
2. ທ່າຫັດກາຍະບໍລິຫານມື ແລະ ແຂວ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານມື ແລະ ແຂວ ທ່າຢືນຕົບມື ແລະ ທ່າຫວ່ຽງແຂວໄປທາງຊ້າຍ, ຂວາ.
2. ໃຫ້ເດັກນ້ອຍເຕັ້ນສອງຂາ (ເຕັ້ນກົບ).
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບ ຍ່າງປະກອບການນັບ.
4. ໃຫ້ເດັກນ້ອຍຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຢຽດຂາໄປທາງໜ້າ, ຈ່າງຂາອອກ, ກົ້ມລົງເອົາມືທັງສອງຈັບປາຍຕີນ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບ ຍ່າງປະກອບການນັບ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບ ຍ່າງປະກອບການນັບ.
2. ຄວາມອົດທົນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ສ່ວນປະກອບຂອງແຂນ ແລະ ຄຸນປະໂຫຍດ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກສ່ວນປະກອບຂອງແຂນ ແລະ ຄຸນປະໂຫຍດຂອງມືໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງໃນການຈັບບາຍວັດຖຸສິ່ງຂອງ.
3. ເວົ້າຄຳສັບຕາມເນື້ອໃນບົດນິທານ ແລະ ເວົ້າປະໂຫຍກຕາມຮູບພາບໄດ້ຊັດເຈນ.
4. ມີຄວາມມ່ວນຊື່ນ ແລະ ມີມາລະຍາດໃນການຟັງນິທານ.

## II. ເນື້ອໃນຕົ້ນຕໍ

1. ສ່ວນປະກອບຂອງແຂນ ແລະ ຄຸນປະໂຫຍດຂອງມື:
   - ສ່ວນປະກອບ: ກົກແຂນ, ແຂນສອກ, ຄໍ່ມື, ມື; ມື: ຝ່າມື, ຫຼັງມື, ນິ້ວມື, ຂໍ້ມື, ເລັບມື ແລະ ນິ້ວມື: ນິ້ວໂປ້, ນິ້ວຊີ້, ນິ້ວກາງ, ນິ້ວນາງ, ນິ້ວກ້ອຍ.
   - ຄຸນປະໂຫຍດຂອງມື: ໃຊ້ໄວ້ຈັບ, ບາຍ ແລະ ຖືວັດຖຸສິ່ງຂອງຕ່າງໆ: ອ່ອນ, ແຂງ, ກ້ຽງ, ຊາ, ໜາ, ບາງ.
3. ການຟັງນິທານເລື່ອງ ມືວິເສດ, ເວົ້າເປັນຄຳສັບຕາມເນື້ອໃນບົດນິທານ: ມື, ຝາມື, ຫຼັງມື, ນິ້ວມື, ກ້ຽງ, ຊາ.
4. ການເວົ້າເປັນປະໂຫຍກຕາມຮູບພາບ: ມືມີສອງເບື້ອງ, ມືຂອງລາວລວມມີສິບນິ້ວ, ເດັກນ້ອຍຕັດເລັບມືໃຫ້ສັ້ນ, ເດັກນ້ອຍລ້າງມືໃຫ້ສະອາດ.

## III. ສື່ການຮຽນ-ການສອນ

1. ແຂນ, ມື, ສຳລີ, ໄມ້, ຜ້າໜາ-ບາງ, ເຈ້ຍຂາວ, ກະດາດຊາຍ.
2. ຮູບພາບ: ມືມີສອງເບື້ອງ, ເດັກນ້ອຍຕັດເລັບມື, ເດັກນ້ອຍລ້າງມື.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຍົກແຂນຂຶ້ນທັງສອງເບື້ອງ, ສົນທະນາກ່ຽວກັບສ່ວນປະກອບຂອງແຂນ.
2. ນາຍຄູເລົ່ານິທານ, ສົນທະນາ, ເວົ້າຄຳສັບຕາມເນື້ອໃນບົດນິທານ; ໃຫ້ເດັກນ້ອຍເວົ້າຄຳສັບ.
3. ໃຫ້ເດັກນ້ອຍປະຕິບັດຕົວຈິງໃນການຈັບບາຍສິ່ງຂອງຕ່າງໆ, ສົນທະນາກ່ຽວກັບຄຸນປະໂຫຍດ ຂອງມື.
4. ໃຫ້ເດັກນ້ອຍເວົ້າເປັນປະໂຫຍກຕາມຮູບພາບ.
5. ໃຫ້ເດັກນ້ອຍເວົ້າຄືນສ່ວນປະກອບຂອງແຂນ ແລະ ຄຸນປະໂຫຍດຂອງມື.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບມາລະຍາດໃນການຟັງນິທານ ແລະ ການປົວລະບັດຮັກສາມື.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກສ່ວນປະກອບຂອງແຂນ ແລະ ຄຸນປະໂຫຍດຂອງມື.
2. ປະຕິບັດຕົວຈິງໃນການຈັບບາຍວັດຖຸ ສິ່ງຂອງ.
3. ຄວາມຊັດເຈນໃນການເວົ້າຄຳສັບ, ເປັນປະໂຫຍກ ຕາມເນື້ອໃນບົດນິທານ ແລະ ຕາມຮູບພາບ.
4. ຄວາມມ່ວນຊື່ນ ແລະ ມາລະຍາດໃນ ການຟັງນິທານ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ພິມສີຮູບພາບຝ່າມື

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການພິມສີຮູບຝາມືໄດ້ຖືກຕ້ອງ.
2. ພິມສີຮູບຝາມືໄດ້ສະອາດຈົບງາມ.
3. ມີຄວາມລະມັດລະວັງໃນການພິມສີ.

## II. ເນື້ອໃນຕົ້ນຕໍ

ການພິມສີໃສ່ຮູບພາບຝາມື.

## III. ສື່ການຮຽນ-ການສອນ

1. ສີນໍ້າ ແລະ ເຈ້ຍຂາວ.
2. ແບບຮູບພາບຝ່າມືທີ່ພິມສີແລ້ວ.
3. ຊາມນໍ້າ, ຜ້າເຊັດມື ແລະ ສະບູ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງແອບຝາມື, ກຳມື ແລະ ແບມື.
2. ໃຫ້ເດັກນ້ອຍສັງເກດຮູບຝາມືທີ່ພິມສີແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການພິມສີ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນຂອງການພິມສີຮູບຝ່າມື.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນຕອນການພິມສີຮູບຝ່າມື.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ຄວາມອົດທົນ ແລະ ເກັບມ້ຽນຜົນງານ.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການພິມສີຮູບຝ່າມືດ້ວຍນໍ້າສີ.
2. ຄວາມສະອາດຈົບງາມໃນການພິມສີຮູບຝ່າມື.
3. ຄວາມລະມັດລະວັງໃນການພິມສີໃສ່ຮູບຝ່າມື.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນໂຍນບານເຂົ້າວົງມົນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນໂຍນບານເຂົ້າວົງມົນໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນໂຍນບານເຂົ້າວົງມົນໄດ້ຖືກຕ້ອງ.
3. ມີຄວາມອົດທົນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນໂຍນບານເຂົ້າວົງມົນ.

### III. ສື່ການຮຽນ-ການສອນ

1. ໝາກບານ.
2. ກອງ.
3. ໄມ້ສຳລັບຂີດເສັ້ນ.
4. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຢືນລຽນແຖວ ແລະ ເຄື່ອນໄຫວຕາມຈັ່ງຫວະສຽງກອງຊ້າ-ໄວ.
2. ນາຍຄູສະເໜີແບບຫຼິ້ນແຂ່ງຂັນໂຍນບານເຂົ້າວົງມົນສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນ ແຂ່ງຂັນໂຍນບານເຂົ້າວົງມົນ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນໃຫ້ຄວາມວ່ອງໄວ ປອດໄພໃນການຫຼິ້ນຮ່ວມກັນ ແລະ ຫຼິ້ນ ແລ້ວເກັບມ້ຽນອຸປະກອນຊ່ວຍກັນ.
6. ໃຫ້ເດັກນ້ອຍຢືນເປັນວົງມົນແກວ່ງແຂນຊ້າໆ, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນໂຍນບານເຂົ້າວົງມົນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນໂຍນບານເຂົ້າວົງມົນ.
3. ຄວາມອົດທົນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຮູບພາບເດັກ ນ້ອຍລ້າງມືຕາມຂັ້ນຕອນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນແຜ່ນເກມໄດ້ຖືກຕ້ອງ.
2. ເກມລຽນລຳດັບຮູບພາບເດັກນ້ອຍລ້າງມືຕາມຂັ້ນຕອນໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການລຽນລຳດັບຮູບພາບເດັກນ້ອຍລ້າງມືຕາມຂັ້ນຕອນ: ເອົາສະບູມາ ຖູຝ່າມືຖູເຂົ້າກັນ, ລ້າງມືໃສ່ສະບູ, ຝ່າມືຖູກຖູຫຼັງມື ແລະ ນີ້ວຖູຫ່ວາງນີ້ວ, ຝ່າມືຖູຝ່າມື ນີ້ວຫ່ວາງນີ້ວ, ຫຼັງນີ້ວມືຖູຝ່າມື, ຖູນີ້ວໂປ້ມື ໂດຍຮອບດ້ວຍຝ່າມື, ປາຍນີ້ວມືຖູຝ່າມື, ຖູຮອບຄໍ່ມື.

### III. ສື່ການຮຽນ-ການສອນ

1. ແຜ່ນເກມ ການລຽນລຳດັບຮູບພາບເດັກນ້ອຍລ້າງມືຕາມຂັ້ນຕອນ: ເອົາສະບູມາ ຖູຝ່າມືຖູເຂົ້າກັນ, ລ້າງມືໃສ່ສະບູ, ຝ່າມືຖູກຖູຫຼັງມື ແລະ ນີ້ວຖູຫ່ວາງນີ້ວ, ຝ່າມືຖູຝ່າມື ນີ້ວຫ່ວາງນີ້ວ, ຫຼັງນີ້ວມືຖູຝ່າມື, ຖູນີ້ວໂປ້ມືໂດຍຮອບດ້ວຍຝ່າມື, ປາຍນີ້ວມືຖູຝ່າມື, ຖູຮອບຄໍ່ມື (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມລຽນລຳດັບຮູບຈະຕຸລັດຕາມແບບ: ນ້ອຍ, ກາງ, ໃຫຍ່.
3. ບົດເພງ ຮ່າງກາຍຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຮ່າງກາຍຂອງຂ້ອຍ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມລຽນລຳດັບຮູບພາບເດັກນ້ອຍລ້າງມືຕາມຂັ້ນຕອນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການລຽນລຳດັບຮູບພາບເດັກນ້ອຍລ້າງມືຕາມຂັ້ນຕອນ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເກມການສຶກສາ ແລະ ມຸມເຄື່ອງຫຼິ້ນສຳຜັດ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ລຽນລຳດັບຮູບພາບການປົວລະບັດເລົາຄີງ ແລະ ລຽນລຳດັບຮູບຈະຕຸລັດຕາມແບບໄດ້ຖືກຕ້ອງ.
3. ຕໍ່ບຼັອກເປັນຮູບຕ່າງໆຕາມຈິນຕະນາການຢ່າງມ່ວນຊື່ນ, ພິມຝ່າມືໃສ່ອ່າງດິນຊາຍໄດ້ຖືກຕ້ອງ.
4. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

## II. ເນື້ອໃນຕົ້ນຕໍ

1. ຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມເກມການສຶກສາ ແລະ ມຸມເຄື່ອງຫຼິ້ນສຳຜັດ.
2. ການເກມລຽນລຳດັບຮູບພາບການປົວລະບັດເລົາຄີງ: ເດັກນ້ອຍອາບນ້ຳ, ເຊັດຕົວ, ນຸ່ງເຄື່ອງ ແລະ ການລຽນລຳດັບຮູບຈະຕຸລັດຕາມ ແບບ: ນ້ອຍ, ກາງ, ໃຫຍ່.
3. ການຕໍ່ບຼັອກເປັນຮູບຕ່າງໆຕາມຈິນຕະນາການ; ພິມຝ່າມືໃສ່ອ່າງດິນຊາຍ.
4. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

## III. ສື່ການຮຽນ-ການສອນ

1. ມຸມເກມການສຶກສາ: ແຜ່ນເກມລຽນລຳດັບຮູບພາບການປົວລະບັດເລົາຄີງ: ເດັກນ້ອຍອາບນ້ຳ, ເຊັດຕົວ, ນຸ່ງເຄື່ອງ ແລະ ແຜ່ນເກມລຽນລຳດັບຮູບຈະຕຸລັດຕາມແບບ: ນ້ອຍ, ກາງ, ໃຫຍ່; ກະດານສຽບ ຫຼື ຕິດ.
2. ມຸມເຄື່ອງຫຼິ້ນສຳຜັດ: ຊຸດບຼັອກ, ອ່າງດິນຊາຍ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

## IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເກມການສຶກສາ ແລະ ມຸມເຄື່ອງຫຼິ້ນສຳຜັດ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເກມການສຶກສາ ແລະ ມຸມເຄື່ອງຫຼິ້ນສຳຜັດ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການຫຼິ້ນເກມລຽນລຳດັບຮູບພາບການປົວລະບັດເລົາຄີງ ແລະ ລຽນລຳດັບຮູບຈະຕຸລັດຕາມແບບ.
3. ຄວາມມ່ວນຊື່ນໃນການຕໍ່ບຼັອກເປັນຮູບຕ່າງໆຕາມຈິນຕະນາການ ແລະ ຄວາມຖືກຕ້ອງໃນການພິມຝ່າໃສ່ອ່າງດິນຊາຍ.
4. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູແນະນຳ: ລ້າງມືຖືກວິທີຕາມ 7 ຂັ້ນຕອນ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານລຳຄໍ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຄໍ ແລະ ຂາ: ທ່າກົ້ມຫົວລົງ, ເງີຍຫົວຂຶ້ນ ແລະ ໂຢ່ງໂຍ້ຂາລົງ.
2. ໃຫ້ເດັກນ້ອຍແລ່ນຊິກແຊັກ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຢືນຍົກແຂນວາອອກຫາຍໃຈເຂົ້າ, ເອົາແຂນລົງຫາຍໃຈອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູແນະນຳ.
2. ການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ການບົວລະບັດຮັກສາມື

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການບົວລະບັດຮັກສາມືໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງໃນການລ້າງມື.
3. ເລົ່າຄຳຄ່ອງ, ເວົ້າເປັນຄຳສັບ, ເວົ້າປະໂຫຍກຕາມເນື້ອໃນບົດຄຳຄ່ອງໄດ້ຊັດເຈນ.
4. ອ່ານອອກສຽງຄຳສັບທີ່ມີຕົວສະກົດໄດ້ຊັດເຈນ.

## II. ເນື້ອໃນຕົ້ນຕໍ

1. ການບົວລະບັດຮັກສາມື: ຕັດເລັບມື; ລ້າງມືໃຫ້ຖືກວິທີ ແລະ ຂັ້ນຕອນ.
2. ການເລົ່າຄຳຄ່ອງ ເລັບມືສະອາດ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ.
   - ຄຳສັບ: ມື, ເລັບມື, ດຸໝັ່ນ, ສຸຂະພາບ, ຂາວ, ຍາວ, ສັ້ນ.
   - ປະໂຫຍກ: ຕັດເລັບມືໃຫ້ສັ້ນ, ດຸໝັ່ນລ້າງມື, ຈະມີສຸຂະພາບແຂງແຮງ, ມືຂອງຫຼານກ້ຽງຂາວ.
3. ອ່ານອອກສຽງຄຳສັບທີ່ມີຕົວສະກົດ: ກ, ງ, ບ, ມ: ປາກ, ຄາງ, ອາບ, ງາມ.

## III. ສື່ການຮຽນ-ການສອນ

1. ມີດຕັດເລັບ, ສະບູ, ຊາມນ້ຳ, ຜ້າເຊັດມື.
2. ບົດຄຳຄ່ອງ ເລັບມືສະອາດ (ເບິ່ງປຶ້ມຄູ່ມືຄູ).
3. ບັດຄຳສັບ: ປາກ, ຄາງ, ອາບ, ງາມ.

## IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຄຸນປະໂຫຍດຂອງມື.
2. ໃຫ້ເດັກນ້ອຍເລົ່າຄຳຄ່ອງ, ສົນທະນາ, ເວົ້າຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນຄຳຄ່ອງ.
3. ໃຫ້ເດັກນ້ອຍອ່ານອອກສຽງຄຳສັບທີ່ມີຕົວສະກົດ ກ, ງ, ບ, ມ.
4. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການບົວລະບັດຮັກສາມື, ໃຫ້ເດັກນ້ອຍປະຕິບັດຕົວຈິງໃນການລ້າງມື.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມດຸໝັ່ນ ແລະ ການບົວລະບັດຮັກສາມື.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການບົວລະບັດຮັກສາມື.
2. ການປະຕິບັດຕົວຈິງໃນການລ້າງມື.
3. ຄວາມຊັດເຈນໃນການເລົ່າຄຳຄ່ອງ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ.
4. ຄວາມຊັດເຈນໃນການອ່ານອອກສຽງຄຳທີ່ມີຕົວສະກົດ: ກ, ງ, ບ, ມ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຕັດ, ຕິດຮູບພາບມື

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຕັດ-ຕິດຮູບພາບມືໄດ້ຖືກຕ້ອງ.
2. ຕັດ, ຕິດຮູບພາບມືໄດ້ສະອາດຈົບງາມ.
3. ມີຄວາມອົດທົນໃນການຕັດ-ຕິດຮູບພາບມື.

## II. ເນື້ອໃນຕົ້ນຕໍ

ການຕັດ, ຕິດຮູບພາບມື.

## III. ສື່ການຮຽນ-ການສອນ

1. ມີດຕັດປາຍມົນ.
2. ກາວສຳເລັດຮູບ ຫຼື ກາວເຂົ້າໜຽວຕົ້ມ.
3. ເຈ້ຍຂາວ.
4. ແບບເຈ້ຍຮູບພາບມືທີ່ຕິດແລ້ວ.
5. ຊາມນ້ຳ, ຜ້າເຊັດມື ແລະ ສະບູ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງໃຊ້ນິ້ວມືຕັດເຈ້ຍ ແລະ ຈີກເຈ້ຍ.
2. ໃຫ້ເດັກນ້ອຍສັງເກດຮູບພາບມືທີ່ຕິດແລ້ວ, ສົນທະນາ ແລະ ບອກກັບເດັກກ່ຽວກັບຂັ້ນຕອນການຕັດ, ຕິດ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຕັດ-ຕິດຮູບພາບມື.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຕັດ-ຕິດຮູບພາບມື.
6. ສຶກສາອົບຮົມເດັກກ່ຽວກັບຄວາມສາມັກຄີ, ຄວາມອົດທົນ ແລະ ເກັບມ້ຽນຜົນງານ.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຕັດ-ຕິດຮູບພາບມື.
2. ຄວາມສະອາດຈົບງາມໃນການຕັດ-ຕິດຮູບພາບມື.
3. ຄວາມອົດທົນໃນການຕັດ, ຕິດຮູບພາບມື.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນພິມຮູບຕ່າງໆດ້ວຍດິນຊາຍ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນພິມຮູບຕ່າງໆດ້ວຍດິນຊາຍໄດ້ຖືກຕ້ອງ.
2. ຫຼິ້ນພິມຮູບຕ່າງໆດ້ວຍດິນຊາຍໄດ້ຄ່ອງແຄ້ວ.
3. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງ.
4. ມີຄວາມອົດທົນໃນເວລາຫຼິ້ນ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນພິມຮູບຕ່າງໆດ້ວຍດິນຊາຍ.

## III. ສື່ການຮຽນ-ການສອນ

1. ນ້ຳ, ດິນຊາຍ, ຊ້ວານນ້ອຍ, ຄຸ.
2. ແມ່ພິມແບບຮູບ, ແພເຊັດມື.
3. ບົດຄຳຄ່ອງ ເລັບມືສະອາດ.
4. ວິທີຫຼິ້ນ (ເບິ່ງປື້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ເລັບມືສະອາດ ປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນພິມຮູບຕ່າງໆດ້ວຍດິນຊາຍ ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນພິມຮູບຕ່າງໆດ້ວຍດິນຊາຍ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນ ແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນໃຫ້ລະວັງບໍ່ໃຫ້ເຄື່ອງປຽກ, ລະວັງບໍ່ໃຫ້ລົ້ມ, ຫຼິ້ນຮ່ວມກັນຫຼິ້ນແລ້ວລ້າງມື, ລ້າງຕີນໃຫ້ສະອາດ ແລະ ເກັບມ້ຽນອຸປະກອນ.
6. ໃຫ້ເດັກນ້ອຍຢືນຢູ່ກັບທີ່, ເຮັດທ່າທາງຫວິຜົມຕົນເອງ, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນພິມຮູບຕ່າງໆດ້ວຍດິນຊາຍ.
2. ຄວາມຄ່ອງແຄ້ວໃນການພິມຮູບຕ່າງໆດ້ວຍດິນຊາຍ.
3. ຄວາມແຂງແຮງຂອງກ້າມຊີ້ນມືໃນເວລາຫຼິ້ນ.
4. ຄວາມອົດທົນໃນເວລາຫຼິ້ນ.

# ກິດຈະກໍາເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບເດັກນ້ອຍເຕະບານ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຕໍ່ຮູບພາບເດັກນ້ອຍເຕະບານໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

## II. ເນື້ອໃນຕົ້ນຕໍ

ການຕໍ່ຮູບພາບເດັກນ້ອຍເຕະບານ.

## III. ສື່ການຮຽນ-ການສອນ

1. ແຜ່ນເກມ ຕໍ່ຮູບພາບເດັກນ້ອຍເຕະບານ (ສໍາລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມລຽນລໍາດັບຮູບພາບເດັກນ້ອຍລ້າງມືຕາມຂັ້ນຕອນ: ເອົາສະບູມາຮຸກຝ່າມືຖູເຂົ້າກັນ, ລ້າງມືໃສ່ສະບູ, ຝ່າມືຮຸກຖູຫຼັງມື ແລະ ນິ້ວຖູຫ່ວາງນິ້ວ, ຝ່າມືຖູຝ່າມື ນິ້ວຫ່ວາງນິ້ວ, ຫຼັງນິ້ວມືຖູຝ່າມື, ຖູນິ້ວໂປ້ມືໂດຍຮອບດ້ວຍຝ່າມື, ປາຍນິ້ວມືຖູຝ່າມື, ຖູຮອບຄໍ່ມື.
3. ບົດຄໍາຄ່ອງ ເລັບມືສະອາດ.

## IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄໍາຄ່ອງ ເລັບມືສະອາດ.
2. ນາຍຄູສົນທະນາກັບເດັກກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນໍາ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ຫຼິ້ນເກມຕໍ່ຮູບພາບເດັກນ້ອຍເຕະບານ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນບອກຊື່ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຕໍ່ຮູບພາບເດັກນ້ອຍເຕາະບານ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ອ່ານອອກສຽງຄຳສັບທີ່ມີວັນນະຍຸດ ◌່, ◌້, ອ່ານຮູບພາບ ຕາມປຶ້ມນິທານຖືກຕ້ອງ ແລະ ຊັດເຈນ.
3. ຕັດ, ຕິດຮູບມື, ຂີດຂຽນຕາມຮອຍຈ້ຳຄຳສັບໄດ້ຖືກຕ້ອງ ແລະ ງາມ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ມຸມ, ເຄື່ອງຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
2. ການສັງເກດ ແລະ ອ່ານອອກສຽງຄຳສັບທີ່ມີວັນນະຍຸດ ◌່, ◌້: ປ່າ ປ້າ ຜ່າ ຜ້າ ຊ່າງ ຊ້າງ; ສັງເກດ ແລະ ອ່ານຮູບພາບຕາມປຶ້ມນິທານເລື່ອງ ມືວິເສດ.
3. ການຕັດ, ຕິດຮູບມື, ຂຽນຕາມຮອຍຈ້ຳຄຳສັບ: ຈານ ຫາງ ດາວ ຫາມ ພາຍ ຫາບ.

### III. ສື່ການຮຽນ-ການສອນ

1. ມຸມອ່ານ: ປຶ້ມບົດເຝິກຫັດພາສາລາວເຫຼັ້ມ 1 (ໜ້າ 6) ຫຼື ບັດຄຳສັບຕາມບົດເຝິກຫັດ; ປຶ້ມນິທານເລື່ອງ ມືວິເສດ ແລະ ປຶ້ມເລື່ອງຕ່າງໆ; ກະດານສຽບ ຫຼື ຕິດ.
2. ມຸມສິລະປະສ້າງສັນ: ມີດຕັດ, ກາວ, ສີນ້ຳ, ເຈ້ຍຂາວ, ຮູບພາບມື, ບັດຄຳສັບ: ຈານ ຫາງ, ດາວ, ຫາມ ພາຍ ຫາບ, ປ່າ ປ້າ ຜ່າ ຜ້າ ຊ່າງ ຊ້າງ.
3. ບົດຄຳຄ່ອງ ເລັບມືສະອາດ; ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ເລັບມືສະອາດ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກນ້ອຍ ກ່ຽວກັບຊື່ມຸມ, ເຄື່ອງຫຼິ້ນຕາມມຸມ ແລະ ແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ຄວາມຊັດເຈນໃນການອ່ານອອກສຽງຄຳສັບທີ່ມີວັນນະຍຸດ ◌່, ◌້, ອ່ານຮູບພາບຕາມປຶ້ມນິທານ.
3. ຄວາມຖືກຕ້ອງໃນການຕັດ, ຕິດຮູບມື, ຂີດຂຽນຕາມຮອຍຈ້ຳຄຳສັບ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

## II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມນາຍຄູແນະນຳ: ຍ່າງ, ແລ່ນ, ເຕັ້ນ ແລະ ໂດດ.

## III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານແຂນ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານແຂນ ແລະ ຂາ: ທ່າວາແຂນອອກ, ມືສອງເບື້ອງໄຂວ່ກັນ ແລະ ທ່າເຕັ້ນຈ່າງຂາ.
2. ໃຫ້ເດັກນ້ອຍເຕັ້ນສອງຂາ (ເຕັ້ນກົບ).
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນອນຫງາຍຫຼັບຕາວາແຂນອອກ, ພ້ອມທັງຈ່າງຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
2. ຄວາມຕັ້ງໃຈໃນການຟັງຄຳສັ່ງຂອງນາຍຄູ.

# ກິດຈະກຳວົງມົນ

## ຫົວຂໍ້: ສ່ວນປະກອບ ແລະ ຄຸນປະໂຫຍດຂອງຂາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກສ່ວນປະກອບ ແລະ ຄຸນປະໂຫຍດຂອງຂາ ແລະ ຕີນໄດ້ຖືກຕ້ອງ.
2. ຮ້ອງເພງດ້ວຍຄວາມເບີກບານມ່ວນຊື່ນ.
3. ເວົ້າຄຳສັບ, ເປັນປະໂຫຍກຕາມເນື້ອໃນບົດເພງ ແລະ ເວົ້າເປັນປະໂຫຍກຕາມຮູບພາບໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ສ່ວນປະກອບຂອງຂາ: ກົກຂາ, ຫົວເຂົ່າ, ແຄ່ງ, ຄໍ່ຕີນ ແລະ ຕີນ.
   - ຕີນ: ຝ່າຕີນ, ຫຼັງຕີນ, ນິ້ວຕີນ, ຂໍ້ຕີນ, ເລັບຕີນ ແລະ ນິ້ວຕີນ: ນິ້ວໂປ້, ນິ້ວຊີ້, ນິ້ວກາງ, ນິ້ວນາງ, ນິ້ວກ້ອຍ.
   - ຄຸນປະໂຫຍດຂອງຂາ ແລະ ຕີນ: ຂາ ແລະ ຕີນໃຊ້ໄວ້ຍືນ, ຍ່າງ, ແລ່ນ, ເຕັ້ນ ແລະ ໂດດ.
2. ການຮ້ອງເພງ ຂາຂອງຂ້ອຍ, ເວົ້າຄຳສັບຕາມເນື້ອໃນບົດເພງ.
   - ຄຳສັບ: ນິ້ວໂປ້, ນິ້ວຊີ້, ນິ້ວກາງ, ນິ້ວນາງ, ນິ້ວກ້ອຍ, ຂາ, ຫົວເຂົ່າ, ກົກຂາ, ແຄ່ງ, ຕີນ.
3. ເວົ້າເປັນປະໂຫຍກຕາມຮູບພາບ: ຕີນມີສອງເບື້ອງ, ຕີນລວມມີສິບນິ້ວ, ເດັກນ້ອຍຕັດເລັບຕີນໃຫ້ສັ້ນ, ເດັກນ້ອຍລ້າງຕີນໃຫ້ສະອາດ.

### III. ສື່ການຮຽນ-ການສອນ

1. ຂາ, ຕີນ; ຮູບພາບ: ຂາ, ຕີນ, ນິ້ວຕີນ, ເດັກນ້ອຍແລ່ນ, ເດັກນ້ອຍໂດດ, ເດັກນ້ອຍຕັດເລັບຕີນ, ເດັກນ້ອຍລ້າງຕີນ.
2. ບົດເພງ ຂາຂອງຂ້ອຍ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ, ສົນທະນາ, ເວົ້າຄຳສັບຕາມເນື້ອໃນບົດເພງ.
2. ໃຫ້ເດັກນ້ອຍສັງເກດເບິ່ງຂາ, ຕີນ, ສົນທະນາກ່ຽວກັບສ່ວນປະກອບ ແລະ ຄຸນປະໂຫຍດຂອງຂາ ແລະ ຕີນ.
3. ໃຫ້ເດັກນ້ອຍເວົ້າເປັນປະໂຫຍກຕາມຮູບພາບ.
4. ໃຫ້ເດັກນ້ອຍເວົ້າຄືນສ່ວນປະກອບ ແລະ ຄຸນປະໂຫຍດຂອງຂາ ແລະ ຕີນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີຮັກແພງກັນ ແລະ ຄວາມລະມັດລະວັງໃນການໃຊ້ຂາ ແລະ ຕີນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກສ່ວນປະກອບ ແລະ ຄຸນປະໂຫຍດຂອງຂາ ແລະ ຕີນ.
2. ຄວາມເບີກບານມ່ວນຊື່ນໃນການຮ້ອງເພງ.
3. ຄວາມຊັດເຈນໃນການເວົ້າເປັນຄຳສັບ, ເປັນປະໂຫຍກຕາມເນື້ອໃນບົດເພງ ແລະ ຕາມຮູບພາບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ພົ່ນສີ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການພົ່ນສີໃສ່ຮູບພາບຕີນໄດ້ຖືກຕ້ອງ.
2. ພົ່ນສີໃສ່ຮູບພາບຕີນໄດ້ສະອາດຈົບງາມ.
3. ເຝິກໃຫ້ເດັກມີຄວາມລະມັດລະວັງໃນການພົ່ນສີ.

## II. ເນື້ອໃນຕົ້ນຕໍ

ການພົ່ນສີໃສ່ຮູບພາບຕີນ.

## III. ສື່ການຮຽນ-ການສອນ

1. ສີນ້ຳ ແປງຖູແຂ້ວ.
2. ເຈ້ຍຂາວ.
3. ເຈ້ຍຮູບພາບຕີນ ແລະ ເຈ້ຍແບບຮູບພາບຕີນທີ່ພົ່ນສີແລ້ວ.
4. ຕາໜ່າງເຫຼັກ.
5. ຊາມນ້ຳ, ຜ້າເຊັດມື ແລະ ສະບູ.
6. ບົດເພງ ຂາຂອງຂ້ອຍ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຂາຂອງຂ້ອຍ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຮູບພາບຕີນທີ່ພົ່ນສີແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການພົ່ນສີ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການພົ່ນສີໃສ່ຮູບພາບຕີນ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍນຳສະເໜີຜົນງານການ ແລະ ເວົ້າຄືນຂັ້ນຕອການພົ່ນສີໃສ່ຮູບພາບຕີນ.
6. ສຶກສາອົບຮົມເດັກນ້ອຍ ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຕັດ-ຕິດຮູບພາບມື.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການພົ່ນສີ.
2. ຄວາມສະອາດຈົບງາມໃນການພົ່ນສີໃສ່ຮູບພາບຕີນ.
3. ຄວາມລະມັດລະວັງໃນການພົ່ນສີ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ຊອກຫາເພື່ອນ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນຊອກຫາເພື່ອນໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນຊອກຫາເພື່ອນໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ຊອກຫາເພື່ອນ.

## III. ສື່ການຮຽນ-ການສອນ

1. ກະແຊກ ຫຼື ກອງ.
2. ຜ້າແພ.
3. ບົດເພງ ຂາຂອງຂ້ອຍ.
4. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍ ຮ້ອງເພງ ຂາຂອງຂ້ອຍ ປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນຊອກຫາເພື່ອນ ແລະ ສາທິດວິທີຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນຊອກຫາເພື່ອນ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນໃຫ້ມີຄວາມວ່ອງໄວໃນການຫຼິ້ນ ແລະ ຊ່ວຍເຫຼືອກັນ.
6. ໃຫ້ເດັກນັ່ງລົງເອົາມືບີບແຂນ ແລະ ຂາຕົນເອງ ຫຼັງຈາກນັ້ນໃຫ້ເດັກຫຼິ້ນຕາມໃຈ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຊອກຫາເພື່ອນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນຊອກຫາເພື່ອນ.
3. ຄວາມເບີກບານມ່ວນຊື່ນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຮູບພາບການບົວລະບັດຮັກສາຕີນ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ລຽນລຳດັບຮູບພາບການບົວລະບັດຮັກສາຕີນໄດ້ຖືກຕ້ອງ.
3. ໃຊ້ຄຳເວົ້າທີ່ສຸພາບກັບໝູ່ເພື່ອນ.

## II. ເນື້ອໃນຕົ້ນຕໍ

ການລຽນລຳດັບຮູບພາບການບົວລະບັດຮັກສາຕີນ: ຮູບພາບເດັກນ້ອຍຕັດເລັບຕີນ, ລ້າງຕີນ, ໃສ່ເກີບ.

## III. ສື່ການຮຽນ-ການສອນ

1. ແຜ່ນເກມລຽນລຳດັບຮູບພາບການບົວລະບັດຮັກສາຕີນ: ຮູບພາບເດັກນ້ອຍຕັດເລັບຕີນ, ລ້າງຕີນ, ໃສ່ເກີບ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຕໍ່ຮູບພາບເດັກນ້ອຍເຕະບານ.
3. ບົດເພງ ຂາຂອງຂ້ອຍ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຂາຂອງຂ້ອຍ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່ ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມລຽນລຳດັບຮູບພາບການບົວລະບັດຮັກສາຕີນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການໃຊ້ຄຳເວົ້າທີ່ສຸພາບກັບໝູ່ເພື່ອນ.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການລຽນລຳດັບຮູບພາບການບົວລະບັດຮັກສາຕີນ.
3. ການໃຊ້ຄຳເວົ້າທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ວາງຮູບເລຂາຄະນິດສະຫຼັບສີກັນຕາມແບບໄດ້ຖືກຕ້ອງ ແລະ ຫຼິ້ນເຄື່ອງດົນຕີຢ່າງມ່ວນຊື່ນ.
3. ລຽນລຳດັບຮູບພາບການລ້າງມືຕາມຂັ້ນຕອນ ແລະ ເກມຕໍ່ຮູບພາບເດັກນ້ອຍເຕະບານໄດ້ຖືກຕ້ອງ.
4. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

## II. ເນື້ອໃນຕົ້ນຕໍ

1. ຊື່ມຸມ, ເຄື່ອງຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ.
2. ການວາງຮູບໜ່ວຍມົນສີແດງ, ຮູບກ້ອນສາກສີເຫຼືອງສະຫຼັບກັນຕາມແບບ, ຫຼິ້ນເຄື່ອງດົນຕີ: ດີດກີຕ້າ, ຕີກອງ, ເປົ່າແຄນ, ຈັບໄມໂຄຼໂຟນຮ້ອງເພງ.
3. ການລຽນລຳດັບຮູບພາບການລ້າງມືຕາມຂັ້ນຕອນ: ເອົາມືຈຸ່ມນ້ຳຖູສະບູ, ຝ່າມືຖູເຂົ້າກັນ, ຝ່າມືຮຸກຖູຫຼັງມືນິ້ວຖູຫວ່າງນິ້ວ, ຝ່າມືຖູຝ່າມືນິ້ວຖູຫວ່າງນິ້ວ, ຫຼັງນິ້ວມືຖູຝ່າມື, ຖູນິ້ວໂປ້ມືໂດຍຮອບດ້ວຍຝ່າມື, ປາຍນິ້ວມືຖູຝ່າມື, ຖູຮອບຄໍ່ມື ແລະ ການຕໍ່ຮູບພາບເດັກນ້ອຍເຕະບານ.
4. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

## III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ບັອກໜ່ວຍມົນສີແດງ, ຮູບກ້ອນສາກສີເຫຼືອງ, ເຄື່ອງດົນຕີຂອງຈິງ ຫຼື ຈຳລອງ: ກີຕ້າ, ກອງ, ແຄນ, ໄມໂຄຼໂຟນ.
2. ມຸມເກມການສຶກສາ: ແຜ່ນເກມລຽນລຳດັບຮູບພາບການເອົາມືຈຸ່ມນ້ຳຖູສະບູ, ຝ່າມືຖູເຂົ້າກັນ, ຝ່າມືຮຸກຖູຫຼັງມືນິ້ວຖູຫວ່າງນິ້ວ, ຝ່າມືຖູຝ່າມືນິ້ວຖູຫວ່າງນິ້ວ, ຫຼັງນິ້ວມືຖູຝ່າມື, ຖູນິ້ວໂປ້ມືໂດຍຮອບດ້ວຍຝ່າມື, ປາຍນິ້ວມືຖູຝ່າມື, ຖູຮອບຄໍ່ມື ແລະ ແຜນເກມຕໍ່ຮູບພາບເດັກນ້ອຍເຕະບານ; ກະດານສຽນ ຫຼື ຕິດ.
3. ບົດເພງ ຂາຂອງຂ້ອຍ ແລະ ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຂາຂອງຂ້ອຍ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ມຸມ, ເຄື່ອງຫຼິ້ນຕາມມຸມ ແລະ ແນະນຳວິທີຫຼິ້ນໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການວາງຮູບເລຂາຄະນິດສະຫຼັບສີກັນຕາມແບບ ແລະ ຄວາມມ່ວນຊື່ນໃນການຫຼິ້ນເຄື່ອງດົນຕີ.
3. ຄວາມຖືກຕ້ອງໃນລຽນລຳດັບຮູບພາບການຂັ້ນລ້າງມືຕາມຂັ້ນຕອນ ແລະ ຕໍ່ຮູບພາບເດັກນ້ອຍເຕະບານ.
4. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມນາຍຄູແນະນຳ: ຕັດເລັບຕີນ, ລ້າງຕີນ ແລະ ໃສ່ເກີບ.

### III. ສື່ການຮຽນ-ການສອນ

1. ເຊືອກ.
2. ທ່າຫັດກາຍະບໍລິຫານແຂນ ແລະ ຕີນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານແຂນ ແລະ ຕີນ: ທ່າແຂນຂວາໄຂວ່ແຂນຊ້າຍ, ແຂນຊ້າຍໄຂ່ວ ແຂນຂວາ.
2. ໃຫ້ເດັກນ້ອຍໂດດຢຽບເສັ້ນເຊືອກໄລຍະຫ່າງ 20-50 ຊມ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງກັບພື້ນຄູ້ຂາເອົາມືທັງສອງຄ່ຳພື້ນທາງຫຼັງ, ພ້ອມທັງສັ່ນຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
2. ຄວາມຕັ້ງໃຈໃນການຟັງຄຳສັ່ງຂອງນາຍຄູ.

# ກິດຈະກຳ ວົງມົນ

## ຫົວຂໍ້: ການບົວລະບັດຮັກສາຕີນ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການບົວລະບັດຮັກສາຕີນ.
2. ບອກຜົນການຮວມກຸ່ມຮູບພາບມີ 1-5 ໄດ້ຖືກຕ້ອງ.
3. ເວົ້າຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດນິທານໄດ້ຊັດເຈນ.
4. ປະຕິບັດຕົວຈິງໃນການໃສ່ເກີບ.
5. ຄວາມມ່ວນຊື່ນ ແລະ ມາລະຍາດໃນການຟັງນິທານ.

## II. ເນື້ອໃນຕົ້ນຕໍ

1. ການບົວລະບັດຮັກສາຕີນ: ຕັດເລັບຕີນ, ລ້າງຕີນ, ໃສ່ເກີບ.
2. ຟັງນິທານເລື່ອງ ເກີບຄູ່ໃໝ່, ເວົ້າເປັນຄຳສັບຕາມເນື້ອໃນບົດນິທານ.
   ຄຳສັບ: ເກີບ, ໂຮງຮຽນ, ນອນຫຼັບ, ນຸ່ງເຄື່ອງ, ຖົງຕີນ, ລ້າງຕີນ, ຍືນ, ເປື້ອນ, ແລ່ນຫຼິ້ນ, ຍ່າງ, ຕົກໃຈ, ສຽງດັງ, ກິນເຂົ້າ.
3. ການຮວມກຸ່ມຮູບພາບ 1-5.

## III. ສື່ການຮຽນ-ການສອນ

1. ຄຸນ້ຳ, ໂອ, ມີດຕັດເລັບ, ເກີບ; ຮູບພາບ: ຕີນ, ເກີບ, ແມ່ຕັດເລັບຕີນໃຫ້ລູກ, ເດັກນ້ອຍລ້າງຕີນ, ເດັກນ້ອຍໃສ່ເກີບ, ມີຈຳນວນ 1-5.
2. ບົດນິທານເລື່ອງ ເກີບຄູ່ໃໝ່ (ເບິ່ງປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບສ່ວນປະກອບຂອງຕີນ.
2. ນາຍຄູເລົ່ານິທານ, ສົນທະນາ, ເວົ້າຄຳສັບຕາມເນື້ອໃນບົດນິທານ.
3. ໃຫ້ເດັກນ້ອຍສັງເກດຮູບພາບມີ, ເອົາຮູບພາບມີສອງກຸ່ມມາຮວມເຂົ້າກັນຈຳນວນ 1-5.
4. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການບົວລະບັດຮັກສາຕີນ, ພາເດັກນ້ອຍປະຕິບັດຕົວຈິງໃນການຕັດເລັບຕີນ ແລະ ໃສ່ເກີບ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການບົວລະບັດຮັກສາຕີນ ແລະ ມາລະຍາດໃນການຟັງນິທານ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການບົວລະບັດຮັກສາຕີນ.
2. ຄວາມຊັດຊັດເຈນໃນການເວົ້າຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດນິທານ.
3. ຄວາມຖືກຕ້ອງໃນການບອກຜົນການຮວມກຸ່ມຮູບພາບມີ 1-5.
4. ການປະຕິບັດຕົວຈິງໃນການໃສ່ເກີບ.
5. ຄວາມມ່ວນຊື່ນ ແລະ ມາລະຍາດໃນການຟັງນິທານ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຕັດ, ຕິດຮູບພາບເກີບ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຕັດ-ຕິດໄດ້ຖືກຕ້ອງ.
2. ຕັດ, ຕິດຮູບພາບເກີບໄດ້ຈົບງາມ.
3. ມີຄວາມອົດທົນໃນການຕັດ, ຕິດຮູບພາບເກີບ.

## II. ເນື້ອໃນຕົ້ນຕໍ

ການຕັດ, ຕິດຮູບພາບເກີບ.

## III. ສື່ການຮຽນ-ການສອນ

1. ມີດຕັດປາຍມົນ.
2. ກາວສຳເລັດຮູບ ຫຼື ເຂົ້າໜຽວຕົ້ມ.
3. ເຈ້ຍຂາວ.
4. ຮູບພາບເກີບ.
5. ເຈ້ຍແບບຮູບພາບເກີບທີ່ຕັດ, ຕິດແລ້ວ.
6. ຊາມນໍ້າ, ຜ້າເຊັດມື ແລະ ສະບູ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງດີດນິ້ວມືເທື່ອລະນິ້ວ, ສັ່ນມື.
2. ໃຫ້ເດັກນ້ອຍສັງເກດຮູບພາບເກີບ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຕັດ-ຕິດ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຕັດ- ຕິດຮູບພາບເກີບ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍນຳສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຕັດ-ຕິດຮູບພາບເກີບ.
6. ສຶກສາອົບຮົມເດັກນ້ອຍ ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຕັດ-ຕິດຮູບພາບມື.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຕັດ-ຕິດ.
2. ຄວາມຈົບງາມໃນການຕັດ, ຕິດຮູບພາບເກີບ.
3. ຄວາມອົດທົນໃນການຕັດ-ຕິດຮູບພາບເກີບ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແຂ່ງຂັນຍ່າງເຍັ່ງແຍ້ປາຍຕີນ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນຍ່າງເຍ່ງແຍ້ປາຍຕີນໄດ້ຖືກຕ້ອງ.
2. ເຝິກຄວາມແຂງແຮງຂອງປາຍຕີນ ແລະ ກ້າມຊີ້ນຂາ.
3. ເຝິກຄວາມອົດທົນໃນເວລາຫຼິ້ນ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນຍ່າງເຍ່ງແຍ້ປາຍຕີນ.

## III. ສື່ການຮຽນ-ການສອນ

1. ໝາກຫວີດ.
2. ເຊືອກ.
3. ໄມ້ສຳລັບຂີດເສັ້ນ.
2. ວິທີຫຼິ້ນ (ເບິ່ງປື້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຢືນລຽນແຖວ ແລະ ແກ່ວງແຂນ-ຂາ ສະຫຼັບກັນໄປ-ມາ.
2. ນາຍຄູສະເໜີແບບຫຼິ້ນແຂ່ງຂັນຍ່າງເຍ່ງແຍ້ປາຍຕີນ ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນຍ່າງເຍ່ງແຍ້ປາຍຕີນ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນໃຫ້ມີຄວາມອົດທົນໃນການຍ່າງແລະມີການຊ່ວຍເຫຼືອກັນ.
6. ໃຫ້ເດັກຢືນເປັນແຖວ ແລະ ເຮັດທ່າທາງປູໄຕ່ຕາມຕົວ ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແຂ່ງຂັນຍ່າງເຍ່ງແຍ້ປາຍຕີນ.
2. ຄວາມຖືກຕ້ອງໃນການຫຼິ້ນແຂ່ງຂັນຍ່າງເຍ່ງແຍ້ປາຍຕີນ.
3. ຄວາມອົດທົນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຮູບສີ່ແຈຕາມແບບ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ລຽນລຳດັບຮູບສີ່ແຈຕາມແບບໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

## II. ເນື້ອໃນຕົ້ນຕໍ

ການລຽນລຳດັບຮູບສີ່ແຈຕາມແບບ: ນ້ອຍ, ກາງ, ໃຫຍ່.

## III. ສື່ການຮຽນ-ການສອນ

1. ແຜ່ນເກມລຽນລຳດັບຮູບສີ່ແຈລັດຕາມແບບ: ນ້ອຍ, ກາງ, ໃຫຍ່ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມລຽນລຳດັບຮູບພາບການບົວລະບັດຮັກສາ: ຮູບພາບເດັກນ້ອຍຕັດເລັບຕີນ, ລ້າງຕີນ, ໃສ່ເກີບ.
3. ບົດເພງ ຫູຂອງຫຼານ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຫູຂອງຫຼານ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່ ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມລຽນລຳດັບຮູບສີ່ແຈຕາມແບບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີໃນເກມ.
2. ຄວາມຖືກຕ້ອງໃນການລຽນລຳດັບຮູບສີ່ແຈຕາມແບບ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມບົດບາດສົມມຸດ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ຕໍ່ບູ້ອກເປັນຮູບຕ່າງໆຕາມຈິນຕະນາການຢ່າງມ່ວນຊື່ນ ແລະ ວາງຮູບເລຂາຄະນິດສະຫຼັບສີກັນຕາມແບບໄດ້ຖືກຕ້ອງ.
3. ຫຼິ້ນບົດບາດສົມມຸດເປັນອ້າຍ ຫຼື ເອື້ອຍ, ນ້ອງ ແລະ ເປັນນາຍຄູຢ່າງມ່ວນຊື່ນ.
4. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

## II. ເນື້ອໃນຕົ້ນຕໍ

1. ຊື່ມຸມ, ເຄື່ອງຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມບົດບາດສົມມຸດ.
2. ການຕໍ່ບູ້ອກເປັນຮູບຮ່າງຕ່າງໆຕາມຈິນຕະນາການ ແລະ ວາງຮູບໝ່ວຍມົນສີແດງ, ຮູບກ້ອນສາກສີເຫຼືອງສະຫຼັບກັນຕາມແບບ.
3. ການຫຼິ້ນບົດບາດສົມມຸດເປັນອ້າຍ ຫຼື ເອື້ອຍແຕ່ງຕົວໃຫ້ນ້ອງ: ອາບນ້ຳ, ທາແປ້ງ, ຫວີຜົມ ແລະ ມັດຜົມ; ເປັນນາຍຄູພາເດັກນ້ອຍລ້າງມື ແລະ ຕັດເລັບມື.

## III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ຊຸດບູ້ອກ; ບູ້ອກໝ່ວຍມົນສີແດງ, ຮູບກ້ອນສາກສີເຫຼືອງ.
2. ມຸມບົດບາດສົມມຸດ: ຕຸກກະຕາ, ຊາມ, ແປ້ງ, ຫວີ, ຢາງມັດຜົມ, ມີດຕັດເລັບຈຳລອງ, ຜ້າເຊັດມື.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

## IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມບົດບາດສົມມຸດ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມບົດບາດສົມມຸດ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຕໍ່ບູ້ອກເປັນຮູບຕ່າງໆຕາມຈິນຕະນາການ ແລະ ຄວາມຖືກຕ້ອງໃນການວາງຮູບເລຂາຄະນິດສະຫຼັບສີກັນຕາມແບບ.
3. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນອ້າຍ ຫຼື ເອື້ອຍ, ນ້ອງ ແລະ ເປັນນາຍຄູ.
4. ການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

# ຈຸດປະສົງສຳລັບ ອາທິດທີ 4

## ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງໄດ້ຖືກຕ້ອງ.
3. ສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດເພງ, ຄຳຄອງຢ່າງມ່ວນຊື່ນ.
4. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.
5. ມ່ວນຊື່ນໃນເວລາສະແດງທ່າທາງ.
6. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.
7. ກ້າສະແດງອອກໃນເວລາສະແດງທ່າທາງ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍໄດ້ຖືກຕ້ອງ.
2. ມີຄວາມເບີກບານມ່ວນຊື່ນໃນການຮ້ອງເພງ.
3. ເລົ່າຄຳຄ່ອງ, ເວົ້າເປັນຄຳສັບ, ເປັນປະໂຫຍກຕາມເນື້ອໃນຄຳຄ່ອງ, ບົດເພງ, ນິທານ ແລະ ຕາມຮູບພາບໄດ້ຊັດ
4. ບອກອາຫານ, ເຄື່ອງດື່ມທີ່ຄວນກິນ ແລະ ບໍ່ຄວນກິນໄດ້ຖືກຕ້ອງ.
5. ອ່ານຕາມລຳດັບຕົວເລກແຕ່ 0-5 ໄດ້ຖືກຕ້ອງ.
6. ບອກການປຸງແຕ່ງອາຫານ, ເຄື່ອງດື່ມ, ຄວາມປອດໄພໃນເວລາແຕ່ງອາຫານ ແລະ ເຄື່ອງດື່ມໄດ້ຖືກຕ້ອງ.
7. ປະຕິບັດຕົວຈິງປຸງແຕ່ງອາຫານ (ຈືນໄຂ່), ນ້ຳໝາກນາວ.
8. ມີຄວາມສາມັກຄີກັບໝູ່ເພື່ອນ.
9. ບອກອະໄວຍະວະຂອງຮ່າງກາຍ ຫຼື ເຄື່ອງນຸ່ງຫົ່ມທີ່ເປັນຮູບວົງມົນ, ສາມແຈ, ຈະຕຸລັດ, ສີ່ແຈໄດ້ຖືກຕ້ອງ.
10. ບອກການຮັກສາສຸຂະພາບ: ອອກກຳລັງກາຍ, ພັກຜ່ອນ, ຂັບຖ່າຍ ແລະ ຫຼິ້ນໄດ້ຖືກຕ້ອງ.
11. ມີຄວາມມ່ວນຊື່ນ ແລະ ມີມາລະຍາດໃນການຟັງນິທານ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການທາສີຮູບພາບ, ຂີດຂຽນຕົວເລກ 2-3 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ, ຈີກ, ຕິດຮູບພາບ: ໄຂ່ຈືນ ແລະ ຮູບພາບຜັກ, ແຕ້ມ ແລະ ທາສີ, ປັ້ນດິນເປັນຮູບຕ່າງໆໄດ້ຖືກຕ້ອງ.
2. ທາສີຮູບພາບ: ປາ, ໄຂ່ ແລະ ສາລີໄດ້ຈົບງາມ ແລະ ຢູ່ໃນຂອບ.
3. ຂີດຂຽນຕົວເລກ 0-5 ໄດ້ຈົບງາມ.
4. ເຝິກປະສາດສຳພັນລະຫວ່າງມືກັບສາຍຕາໃຫ້ຄ່ອງແຄ້ວໃນການຈີກ, ຕິດຮູບພາບໄຂ່ຈືນ ແລະ ຮູບພາບຜັກ.
5. ແຕ້ມ ແລະ ທາສີຮູບພາບໝາກໄມ້ຕາມຈິນຕະນາການໄດ້ສະອາດຈົບງາມ ແລະ ຢູ່ໃນຂອບ.
6. ປັ້ນດິນເປັນຮູບຕ່າງໆຕາມຈິນຕະນາການໄດ້ຄ້າຍຄື.
7. ມີຄວາມອົດທົນໃນການຂີດຂຽນຕົວເລກແຕ່ 2-3 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ.
8. ມີຄວາມອົດທົນໃນການຈີກ, ຕິດ ຮູບພາບໄຂ່ຈືນ ແລະ ຮູບພາບຜັກ.
9. ແບ່ງປັນສໍສີ ແລະ ດິນປັ້ນໃຫ້ໝູ່ເພື່ອນ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ບອກຂັ້ນຕອນໃນການຈັດໝວດໝູ່ຮູບເລຂາຄະນິດ, ຈັບຄູ່ຮູບພາບທີ່ຄືກັນ.
3. ສຶກສາລາຍລະອຽດກ່ຽວກັບອາຫານໄດ້ຖືກຕ້ອງ.
4. ວາງຮູບຈະຕຸລັດ, ສີ່ແຈ, ສາມແຈ, ວົງມົນເປັນຮູບເຄື່ອງນຸ່ງຕາມແບບໄດ້ຖືກຕ້ອງ.
5. ຕໍ່ຮູບພາບອາຫານໄດ້ຖືກຕ້ອງ.
6. ຈັດໝວດໝູ່ຮູບເລຂາຄະນິດໄດ້ຖືກຕ້ອງ.
7. ຈັບຄູ່ຮູບພາບການປະຕິບັດກິດຈະກຳຂອງເດັກນ້ອຍທີ່ຄືກັນໄດ້ຖືກຕ້ອງ.
8. ອົດທົນໃນເວລາຈັດໝວດໝູ່ຮູບເລຂາຄະນິດ.
9. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.
10. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.
11. ແບ່ງປັນເກມໃຫ້ໝູ່ເພື່ອນ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຈັບຄູ່ທີ່ຄືກັນຮູບພາບອາຫານຕາມປະເພດ, ຈັບຄູ່ທີ່ຄືກັນຮູບພາບອາຫານປະເພດໝາກໄມ້, ຈັບຄູ່ທີ່ຄືກັນຮູບພາບອາຫານປະເພດຜັກ, ຈັບຄູ່ທີ່ຄືກັນຮູບພາບກິດຈະກຳປະຈຳວັນຂອງເດັກນ້ອຍໄດ້ຖືກຕ້ອງ.
3. ຈັດໝວດໝູ່ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດຕາມຂະໜາດໄດ້ຖືກຕ້ອງ.
4. ອົດທົນໃນເວລາຫຼິ້ນເກມ
5. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.
6. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຕໍ່ບຼັອກເປັນຮູບຕ່າງໆຕາມຈິນຕະນາການ, ວາງຮູບເລຂາຄະນິດສະຫຼັບສີກັນຕາມແບບ, ຕໍ່ບຼັອກຕາມແບບ, ພິມຕົວເລກ 0-5 ໃສ່ອ່າງດິນຊາຍຢ່າງມ່ວນຊື່ນ.
3. ທາສີຮູບພາບປາ, ໄຂ່, ສາລີ, ຕັດ-ຕິດຮູບພາບເກີບ, ຂຽນຕົວເລກ 0-1 ຕາມຮອຍຈ້ຳ ແລະ ຕາມໃຈ, ແຕ້ມ ແລະ ທາສີຮູບພາບໝາກໄມ້ ແລະ ຂີດຂຽນ 2-3 ຕົວເລກຕາມຮອຍຈ້ຳ ແລະ ຕາມໃຈໄດ້ຖືກຕ້ອງ.
4. ເວົ້າເປັນປະໂຫຍກຕາມຮູບພາບ: ໝາກຫຸ່ງສຸກມີສີເຫຼືອງ, ສາລີຕົ້ມຮ້ອນໆ, ໝາກແຕງໂມສຸກສີແດງ, ສຸບຜັກ, ແກງຜັກ, ອ່ານອອກສຽງຄຳສັບທີ່ມີສະຫຼະ ×າ ແລະ ບອກພະຍັນຊະນະຕົ້ນ, ອ່ານຕາມຮູບພາບປຶ້ມນິທານເລື່ອງ ໝີນ້ອຍແຂງແຮງ, ເວົ້າເປັນປະໂຫຍກຕາມຮູບພາບ: ເດັກນ້ອຍກິນເຂົ້າເຊົ້າກັບຈືນໄຂ່, ເດັກນ້ອຍກິນເຂົ້າສວຍກັບຂົ້ວຜັກກາດ, ເດັກນ້ອຍກິນເຂົ້າກັບປີ້ງຊີ້ນ, ເດັກນ້ອຍດື່ມນ້ຳໝາກໄມ້, ບໍ່ກິນອາຫານມີແມງວັນ ຕອມຕາມຮູບພາບໄດ້ຊັດເຈນ.
5. ເປັນພໍ່ຄ້າ, ແມ່ຄ້າ, ລູກຄ້າຊື້ຂາຍອາຫານ, ເປັນແມ່ລ້ຽງປຸງແຕ່ງອາຫານ: ຈືນໄຂ່, ຂົ້ວຜັກກາດ, ປີ້ງຊີ້ນ, ເປັນເອື້ອຍລ້ຽງປຸງແຕ່ງອາຫານ: ຍຳສະຫຼັດ, ຈືນໄຂ່, ຈັບຄູ່ທີ່ຄືກັນຮູບພາບກິດຈະກຳປະຈຳວັນຂອງເດັກນ້ອຍ ແລະ ຈັດໝວດໝູ່ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດຕາມຂະໜາດໄດ້ຖືກຕ້ອງ.
6. ເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.
7. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.
8. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ: ເວົ້າຄຳວ່າປາສະແດງທ່າທາງປາລອຍນ້ຳ, ເວົ້າຄຳວ່າເຂົ້າສະແດງທ່າທາງກິນເຂົ້າ, ເວົ້າຄຳວ່າໝາກກ້ວຍເຮັດທ່າທາງປອກໝາກກ້ວຍ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານຂາ ແລະ ແຂນ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານຂາ ແລະ ແຂນ: ທ່າໝູນຫົວເຂົ່າ ແລະ ເນັດແຂນ.
2. ໃຫ້ເດັກນ້ອຍຍ່າງເຢ່ງເຢ້ຂຶ້ນລົງເປັນ 2 ແຖວຄູ່.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຊາຍນັ່ງອັດສະໝາກຫຼັບຕາສະມາທິ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ.
2. ການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍໄດ້ຖືກຕ້ອງ.
2. ຮ້ອງເພງ ຢ່າງມ່ວນຊື່ນ.
3. ເວົ້າຄຳສັບ, ເປັນປະໂຫຍກຕາມເນື້ອໃນບົດເພງ ແລະ ເວົ້າເປັນປະໂຫຍກຕາມຮູບພາບໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ:
   - ຊີ້ນສັດ, ປາ, ໄຂ່, ນົມ, ຖົ່ວເຫຼືອງຊ່ວຍໃຫ້ພະລັງງານໃນການເຄື່ອນໄຫວ.
   - ເຂົ້າ, ເຜືອກ, ມັນ, ສາລີ, ໝາກກ້ວຍ, ໝາກພ້າວ, ນ້ຳມັນສັດ ແລະ ນ້ຳຕານຊ່ວຍໃຫ້ຮ່າງກາຍເຕີບໃຫຍ່.
   - ໝາກໄມ້ສຸກ, ນ້ຳສະອາດ ແລະ ຜັກຊ່ວຍໃຫ້ຮ່າງກາຍແຂງແຮງ.
2. ການຮ້ອງເພງ ອາຫານດີມີປະໂຫຍດ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດເພງ.
   - ຄຳສັບ: ອາຫານ, ຜັກ, ຊີ້ນໝູ, ຊີ້ນປາ, ເຂົ້າ, ເຜືອກ, ມັນ,ສາລີ, ໝາກກ້ວຍ, ໝາກຫຸ່ງ.
   - ປະໂຫຍກ: ອາຫານດີມີປະໂຫຍດ, ເດັກນ້ອຍກິນເຂົ້າກັບຊີ້ນໝູ, ເດັກນ້ອຍກິນຜັກ ແລະ ໝາກໄມ້.
3. ການເວົ້າເປັນປະໂຫຍກຕາມຮູບພາບ: ໝາກຫຸ່ງສຸກມີສີເຫຼືອງ, ສາລີຕົ້ມຮ້ອນໆ, ໝາກແຕງໂມສຸກສີແດງ,ຫຼາບຊຸບ ຜັກ ແລະ ແກງຜັກ.

### III. ສື່ການຮຽນ-ການສອນ

1. ໄຂ່, ເຂົ້າ, ໝາກກ້ວຍ, ໝາກໄມ້ສຸກ; ໂປສະເຕີ ອາຫານ 5 ໝູ່; ຮູບພາບ: ໝາກຫຸ່ງສຸກ, ສາລີຕົ້ມຮ້ອນໆ, ໝາກແຕງໂມສຸກ, ຊຸບຜັກ ແລະ ແກງຜັກ.
2. ບົດເພງ ອາຫານດີມີປະໂຫຍດ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບອາຫານ ແລະ ເຄື່ອງດື່ມທີ່ເດັກນ້ອຍເຄີຍກິນ.
2. ໃຫ້ເດັກນ້ອຍຮ້ອງເພງ, ສົນທະນາ, ເວົ້າຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດເພງ.
3. ໃຫ້ເດັກນ້ອຍສັງເກດໂປສະເຕີອາຫານ5ໝູ່, ສົນທະນາກ່ຽວກັບອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ.
4. ໃຫ້ເດັກນ້ອຍເວົ້າເປັນປະໂຫຍກຕາມຮູບພາບ.
5. ໃຫ້ເດັກນ້ອຍເວົ້າຄືນຊື່ອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນອາຫານ ແລະ ການກິນອາຫານທີ່ມີປະໂຫຍດຕໍ່ຮ່າງກາຍ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ.
2. ຄວາມເບີກບານມ່ວນຊື່ນໃນການຮ້ອງເພງ.
3. ຄວາມຊັດເຈນໃນການເວົ້າຄຳສັບ, ເປັນປະໂຫຍກຕາມເນື້ອໃນບົດເພງ ແລະ ຮູບພາບ.

# ກິດຈະກຳ ສິລະປະສ້າງສັນ

## ຫົວຂໍ້: ທາສີຮູບພາບປາ, ໄຂ່ ແລະ ສາລີ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການທາສີຮູບພາບໄດ້ຖືກຕ້ອງ.
2. ທາສີຮູບພາບປາ, ໄຂ່ ແລະ ສາລີໄດ້ຈົບງາມ ແລະ ຢູ່ໃນຂອບ.
3. ແບ່ງປັນສໍສີໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການທາສີຮູບພາບ: ປາ, ໄຂ່ ແລະ ສາລີ.

### III. ສື່ການຮຽນ-ການສອນ

1. ສໍສີທຽນ ຫຼື ສໍສີໄມ້.
2. ເຈ້ຍຮູບພາບ: ປາ, ໄຂ່ ແລະ ສາລີ.
3. ເຈ້ຍແບບຮູບພາບປາ, ໄຂ່ ແລະ ສາລີທີ່ທາສີແລ້ວ.
4. ບົດເພງ ອາຫານດີມີປະໂຫຍດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ອາຫານດີມີປະໂຫຍດ ປະກອບທ່າທາງ
2. ໃຫ້ເດັກນ້ອຍສັງເກດຮູບພາບ: ປາ, ໄຂ່, ສາລີ; ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການທາສີ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການທາສີຮູບພາບ: ປາ, ໄຂ່ ແລະ ສາລີ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການທາສີຮູບພາບ: ປາ, ໄຂ່ ແລະ ສາລີ.
6. ສຶກສາອົບຮົມເດັກນ້ອຍ ກ່ຽວກັບຄວາມສາມັກຄີ, ຄວາມອົດທົນ ແລະ ເກັບມ້ຽນຜົນງານ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຕ້ອງໃນການບອກຂັ້ນຕອນການທາສີຮູບພາບ.
2. ຄວາມຈົບງາມໃນການທາສີຮູບພາບປາ, ໄຂ່, ສາລີ ແລະ ຢູ່ໃນຂອບ.
3. ການແບ່ງປັນສໍສີໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ຫຼິ້ນນ້ຳ-ຫຼິ້ນຊາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ, ກະຕິກາການຫຼິ້ນຣ່າຍນ້ຳໃສ່ແກ້ວ ແລະ ປັ້ນຊາຍເປັນຮູບຕ່າງໆໄດ້.
2. ຫຼິ້ນຣ່າຍນ້ຳໃສ່ແກ້ວ ແລະ ປັ້ນຊາຍໄດ້ຄ່ອງແຄ້ວ.
3. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງ.
4. ຊ່ວຍເຫຼືອເຊິ່ງກັນແລະກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນຣ່າຍນ້ຳໃສ່ແກ້ວ ແລະ ປັ້ນດິນຊາຍ ໃຫ້ເປັນຮູບຕ່າງໆ.

### III. ສື່ການຮຽນ-ການສອນ

1. ຄຸນ້ຳ, ຄຸນ້ຳສີແດງ, ສີຂຽວ, ຈວາຍ, ກະປອງໃຫຍ່, ແກ້ວ, ບົວນ້ອຍ ແລະ ສາຍຢາງ.
2. ແຜ່ນຜ້າຢາງ.
3. ບົດເພງ ອາຫານດີມີປະໂຫຍດ.
4. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ອາຫານດີມີປະໂຫຍດ ປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນຣ່າຍນ້ຳສີໃສ່ແກ້ວແລະປັ້ນດິນຊາຍ ໃຫ້ເປັນຮູບຕ່າງໆ ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນຣ່າຍນ້ຳສີໃສ່ແກ້ວ ແລະ ປັ້ນດິນຊາຍໃຫ້ເປັນຮູບຕ່າງໆ ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການຫຼິ້ນໃຫ້ລະວັງບໍ່ໃຫ້ເຄື່ອງນຸ່ງປຽກ, ບໍ່ຫວ່ານຊາຍໃສ່ກັນ, ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີຫຼິ້ນແລ້ວລ້າງມື, ລ້າງຕີນ ແລະ ເກັບມ້ຽນອຸປະກອນ.
6. ໃຫ້ເດັກນ້ອຍຢືນຂຶ້ນເຮັດທ່າທາງລູບຊາຍອອກຈາກແຂນ ແລະ ຂາ ຫຼັງຈາກນັ້ນໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນຣ່າຍນ້ຳສີໃສ່ແກ້ວ, ປັ້ນດິນຊາຍເປັນຮູບຕ່າງໆ.
2. ຄວາມຄ່ອງແຄ້ວໃນການຫຼິ້ນຣ່າຍນ້ຳໃສ່ແກ້ວ ແລະ ປັ້ນດິນຊາຍ.
3. ຄວາມແຂງແຮງຂອງກ້າມຊີ້ນມືໃນເວລາຫຼິ້ນ.
4. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບອາຫານຕາມປະເພດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບອາຫານຕາມປະເພດໄດ້ຖືກຕ້ອງ.
3. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບອາຫານຕາມປະເພດ: ຊີ້ນ, ໄຂ່, ປາ, ນົມ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບອາຫານຕາມປະເພດ: ຊີ້ນ, ໄຂ່, ປາ, ນົມ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມລຽນລຳດັບຮູບພາບການປົວລະບັດຮັກສາຕີນ.
3. ບົດເພງ ອາຫານດີມີປະໂຫຍດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ອາຫານດີມີປະໂຫຍດ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຮູບພາບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການໃຊ້ຄຳເວົ້າທີ່ສຸພາບ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບອາຫານຕາມປະເພດ.
3. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ທາສີໃສ່ຮູບພາບ, ຕັດຕິດຮູບພາບເກີບໄດ້ຖືກຕ້ອງ.
3. ເວົ້າເປັນປະໂຫຍກຕາມຮູບພາບ ແລະ ເວົ້າຄຳສັບທີ່ມີສະຫຼະ ×າ ແລ້ວບອກພະຍັນຊະນະຕົ້ນໄດ້ຊັດເຈນ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ມຸມ, ເຄື່ອງຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
2. ການທາສີໃສ່ຮູບພາບປາ, ໄຂ່, ສາລີ ແລະ ຕັດ, ຕິດຮູບພາບເກີບ.
3. ການເວົ້າເປັນປະໂຫຍກຕາມຮູບພາບ: ໝາກຫຸ່ງສຸກມີສີເຫຼືອງ, ສາລີຕົ້ມຮ້ອນໆ, ໝາກແຕງໂມສຸກສີແດງ, ຊຸບຜັກ ແລະ ແກງຜັກ; ເວົ້າຄຳສັບທີ່ມີສະຫຼະ ×າ ຕາມຮູບພາບ: ປາ, ສາລີ ແລ້ວເວົ້າພະຍັນຊະນະຕົ້ນ: ປ, ສ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ສໍສີໄມ້ ຫຼື ສີທຽນ ແລະ ສໍດຳ; ຮູບພາບປາ, ໄຂ່ ແລະ ສາລີ; ເຈ້ຍຮູບພາບເກີບ;
2. ມຸມອ່ານ: ຮູບພາບໝາກຮຸ່ງສຸກ, ສາລີຕົ້ມຮ້ອນໆ, ໝາກແຕງໂມສຸກ, ຊຸບຜັກ ແລະ ແກງຜັກ; ກະດານສຽບ ຫຼື ຕິດ.
3. ບົດເພງ ອາຫານດີມີປະໂຫຍດ ແລະ ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ອາຫານດີມີປະໂຫຍດ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ມຸມ, ເຄື່ອງຫຼິ້ນຕາມມຸມ ແລະ ແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການທາສີໃສ່ຮູບພາບ ແລະ ຕັດຕິດຮູບພາບເກີບ.
3. ຄວາມຊັດເຈນໃນການເວົ້າເປັນປະໂຫຍກຕາມຮູບພາບ ແລະ ເວົ້າຄຳສັບທີ່ມີສະຫຼະ ×າ ແລ້ວບອກພະຍັນຊະນະຕົ້ນ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດເພງ ອາຫານດີມີປະໂຫຍດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງໄດ້ຖືກຕ້ອງ.
2. ມ່ວນຊື່ນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ ອາຫານດີມີປະໂຫຍດ.

### III. ສື່ການຮຽນ-ການສອນ

1. ກອງ.
2. ບົດເພງ ອາຫານດີມີປະໂຫຍດ.
3. ທ່າຫັດກາຍະບໍລິຫານລຳຕົວ ແລະ ແຂນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຕົວ ແລະ ຂາ: ທ່າຫງ່ຽງລຳຕົວໄປເບື້ອງຊ້າຍ-ເບື້ອງຂວາ ແລະ ທ່າຢືນຂາດຽວຍົກຂາຂຶ້ນທາງໜ້າເອົາມືຍົກໄວ້.
2. ໃຫ້ເດັກນ້ອຍຍ່າງຕາມທາງແຄບ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຢຽດຂາຊື່ໄປທາງໜ້າ, ເອົາມືທັງສອງຄ່ຳພື້ນທາງຫຼັງ, ເງີຍໜ້າຫາຍໃຈເຂົ້າ-ອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມມ່ວນຊື່ນໃນການສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
2. ຄວາມມ່ວນຊື່ນໃນການສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ການກິນອາຫານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກອາຫານ, ເຄື່ອງດື່ມທີ່ຄວນດື່ມ ແລະ ບໍ່ຄວນດື່ມໄດ້ຖືກຕ້ອງ.
2. ເວົ້າຄຳສັບຕາມຮູບພາບໄດ້ຊັດເຈນ.
3. ອ່ານຕາມລຳດັບຕົວເລກແຕ່ 0-5 ໄດ້ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ການກິນອາຫານໃຫ້ຄົບຖ້ວນ ແລະ ຖືກຕ້ອງຕາມເວລາ: ເຊົ້າ, ສວາຍ, ແລງ.
   - ອາຫານຫວ່າງທີ່ຄວນກິນ: ນ້ຳເຕົ້າຮູ້, ນ້ຳໝາກໄມ້, ນົມ. ໝາກໄມ້.
   - ອາຫານທີ່ບໍ່ຄວນກິນ: ອາຫານບູດເນົ່າ, ອາຫານທີ່ມີແມງວັນຕອມ, ອາຫານທີ່ໃສ່ສີ.
   - ເຄື່ອງດື່ມທີ່ບໍ່ຄວນດື່ມ: ນ້ຳອັດລົມ, ນ້ຳຊີໂລ (zero water).
2. ການເວົ້າເປັນຄຳສັບຕາມຮູບພາບ: ນົມ, ອາຫານ, ນ້ຳເຕົ້າຮູ້, ໝາກໄມ້.
3. ການອ່ານຕາມລຳດັບຕົວເລກແຕ່ 0-5.

### III. ສື່ການຮຽນ-ການສອນ

1. ນົມ, ນ້ຳໝາກນາວ, ນ້ຳແປບຊີ.
2. ຮູບພາບ: ອາຫານທີ່ມີແມງວັນຕອມ.
3. ບັດຕົວເລກ 0-5.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ.
2. ໃຫ້ເດັກນ້ອຍບອກຊື່ອາຫານ ແລະ ເຄື່ອງດື່ມທີ່ເດັກນ້ອຍເຄີຍກິນໃນແຕ່ລະເວລາ.
3. ໃຫ້ເດັກນ້ອຍສັງເກດ ນ້ຳນົມ, ນ້ຳໝາກນາວ, ນ້ຳແປບຊີ, ຮູບພາບອາຫານທີ່ມີແມງວັນຕອມ, ສົນທະນາກ່ຽວກັບອາຫານຫວ່າງທີ່ຄວນກິນ ແລະ ອາຫານທີ່ບໍ່ຄວນກິນ.
4. ໃຫ້ເດັກນ້ອຍເວົ້າຄຳສັບຕາມຮູບພາບ.
5. ໃຫ້ເດັກນ້ອຍອ່ານຕົວເລກຕາມລຳດັບແຕ່ 0-5.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການກິນອາຫານ ແລະ ໃນການປະຕິບັດຕົນໃນການກິນອາຫານ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກອາຫານ, ເຄື່ອງດື່ມທີ່ຄວນກິນ ແລະ ບໍ່ຄວນກິນ.
2. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ເປັນປະໂຫຍກຕາມຮູບພາບ.
3. ຄວາມຖືກຕ້ອງໃນການອ່ານຕາມລຳດັບຕົວເລກແຕ່ 0-5.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນຕົວເລກ 2-3 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຕົວເລກ ແລະ ຂັ້ນຕອນການຂີດຂຽນຕົວເລກ 2-3 ຕາມຮອຍຈ້ຳ ແລະ ຂຽນຕາມໃຈໄດ້ຖືກຕ້ອງ.
2. ຂີດຂຽນຕົວເລກໄດ້ຈົບງາມ.
3. ມີຄວາມອົດທົນໃນການຂີດຂຽນຕົວເລກແຕ່ 2-3 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນຕົວເລກແຕ່ 2-3 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ.

### III. ສື່ການຮຽນ-ການສອນ

1. ສໍດຳ ແລະ ຢາງລຶບ.
2. ປຶ້ມບົດເຝິກຫັດຄະນິດສາດເຫຼັ້ມທີ 1 (ໜ້າ 2) ຫຼື ເຈ້ຍຕົວເລກ 2-3 ທີ່ມີຮອຍຈ້ຳ.
3. ເຈ້ຍແບບຕົວເລກ 2-3 ທີ່ຂຽນແລ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງຂີດຂຽນໜັງສືເທິງກາງຫາວ.
2. ໃຫ້ເດັກນ້ອຍສັງເກດຕົວເລກແຕ່ 2-3 ແລ້ວອ່ານ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຂີດຂຽນ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຂີດຂຽນຕົວເລກແຕ່ 2-3 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັດນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຂີດຂຽນຕົວເລກແຕ່ 2-3 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ຄວາມອົດທົນ ແລະ ເກັບມ້ຽນຜົນງານ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຕົວເລກ ແລະ ຂັ້ນຕອນການຂີດຂຽນຕົວເລກ 2-3 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ.
2. ຄວາມຈົບງາມໃນການຂີດຂຽນຕົວເລກ.
3. ຄວາມອົດທົນໃນການຂີດຂຽນຕົວເລກແຕ່ 2-3 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແຂ່ງຂັນເຕັ້ນຂ້າມແກັດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມແກັດໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມແກັດໄດ້ຖືກຕ້ອງ.
3. ມີຄວາມປອດໄພໃນເວລາຫຼິ້ນແບບຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມແກັດ.

### III. ສື່ການຮຽນ-ການສອນ

1. ໝາກຫວີດ.
2. ແກັດເປົ່າ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຢືນລຽນແຖວ ແລະ ເບັດແອວ, ສັ່ນຄໍ່ມື, ຍ່ຳເທົ້າຢູ່ກັບທີ່.
2. ນາຍຄູສະເໜີແບບຫຼິ້ນແຂ່ງຂັນເຕັ້ນຂ້າມແກັດ ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມແກັດ ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ມີຄວາມຕັ້ງໃຈໃນການຫຼິ້ນ ແລະ ເກັບເຄື່ອງມ້ຽນຊ່ວຍກັນ.
6. ໃຫ້ເດັກນ້ອຍຍ່າງແກວ່ງແຂນຕາມຫຼັງກັນໄປຍ່າງຊ້າໆ, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ ແຂ່ງຂັນເຕັ້ນຂ້າມແກັດ.
2. ຄວາມຖືກຕ້ອງໃນການຫຼິ້ນແຂ່ງຂັນເຕັ້ນຂ້າມແກັດ.
3. ຄວາມປອດໄພໃນເວລາຫຼິ້ນແບບຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບພາບອາຫານປະເພດໝາກໄມ້

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບພາບອາຫານປະເພດໝາກໄມ້ໄດ້ຖືກຕ້ອງ.
3. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບພາບອາຫານປະເພດໝາກໄມ້: ໝາກຂຽບ, ມ່ວງ, ຂາມ, ລຳໄຍ, ກ້ວຍ, ກ້ຽງ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັບຮູບພາບອາຫານປະເພດໝາກໄມ້: ໝາກຂຽບ, ມ່ວງ, ຂາມ, ລຳໄຍ, ກ້ວຍ, ກ້ຽງ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ  ເກມຈັບຄູ່ທີ່ຄືກັບຮູບພາບອາຫານຕາມປະເພດ: ຊີ້ນ, ໄຂ່, ປາ, ນົມ.
3. ບົດເພງ ອາຫານດີມີປະໂຫຍດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍ ຮ້ອງເພງ ອາຫານດີມີປະໂຫຍດ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່ ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັບຮູບພາບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການການຈັບຄູ່ທີ່ຄືກັບຮູບພາບອາຫານປະເພດໝາກໄມ້.
3. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ຫຼິ້ນບົດບາດສົມມຸດເປັນພໍ່ຄ້າ, ແມ່ຄ້າ, ລູກຄ້າ ແລະ ເປັນແມ່ລ້ຽງຢ່າງມ່ວນຊື່ນ.
3. ຂຽນຕົວເລກຕາມຮອຍຈ້ຳ, ຂຽນຕາມໃຈ ແລະ ທາສີຮູບພາບໄດ້ຖືກຕ້ອງ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ມຸມ, ເຄື່ອງຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
2. ການຫຼິ້ນເປັນພໍ່ຄ້າ, ແມ່ຄ້າ ແລະ ລູກຄ້າຊື້ຂາຍອາຫານ; ເປັນແມ່ລ້ຽງປຸງແຕ່ງອາຫານ: ຈືນໄຂ່, ຂົ້ວຜັກກາດ, ປີ້ງຊີ້ນ.
3. ການຂຽນຕົວເລກ 0-1 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ; ທາສີໃສ່ຮູບພາບປາ, ໄຂ່ ແລະ ສາລີ.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ເຄື່ອງຫຼິ້ນຂອງເຮືອນນ້ອຍ, ຜັກ ແລະ ອາຫານຈຳລອງ.
2. ມຸມສິລະປະສ້າງສັນ: ສໍດຳ, ຢາງລຶບ, ສໍສີໄມ້ ຫຼື ສີທຽນ, ປຶ້ມບົດເຝິກຫັດຄະນິດສາດ ຫຼື ເຈ້ຍຕົວເລກ 0-1, ເຈ້ຍຮູບພາບ ປາ, ໄຂ່ ແລະ ສາລີ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູສົນທະນາກັບເດັກກ່ຽວກັບຊື່ມຸມ, ເຄື່ອງຫຼິ້ນຕາມມຸມ ແລະ ແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນພໍ່ຄ້າ, ແມ່ຄ້າ ແລະ ລູກຄ້າ ແລະ ເປັນແມ່ລ້ຽງ.
3. ຄວາມຖືກຕ້ອງໃນການຂຽນຕົວເລກຕາມຮອຍຈ້ຳ, ຂຽນຕາມໃຈ ແລະ ທາສີຮູບພາບ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນຕະນາການປະກອບບົດເພງ ອາຫານດີມີປະໂຫຍດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດເພງຢ່າງມ່ວນຊື່ນ.
2. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດເພງ ອາຫານດີມີປະໂຫຍດ.

### III. ສື່ການຮຽນ-ການສອນ

1. ກອງ.
2. ບົດເພງ ອາຫານດີມີປະໂຫຍດ.
3. ທ່າຫັດກາຍະບໍລິຫານແຂນ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານແຂນ ແລະ ຂາ: ທ່າໝູນແຂນເປັນວົງເບື້ອງຊ້າຍ-ຂວາ, ທ່າຢືນຂາດຽວ, ຍົກຂາຂຶ້ນທາງຫຼັງເອົາມືຈັບໄວ້ (ເຮັດສັບປ່ຽນກັນ).
2. ໃຫ້ເດັກນ້ອຍແລ່ນເກັບຂອງຫຼິ້ນ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດເພງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຢືນເຮັດທ່າທາງຈັບດອກໄມ້ມາດົມ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດເພງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

1. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດເພງ.
2. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກຳວົງມົນ

## ຫົວຂໍ້: ການປຸງແຕ່ງອາຫານ ແລະ ຄວາມປອດໄພ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການປຸງແຕ່ງອາຫານ ແລະ ຄວາມປອດໄພໃນເວລາແຕ່ງອາຫານໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງປຸງແຕ່ງອາຫານ (ຈືນໄຂ່).
3. ເວົ້າຄຳສັບ ແລະ ເປັນປະໂຫຍກຕາມຮູບພາບໄດ້ຊັດເຈນ.
4. ມີຄວາມສາມັກຄີກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ການປຸງແຕ່ງອາຫານ ແລະ ຄວາມປອດໄພ:
   - ການປຸງແຕ່ງອາຫານ: ຍຳສະຫຼັດ, ຈືນໄຂ່ ແລະ ອາຫານທີ່ມີໃນທ້ອງຖິ່ນ.
   - ຄວາມປອດໄພ: ລະວັງໃນການໃຊ້ສິ່ງແຫຼມຄົມ (ມີດ).
2. ການເວົ້າຄຳສັບ ແລະ ເປັນປະໂຫຍກຕາມຮູບພາບ:
   - ຄຳສັບ: ຍຳສະຫຼັດ,ຈືນໄຂ່, ເອາະຫຼາມ, ຕຳໝາກຮຸ່ງ, ແຈ່ວປາແດກ ແລະ ລວກຜັກ.
   - ປະໂຫຍກ: ເດັກນ້ອຍກິນຍຳສະຫຼັດ, ເດັກນ້ອຍກິນຈືນໄຂ່, ຕຳໝາກຫຸ່ງມີລົດເຜັດ, ແມ່ລວກຜັກກາດ.

### III. ສື່ການຮຽນ-ການສອນ

1. ໄຂ່, ນ້ຳມັນພືດ, ຫອມບົ່ວເຕົາໄຟ ຫຼື ໝໍ້ໄຟຟ້າ, ໝໍ້.
2. ຮູບພາບ: ຍຳສະຫຼັດ, ຈືນໄຂ່, ເອາະຫຼາມ, ຕຳໝາກຫຸ່ງ, ແຈ່ວປາແດກ ແລະ ລວກຜັກ, ເດັກນ້ອຍກິນຍຳສະຫຼັດ, ເດັກນ້ອຍກິນຈືນໄຂ່, ຕຳໝາກຫຸ່ງມີລົດເຜັດ, ແມ່ລວກຜັກກາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເວົ້າຊື່ອາຫານທີ່ຄວນກິນ ແລະ ບໍ່ຄວນກິນ.
2. ໃຫ້ເດັກນ້ອຍເວົ້າຄຳສັບ ແລະ ເປັນປະໂຫຍກຕາມຮູບພາບ.
3. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການປຸງແຕ່ງອາຫານ ແລະ ຄວາມປອດໄພ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງໃນການປຸງແຕ່ງອາຫານ (ຈືນໄຂ່).
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ ແລະ ຄວາມປອດໄພໃນເວລາໃຊ້ສິ່ງທີ່ແຫຼມຄົມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການປຸງ ແຕ່ງອາຫານ ແລະ ຄວາມປອດໃນການປຸງແຕ່ງອາຫານ.
2. ການປະຕິບັດຕົວຈິງໃນການຈືນໄຂ່.
3. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
4. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຈີກ ແລະ ຕິດຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຈີກ, ຕິດຮູບພາບໄຂ່ຈືນ ແລະ ຮູບພາບຜັກໄດ້ຖືກຕ້ອງ.
2. ເຝິກປະສາດສຳພັນລະຫວ່າງມືກັບສາຍຕາໃຫ້ຄ່ອງແຄ້ວໃນການຈີກ, ຕິດ.
3. ມີຄວາມອົດທົນໃນການຈີກ, ຕິດຮູບພາບໄຂ່ຈືນ ແລະ ຮູບພາບຜັກ.

### II. ເນື້ອໃນຕົ້ນຕໍ

ການຈີກ ແລະ ຕິດຮູບພາບ: ໄຂ່ຈືນ ແລະ ຮູບພາບຜັກຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ເຈ້ຍຂາວ.
2. ກາວສຳເລັດຮູບ ຫຼື ກາວເຂົ້າໜຽວຕົ້ມ.
3. ຮູບພາບ: ໄຂ່ຈືນ ແລະ ຮູບພາບຜັກທີ່ມີຮອຍຈ້ຳ
4. ເຈ້ຍແບບຮູບພາບໄຂ່ຈືນ ແລະ ຮູບພາບຜັກທີ່ຈີກແລ້ວ.
5. ຊາມນ້ຳ, ສະບູ ແລະ ຜ້າເຊັດມື.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງຈີກເຈ້ຍ, ຍ່ອງຈີກເຈ້ຍ.
2. ໃຫ້ເດັກນ້ອຍສັງເກດຮູບພາບ ໄຂ່ຈືນ ແລະ ຮູບພາບຜັກ; ສົນທະນາ ແລະ ຂັ້ນຕອນການຈີກ, ຕິດ.
3. ນາຍຄູແນະນຳ, ສາທິດວິທີ, ຂັ້ນຕອນການຈີກ, ຕິດຮູບພາບ ໄຂ່ຈືນ ແລະ ຮູບພາບຜັກຕາມຮອຍຈ້ຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຈີກ, ຕິດຮູບພາບໄຂ່ຈືນ ແລະ ຮູບພາບຜັກຕາມຮອຍຈ້ຳ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ຄວາມອົດທົນ ແລະ ເກັບມ້ຽນຜົນງານ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຈີກ, ຕິດຮູບພາບໄຂ່ຈືນ ແລະ ຮູບພາບຜັກ.
2. ຄວາມຄ່ອງແຄ້ວໃນການຈີກ, ຕິດ.
3. ຄວາມອົດທົນໃນການຈີກຮູບພາບໄຂ່ຈືນ ແລະ ຮູບພາບຜັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນເສືອໄລ່ໝູ່

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນເສືອໄລ່ໝູໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນເສືອໄລ່ໝູໄດ້ຖືກຕ້ອງ.
3. ມີສະຕິ ແລະ ຄວາມວ່ອງໄວໃນເວລາຫຼິ້ນ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນເສືອໄລ່ໝູ່.

## III. ສື່ການຮຽນ-ການສອນ

1. ໝາກຫວິດ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຢືນລຽນແຖວ ແລະ ແລ່ນຕາມຫຼັງກັນອ້ອມເດີ່ນ.
2. ນາຍຄູສະເໜີແບບຫຼິ້ນເສືອໄລ່ໝູ ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນເສືອໄລ່ໝູ ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ມີຄວາມວ່ອງໄວໃນການແລ່ນຫຼິ້ນ.
6. ໃຫ້ເດັກນ້ອຍຢືນເປັນວົງມົນເຮັດທ່າທາງລ້າງແຂນ, ມື, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນເສືອໄລ່ໝູ.
2. ຄວາມຖືກຕ້ອງໃນການຫຼິ້ນເສືອໄລ່ໝູ.
3. ການມີສະຕິ ແລະ ຄວາມວ່ອງໄວໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບພາບອາຫານປະເພດຜັກ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບພາບອາຫານປະເພດຜັກໄດ້ຖືກຕ້ອງ.
3. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບພາບອາຫານປະເພດຜັກ: ຜັກກາດ, ໝາກເຂືອ, ຖົ່ວ, ຜັກບົ້ງ, ໝາກແຕງ, ໝາກບາວ, ໝາກເລັ່ນ, ໝາກເຜັດ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັບຮູບພາບອາຫານປະເພດຜັກ: ຜັກກາດ, ໝາກເຂືອ, ຖົ່ວ, ຜັກບົ້ງ, ໝາກແຕງ, ໝາກບາວ, ໝາກເລັ່ນ, ໝາກເຜັດ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັບຮູບພາບອາຫານປະເພດໝາກໄມ້.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍ ກ່ຽວກັບອາຫານ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່ ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັບຮູບພາບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບພາບອາຫານປະເພດຜັກ.
3. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນບົດບາດສົມມຸດເປັນເອື້ອຍລ້ຽງ, ເປັນພໍ່ຄ້າ, ແມ່ຄ້າ ແລະ ລູກຄ້າຢ່າງມ່ວນຊື່ນ.
3. ຕໍ່ບູ້ອກເປັນຮູບຕ່າງໆຕາມຈິນຕະນາການຢ່າງມ່ວນຊື່ນ ແລະ ວາງຮູບເລຂາຄະນິດສະຫຼັບກັນຕາມແບບໄດ້ຖືກຕ້ອງ.
4. ເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສຳຜັດ.
2. ການຫຼິ້ນບົດບາດສົມມຸດເປັນເອື້ອຍລ້ຽງປຸງແຕ່ງອາຫານ: ຍຳຜັກສະຫຼັດ, ຈືນໄຂ່; ເປັນພໍ່ຄ້າ, ແມ່ຄ້າ ແລະ ລູກຄ້າຊື້ຂາຍເຄື່ອງດື່ມ: ນ້ຳເຕົ້າຮູ້, ນ້ຳໝາກໄມ້, ນົມ ແລະ ໝາກໄມ້.
3. ການຕໍ່ບູ້ອກເປັນຮູບຕ່າງໆຕາມຈິນຕະນາການ; ວາງຮູບໜ່ວຍວົງມົນສີແດງ, ຮູບກ້ອນສາກສີເຫຼືອງສະຫຼັບກັນຕາມແບບ.
4. ການເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ເຄື່ອງຫຼິ້ນຂອງເຮືອນນ້ອຍ; ຜັກ ແລະ ອາຫານຈຳລອງ; ເຄື່ອງດື່ມ.
2. ມຸມເຄື່ອງຫຼິ້ນສຳຜັດ: ຊຸດໄມ້ບູ້ອກ, ບູ້ອກໜ່ວຍມົນສີແດງ, ຮູບກ້ອນສາກສີເຫຼືອງ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການປຸງແຕ່ງ ແລະ ຄວາມປອດໄພ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເຄື່ອງຫຼິ້ນ ແລະ ແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສຳຜັດ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສຳຜັດ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນເອື້ອຍລ້ຽງ, ເປັນພໍ່ຄ້າ, ແມ່ຄ້າ ແລະ ລູກຄ້າ.
3. ຄວາມມ່ວນຊື່ນໃນການຕໍ່ບູ້ອກເປັນຮູບຕ່າງໆຕາມຈິນຕະນາການ ແລະ ຄວາມຖືກຕ້ອງໃນການວາງຮູບເລຂາຄະນິດສະຫຼັບກັນຕາມແບບ.
4. ການເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.

# ກິດຈະກໍາການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຂໍ້ຕົກລົງຕາມນາຍຄູແນະນໍາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຕາມຂໍ້ຕົກລົງຕາມນາຍຄູແນະນໍາໄດ້ຖືກຕ້ອງ.
2. ກ້າສະແດງອອກໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຂໍ້ຕົກລົງຕາມນາຍຄູແນະນໍາ: ເວົ້າຄໍາວ່າວົງມົນໃຫ້ຈັບກຸ່ມເປັນຮູບວົງມົນ, ເວົ້າຄໍາວ່າສາມແຈໃຫ້ຈັບກຸ່ມເປັນຮູບສາມແຈ, ເວົ້າຄໍາວ່າສີ່ແຈໃຫ້ຈັບກຸ່ມເປັນຮູບສີ່ແຈ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານຂາ ແລະ ທ້ອງ-ຫຼັງ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານຂາ ແລະ ທ້ອງ-ຫຼັງ: ທ່າເຕັ້ນຈ່າງຂາ, ທ່າທ້ອງ-ຫຼັງກົ້ມຕົວລົງທາງໜ້າ, ເງີຍຂຶ້ນແອ່ນຕົວໄປທາງຫຼັງ.
2. ໃຫ້ເດັກນ້ອຍເຕັ້ນຊິກແຊັກໄປຊ້າຍ ແລະ ຂວາ.
3. ນາຍຄູແນະນໍາ ແລະ ສາທິດການປະຕິບັດຂໍ້ຕົກລົງຕາມນາຍຄູແນະນໍາ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນອນຫງາຍຫຼັບຕາ, ເອົາແຂນລົງຕາມຕົນຕົວ, ເອົາຂາໄຂ່ວກັນ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຂໍ້ຕົກລົງຕາມນາຍຄູແນະນໍາ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການກ້າສະແດງອອກໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຂໍ້ຕົກລົງຕາມນາຍຄູແນະນໍາ.
2. ການກ້າສະແດງອອກໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ການປຸງແຕ່ງເຄື່ອງດື່ມ ແລະ ຄວາມປອດໄພ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການປຸງແຕ່ງເຄື່ອງດື່ມ ແລະ ຄວາມປອດໄພໃນເວລາປຸງແຕ່ງເຄື່ອງດື່ມໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງໃນການປຸງແຕ່ງເຄື່ອງດື່ມ (ນ້ຳໝາກນາວ).
3. ເລົ່າຄຳຄ່ອງ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດຄຳຄ່ອງໄດ້ຊັດເຈນ.
4. ບອກອະໄວຍະວະຂອງຮ່າງກາຍ ຫຼື ເຄື່ອງນຸ່ງຫົ່ມທີ່ເປັນຮູບວົງມົນ, ສາມແຈ, ຈະຕຸລັດ, ສີ່ແຈໄດ້ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ການປຸງແຕ່ງເຄື່ອງດື່ມ ແລະ ຄວາມປອດໄພ.
   - ການປຸງແຕ່ງເຄື່ອງດື່ມ: ນ້ຳໝາກນາວ, ນ້ຳເຕົ້າຮູ້, ນ້ຳໝາກກ້ຽງ ແລະ ນ້ຳໝາກໄມ້ທີ່ມີໃນທ້ອງຖິ່ນ.
   - ຄວາມປອດໄພ: ລະວັງໃນການໃຊ້ສິ່ງແຫຼມຄົມ (ມີດ).
2. ການເລົ່າຄຳຄ່ອງ ນ້ຳໝາກໄມ້, ເວົ້າຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ.
   - ຄຳສັບ: ນ້ຳໝາກໄມ້, ຖົ່ວເຫຼືອງ, ໝາກນາວ, ໝາກພ້າວ, ນ້ຳເຕົາຮູ້.
   - ປະໂຫຍກ: ນ້ຳໝາກໄມ້ມີລົດຫວານ, ເດັກນ້ອຍກິນນ້ຳເຕົາຮູ້, ນ້ຳໝາກພ້າວມີວິຕາມິນ.
3. ຮູບເລຂາຄະນິດ: ວົງມົນ, ສາມແຈ, ຈະຕຸລັດ, ສີ່ແຈ (ອະໄວຍະວະໃນຮ່າງກາຍ ຫຼື ເຄື່ອງນຸ່ງຫົ່ມ).

### III. ສື່ການຮຽນ-ການສອນ

1. ຈອກ, ບ່ວງ, ນ້ຳສະອາດ, ໝາກນາວ, ນ້ຳຕານ; ບົດຄຳຄ່ອງ ນ້ຳໝາກໄມ້ (ເບິ່ງປຶ້ມຄູ່ມືຄູ).
2. ຮູບພາບເຄື່ອງນຸ່ງເດັກນ້ອຍຍິງ ແລະ ເດັກນ້ອຍຊາຍທີ່ເປັນຮູບວົງມົນ, ສາມແຈ, ຈະຕຸລັດ, ສີ່ແຈ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເວົ້າຊື່ເຄື່ອງດື່ມທີ່ຄວນດື່ມ.
2. ໃຫ້ເດັກນ້ອຍເລົ່າຄຳຄ່ອງ, ສົນທະນາ, ເວົ້າຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນຄຳຄ່ອງ.
3. ໃຫ້ເດັກນ້ອຍສັງເກດຮູບພາບເຄື່ອງນຸ່ງເດັກນ້ອຍຍິງ, ຊາຍແລ້ວບອກສິ່ງທີ່ເປັນຮູບຮູບວົງມົນ, ສາມແຈ, ສີ່ແຈ.
4. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການປຸງແຕ່ງເຄື່ອງດື່ມ ແລະ ຄວາມປອດໄພ.
5. ໃຫ້ເດັກນ້ອຍປະຕິບັດຕົວຈິງໃນການປຸງແຕ່ງເຄື່ອງດື່ມ (ນ້ຳໝາກນາວ).
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກ ແລະ ຄວາມປອດໄພໃນການໃຊ້ຂອງແຫຼມຄົມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງການບອກການປຸງແຕ່ງເຄື່ອງດື່ມ ແລະ ຄວາມປອດໄພໃນເວລາປຸງແຕ່ງເຄື່ອງດື່ມ.
2. ຄວາມຊັດເຈນໃນການເລົ່າຄຳຄ່ອງ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ.
3. ການປະຕິບັດຕົວຈິງໃນການປຸງແຕ່ງນ້ຳໝາກນາວ.
4. ຄວາມຖືກຕ້ອງໃນການບອກອະໄວຍະວະ ຫຼື ເຄື່ອງນຸ່ງຫົ່ມທີ່ເປັນຮູບວົງມົນ, ສາມ ແຈ, ສີ່ແຈ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ແຕ້ມ ແລະ ທາສີຮູບພາບໝາກໄມ້ຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການແຕ້ມ ແລະ ທາສີໄດ້ຖືກຕ້ອງ.
2. ແຕ້ມ ແລະ ທາສີຮູບພາບໝາກໄມ້ຕາມຈິນຕະນາການໄດ້ສະອາດຈົບງາມ ແລະ ຢູ່ໃນຂອບ.
3. ແບ່ງປັນສໍສີໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການແຕ້ມ ແລະ ທາສີຮູບພາບໝາກໄມ້ຕາມຈິນຕະນາການ.

### III. ສື່ການຮຽນ-ການສອນ

1. ສໍດຳ, ເຈ້ຍຂາວ ແລະ ສໍສີໄມ້ ຫຼື ສໍສີທຽນ.
2. ເຈ້ຍຮູບພາບໝາກໄມ້ ແລະ ເຈ້ຍແບບຮູບໝາກໄມ້ທີ່ແຕ້ມທາສີແລ້ວ.
3. ບົດຄຳຄ່ອງ ນ້ຳໝາກໄມ້.

### IV. ກິດຈະກຳການຮຽນ-ການສອນ

1. ແນະນຳໃຫ້ນ້ອຍເລົ່າຄຳຄ່ອງ ນ້ຳໝາກໄມ້ ປະກອບທ່າທາງ
2. ໃຫ້ເດັກນ້ອຍສັງເກດຮູບພາບໝາກໄມ້, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການແຕ້ມ ແລະ ທາສີ.
3. ນາຍຄູແນະນຳ, ສາທິດການວິທີ, ຂັ້ນຕອນການແຕ້ມ ແລະ ທາສີຮູບພາບໝາກໄມ້ຕາມຈິນຕະນາການ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານການ, ເວົ້າຄືນຂັ້ນຕອນການແຕ້ມ ແລະ ທາສີຮູບພາບໝາກໄມ້ຕາມຈິນຕະນາການ.
6. ສຶກສາອົບຮົມເດັກນ້ອຍ ກ່ຽວກັບຄວາມສາມັກຄີ, ຄວາມອົດທົນ ແລະ ເກັບມ້ຽນຜົນງານ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການຊີ່ຮູບພາບ ແລະ ຂັ້ນຕອນການແຕ້ມ ແລະ ທາສີ.
2. ຄວາມຈົບງາມໃນການແຕ້ມ ແລະ ທາສີ.
3. ການແບ່ງປັນສໍສີໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແຂ່ງຂັນຍ່າງຮັກສາຄວາມທ່ຽງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນຍ່າງຮັກສາຄວາມທ່ຽງໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນຍ່າງຮັກສາຄວາມທ່ຽງໄດ້ຖືກຕ້ອງ.
3. ຄວາມອົດທົນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນຍ່າງຮັກສາຄວາມທ່ຽງ.

### III. ສື່ການຮຽນ-ການສອນ

1. ກະແຊັກ, ກອງ, ໝາກຫວິດ.
2. ເຊືອກ, ຜ້າ, ໄມ້ສຳລັບຂີດເສັ້ນ.
3. ບົດຄຳຄ່ອງ ນ້ຳໝາກໄມ້.
4. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ນ້ຳໝາກໄມ້ ປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນ ແຂ່ງຂັນຍ່າງຮັກສາຄວາມທ່ຽງ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນ ແຂ່ງຂັນ ຍ່າງຮັກສາຄວາມທ່ຽງ ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນໃຫ້ມີຄວາມອົດທົນໃນການຫຼິ້ນ ແລະ ຫຼິ້ນແລ້ວເກັບອຸປະກອນຊ່ວຍກັນ.
6. ໃຫ້ເດັກນ້ອຍເຮັດທ່າທາງເກັບໝາກໄມ້ໃສ່ກະຕ່າ ຫຼັງຈາກນັ້ນໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນຍ່າງຮັກສາຄວາມທ່ຽງ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນຍ່າງຮັກສາຄວາມທ່ຽງ.
3. ຄວາມອົດທົນໃນເວລາຫຼິ້ນ.

# ກິດຈະກໍາເກມການສຶກສາ

## ຫົວຂໍ້: ເກມຈັດໝວດໝູ່ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດຕາມຂະໜາດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັດໝວດໝູ່ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດ ຕາມຂະໜາດໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັດໝວດໝູ່ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດ ຕາມຂະໜາດ: ນ້ອຍ, ກາງ, ໃຫຍ່.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັດໝວດໝູ່ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດ ຕາມຂະໜາດ: ນ້ອຍ, ກາງ, ໃຫຍ່ (ສໍາລັບນາຍຄູ ແລະ ເດັກນ້ອຍ).
2. ເກມເກົ່າ ເກມຈັບຄູ່ທີ່ຄືກັບຮູບພາບອາຫານປະເພດຜັກ: ຜັກກາດ, ໝາກເຂືອ, ຖົ່ວ, ຜັກບົ້ງ, ໝາກແຕງ, ໝາກນາວ, ໝາກເລັ່ນ, ໝາກເຜັດ.
3. ບົດຄໍາຄ່ອງ ນໍ້າໝາກໄມ້.

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄໍາຄ່ອງ ນໍ້າໝາກໄມ້.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
3. ນາຍຄູແນະນໍາ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່ ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັດໝວດໝູ່ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດ ຕາມຂະໜາດ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບ.
2. ຄວາມຖືກຕ້ອງໃນການຈັດໝວດໝູ່ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດ ຕາມຂະໜາດ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຕໍ່ບ໋ອກຕາມແບບ ແລະ ພິມຕົວເລກ 0-5 ໃສ່ອ່າງດິນຊາຍໄດ້ຖືກຕ້ອງ.
3. ແຕ້ມ ແລະ ທາສີຮູບພາບໝາກໄມ້, ຂີດຂຽນຕາມຮອຍຈ້ຳຕົວເລກ 2-3 ຕາມໃຈໄດ້ຖືກຕ້ອງ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
2. ການຕໍ່ບ໋ອກສາມແຈ, ສີ່ແຈປະກອບເປັນຮູບເສື້ອ, ເກີບ ແລະ ຖົງຕີນຕາມແບບ; ພິມຕົວເລກ 0-5 ໃສ່ອ່າງດິນຊາຍ.
3. ການແຕ້ມ ແລະ ທາສີຮູບພາບໝາກໄມ້; ຂີດຂຽນຕາມຮອຍຈ້ຳຕົວເລກ 2-3. ແລະ ຂຽນດ້ວຍຕົນເອງ

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ບ໋ອກສາມແຈ, ສີ່ແຈ; ແບບພິມຕົວເລກ 0-5; ອ່າງດິນຊາຍ.
2. ມຸມສິລະປະສ້າງສັນ: ສໍສີໄມ້ ຫຼື ສີທຽນ; ກາວ, ເຈ້ຍຮູບພາກໄມ້, ປື້ມບົດເຝິກຫັດຄະດບິດສາດເຫຼັ້ມ 1 (ໜ້າ 2) ຫຼື ເຈ້ຍຂຽນຕົວເລກ 2-3.
3. ບົດຄຳຄ່ອງ ນ້ຳໝາກໄມ້; ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ນ້ຳໝາກໄມ້ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເຄື່ອງຫຼິ້ນ ແລະ ແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການຕໍ່ບ໋ອກຕາມແບບ ແລະ ພິມຕົວເລກ 0-5 ໃສ່ອ່າງດິນຊາຍ.
3. ຄວາມຖືກຕ້ອງໃນການແຕ້ມ, ທາສີຮູບໝາກໄມ້ ແລະ ຂຽນຕົວເລກ 2-3.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນຕະນາການປະກອບບົດລຳລ່ອງ ນ້ຳໝາກໄມ້

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດລຳລ່ອງຢ່າງມ່ວນຊື່ນ.
2. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດລຳລ່ອງ ນ້ຳໝາກໄມ້.

### III. ສື່ການຮຽນ-ການສອນ

1. ບົດລຳລ່ອງ ນ້ຳໝາກໄມ້.
2. ທ່າຫັດກາຍະບໍລິຫາບຳທ້ອງ-ຫຼັງ ແລະ ຕີນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານທ້ອງ-ຫຼັງ ແລະ ຕີນ: ທ່າທ້ອງ-ຫຼັງກົ້ມຕົວລົງທາງໜ້າ, ເງີຍຂຶ້ນແອນຕົວໄປທາງຫຼັງ ແລະ ທ່າເຍັ່ງເຍ້ຂຶ້ນ, ລົງ.
2. ໃຫ້ເດັກນ້ອຍຍ່າງໂຍ່ງໂຍະເປັນແຖວຊື່.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດລຳລ່ອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຢືນເອົາມືກອດເອິກຫຼັບຕາຫາຍໃຈເຂົ້າ-ອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດລຳລ່ອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດລຳລ່ອງ.
2. ການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ການຮັກສາສຸຂະພາບ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການຮັກສາສຸຂະພາບ: ອອກກຳລັງກາຍ, ພັກຜ່ອນ, ຂັບຖ່າຍ ແລະ ຫຼິ້ນໄດ້ຖືກຕ້ອງ.
2. ເວົ້າຄຳສັບຕາມເນື້ອໃນນິດນິທານໄດ້ຊັດເຈນ.
3. ມີຄວາມມ່ວນຊື່ນ ແລະ ມີມາລະຍາດໃນການຟັງນິທານ.

## II. ເນື້ອໃນຕົ້ນຕໍ

1. ການຮັກສາສຸຂະພາບ: ອອກກຳລັງກາຍ, ພັກຜ່ອນ, ຂັບຖ່າຍ ແລະ ຫຼິ້ນ.
   - ການອອກກຳລັງກາຍ: ຫັດກາຍບໍລິຫານ, ຍ່າງ, ແລ່ນ, ເຕັ້ນ; ຄວາມປອດໄພ: ລະວັງເວລາຫັດກາຍບໍລິຫານ, ຍ່າງ, ແລ່ນ ແລະ ເຕັ້ນ.
   - ການພັກຜ່ອນ: ນອນໃຫ້ພຽງພໍ, ຖືກເວລາ; ຄວາມປອດໄພ: ນອນບ່ອນທີ່ສະອາດ (ບໍ່ໃຫ້ມີມົດ ແລະ ແມງໄມ້).
   - ການຂັບຖ່າຍ: ຖ່າຍໃສ່ວິດ ຫຼື ສັກໂຄກ, ຂັບຖ່າຍເປັນເວລາ (ເຝິກແອບຂັບຖ່າຍຕອນເຊົ້າທຸກໆວັນ); ຄວາມປອດໄພ: ລະວັງບໍ່ໃຫ້ລົ້ມ, ພື້ນໃນຫ້ອງນ້ຳ ແລະ ບໍ່ຂຶ້ນຢຽບຊັກໂຄກ.
   - ການຫຼິ້ນເປັນເວລາ, ຫຼິ້ນຖືກວິທີ, ຫຼິ້ນຮ່ວມກັບໝູ່ເພື່ອນດ້ວຍຄວາມມ່ວນຊື່ນ; ຄວາມປອດໄພ: ລະວັງບໍ່ຫຼິ້ນສິ່ງຂອງຕ່າງໆແຮງເກີນຄວນ.
2. ການຟັງນິທານເລື່ອງ ທ້າວພີນ້ອຍແຂງແຮງ, ເວົ້າຄຳສັບຕາມເນື້ອໃນນິດນິທານ: ຍ່າງ, ແລ່ນ, ເຕະບານ, ແຂງແຮງ, ອາຫານ, ພັກຜ່ອນ.

## III. ສື່ການຮຽນ-ການສອນ

1. ຮູບພາບ: ເດັກນ້ອຍຫັດກາຍ, ເດັກນ້ອຍນອນ ແລະ ເດັກນ້ອຍຫຼິ້ນຮ່ວມກັບໝູ່ເພື່ອນ, ເດັກນ້ອຍຖ່າຍໃສ່ວິດ.
2. ນິດນິທານເລື່ອງ ທ້າວພີນ້ອຍແຂງແຮງ (ເບິ່ງປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເວົ້າກ່ຽວກັບການອອກກຳລັງກາຍທີ່ເດັກນ້ອຍເຄີຍເຮັດຢູ່ບ້ານ.
2. ນາຍຄູເລົ່ານິທານ, ສົນທະນາ, ໃຫ້ເດັກນ້ອຍເວົ້າຄຳສັບຕາມເນື້ອໃນນິດນິທານ.
3. ໃຫ້ເດັກນ້ອຍສັງເກດຮູບພາບ: ເດັກນ້ອຍຫັດກາຍ, ເດັກນ້ອຍນອນ, ເດັກນ້ອຍຫຼິ້ນຮ່ວມກັບໝູ່ເພື່ອນ, ເດັກນ້ອຍຖ່າຍໃສ່ວິດ, ສົນທະນາກ່ຽວກັບຄວາມປອດໄພໃນການອອກກຳລັງກາຍ, ພັກຜ່ອນ, ຂັບຖ່າຍ ແລະ ຫຼິ້ນ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຄວາມປອດໄພໃນການຫຼິ້ນ ແລະ ການພັກຜ່ອນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຮັກສາສຸຂະພາບຂອງຕົນເອງ ແລະ ມາລະຍາດໃນການຟັງນິທານ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການຮັກສາສຸຂະພາບ.
2. ຄວາມຊັດເຈນໃນການເວົ້າຄຳສັບຕາມເນື້ອໃນນິດນິທານ.
3. ຄວາມມ່ວນຊື່ນ ແລະ ມີມາລະຍາດໃນການຟັງນິທານ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ປັ້ນດິນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການປັ້ນດິນເປັນຮູບຕ່າງໆໄດ້ຖືກຕ້ອງ.
2. ປັ້ນດິນເປັນຮູບຕ່າງໆຕາມຈິນຕະນາການໄດ້ຄ້າຍຄື.
3. ແບ່ງປັນດິນປັ້ນໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການປັ້ນດິນເປັນຮູບຕ່າງໆຕາມຈິນຕະນາການ.

### III. ສື່ການຮຽນ-ການສອນ

1. ດິນປັ້ນ ຫຼື ແປ້ງສຳລັບປັ້ນ.
2. ແຜ່ນຮອງປັ້ນ.
3. ເສື້ອກັນເປື້ອນ.
4. ຊາມນ້ຳ, ຜ້າເຊັດມື ແລະ ສະບູ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງກຳມື, ແບມື ແລະ ສັ່ນຄໍ່ມື.
2. ໃຫ້ເດັກນ້ອຍສັງເກດຮູບຕ່າງໆທີ່ປັ້ນແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການປັ້ນດິນເປັນຮູບຕ່າງໆ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການປັ້ນດິນເປັນຮູບຕ່າງໆຕາມຈິນຕະນາການ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການປັ້ນດິນເປັນຮູບຕ່າງໆຕາມຈິນຕະນາການ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ຄວາມອົດທົນ ແລະ ເກັບມ້ຽນຜົນງານ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການປັ້ນດິນເປັນຮູບຕ່າງໆ.
2. ຄວາມຄ້າຍຄືໃນການປັ້ນດິນເປັນຮູບຕ່າງໆ.
3. ການແບ່ງປັນດິນປັ້ນໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແຂ່ງຂັນເຕັ້ນໄຮ່ນາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນໄຮ່ນາໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນໄຮ່ນາໄດ້ຖືກຕ້ອງ.
3. ມີຄວາມອົດທົນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນເຕັ້ນໄຮ່ນາ.

### III. ສື່ການຮຽນ-ການສອນ

1. ໝາກຫວີດ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຢືນເປັນວົງມົນຍ່າງຕົບມື ແລະ ນັບປາກເປົ່າ 1-10.
2. ນາຍຄູສະເໜີແບບຫຼິ້ນ ເຕັ້ນໄຮ່ນາ ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນ ເຕັ້ນໄຮ່ນາ ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນໃຫ້ມີວ່ອງໄວໃນການຫຼິ້ນ ແລະ ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ,
6. ໃຫ້ເດັກນ້ອຍນັ່ງລົງຄູ້ຂາຂຶ້ນ-ລົງ, ຫຼັງຈາກນັ້ນໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ ເຕັ້ນໄຮ່ນາ.
2. ຄວາມຖືກຕ້ອງໃນການຫຼິ້ນເຕັ້ນໄຮ່ນາ.
3. ຄວາມອົດທົນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບພາບກິດຈະກຳປະຈຳວັນຂອງເດັກນ້ອຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບພາບກິດຈະກຳປະຈຳວັນຂອງເດັກນ້ອຍໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບພາບກິດຈະກຳປະຈຳວັນຂອງເດັກນ້ອຍ: ຫຼິ້ນກັບໝູ່ໃນເດີ່ນ, ນອນພັກຜ່ອນ, ດື່ມນໍ້າ, ອະນາໄມມື, ແຕ້ມຮູບ, ອ່ານປຶ້ມ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັບຮູບພາບກິດຈະກຳປະຈຳວັນຂອງເດັກນ້ອຍ: ຫຼິ້ນກັບໝູ່ໃນເດີ່ນ, ນອນພັກຜ່ອນ, ດື່ມນໍ້າ, ອະນາໄມມື, ແຕ້ມຮູບ, ອ່ານປຶ້ມ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັດໝວດໝູ່ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດຕາມຂະໜາດ: ນ້ອຍ, ກາງ, ໃຫຍ່.
3. ບົດເພງ ນໍ້າໝາກໄມ້.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ນໍ້າໝາກໄມ້.
2. ນາຍຄູສົນທະນາກັບເດັກກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັບຮູບພາບກິດຈະກຳປະຈຳວັນຂອງເດັກນ້ອຍ.
6. ສຶກສາອົບຮົມເດັກກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບພາບກິດຈະກຳປະຈຳວັນຂອງເດັກນ້ອຍ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກໍາການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເກມການສຶກສາ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຈັບຄູ່ທີ່ຄືກັບຮູບພາບກິດຈະກໍາປະຈໍາວັນຂອງເດັກນ້ອຍ ແລະ ຈັດໝວດໝູ່ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດ ຕາມຂະໜາດໄດ້ຖືກຕ້ອງ.
3. ອ່ານຕາມຮູບພາບໃນປື້ມນິທານ ແລະ ເວົ້າເປັນປະໂຫຍກຕາມຮູບພາບໄດ້ຊັດເຈນ.
4. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມເກມການສຶກສາ ແລະ ມຸມອ່ານ.
2. ການຈັບຄູ່ທີ່ຄືກັບຮູບພາບກິດຈະກໍາປະຈໍາວັນຂອງເດັກນ້ອຍ: ເດັກນ້ອຍຫຼິ້ນກັບໝູ່ໃນເດີ່ນ, ນອນພັກຜ່ອນ, ດື່ມນໍ້າ, ອະນາໄມມື, ແຕ້ມຮູບ, ອ່ານປື້ມ ແລະ ຈັດໝວດໝູ່ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດ ຕາມຂະໜາດ: ນ້ອຍ, ກາງ, ໃຫຍ່.
3. ການສັງເກດ ແລະ ອ່ານຕາມຮູບພາບໃນປື້ມນິທານເລື່ອງທ້າວພີນ້ອຍແຂງແຮງ; ເວົ້າເປັນປະໂຫຍກຕາມຮູບພາບ: ເດັກນ້ອຍກິນເຂົ້າເຊົ້າກັບຈືນໄຂ່, ເດັກນ້ອຍກິນເຂົ້າສວາຍກັບຂົ້ວຜັກກາດ, ເດັກນ້ອຍກິນເຂົ້າກັບປີ້ງຊີ້ນ, ເດັກນ້ອຍດື່ມນໍ້າໝາກໄມ້, ບໍ່ກິນອາຫານມີແມງວັນຕອມ.

### III. ສື່ການຮຽນ-ການສອນ

1. ມຸມເກມການສຶກສາ: ແຜ່ນເກມຈັບຄູ່ທີ່ຄືກັບຮູບພາບກິດຈະກໍາປະຈໍາວັນຂອງເດັກນ້ອຍ: ເດັກນ້ອຍຫຼິ້ນກັບໝູ່ໃນເດີ່ນ, ນອນພັກຜ່ອນ, ດື່ມນໍ້າ, ອະນາໄມມື, ແຕ້ມຮູບ, ອ່ານປື້ມ ແລະ ແຜ່ນເກມຈັດໝວດໝູ່ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດ ຕາມຂະໜາດ: ນ້ອຍ, ກາງ, ໃຫຍ່; ກະດານສຽບ ຫຼື ຕິດ.
2. ມຸມອ່ານ: ປື້ມນິທານເລື່ອງ ທ້າວພີນ້ອຍແຂງແຮງ; ຮູບພາບເດັກນ້ອຍກິນເຂົ້າເຊົ້າກັບຈືນໄຂ່, ເດັກນ້ອຍກິນເຂົ້າສວາຍ ກັບຂົ້ວຜັກກາດ, ເດັກນ້ອຍກິນເຂົ້າກັບປີ້ງຊີ້ນ, ເດັກນ້ອຍດື່ມນໍ້າໝາກໄມ້, ບໍ່ກິນອາຫານມີແມງວັນຕອມ; ກະດານສຽບ ຫຼື ຕິດ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກໍາການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ນາຍຄູແນະນໍາວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນມຸມເກມການສຶກສາ ແລະ ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນໍາ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເກມການສຶກສາ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການຫຼິ້ນເກມຈັບຄູ່ທີ່ຄືກັບຮູບພາບກິດຈະກໍາປະຈໍາວັນຂອງເດັກນ້ອຍ, ເດັກນ້ອຍຫຼິ້ນກັບໝູ່ໃນເດີ່ນ, ນອນພັກຜ່ອນ, ດື່ມນໍ້າ, ອະນາໄມມື, ແຕ້ມຮູບ, ອ່ານປື້ມ ແລະ ຈັດໝວດໝູ່ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດຕາມຂະໜາດ: ນ້ອຍ, ກາງ, ໃຫຍ່.
3. ຄວາມຊັດເຈນໃນການອ່ານຕາມຮູບພາບໃນປື້ມນິທານ ແລະ ເວົ້າເປັນປະໂຫຍກຕາມຮູບພາບ.
4. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ເອກະສານອ້າງອີງ

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ


1. ປື້ມຄູ່ມືການຈັດກິດຈະກຳການສອນຊັ້ນອະນຸບານ ກະຊວງສຶກສາທິການ, ກົມສາມັນ ເດືອນ ມີນາ (3) ປີ 2005 ພິມທີ່ເອກະພາບການພິມ.
2. ປື້ມຫຼັກການສອນອະນຸບານ ກຸ່ມວິຊາຄູທົ່ວໄປ ສາຍສ້າງຄູອະນຸບານລະບົບ 2 ປີ, ປີທີ 1 ປີ 2008.
3. ປື້ມວິທີສອນກາຍະສຶກສາ ກຸ່ມວິທີສອນສາຍສ້າງຄູອະນຸບານລະບົບ 2 ປີ, ປີທີ 2 ປີ 2009.
4. ປື້ມແຜນຈັດປະສົບການຊັ້ນອະນຸບານ 1 ປີ, 2014 ພິມທີ່ບໍລິສັດລັດວິສາຫະກິດໂຮງພິມສຶກສາ.
5. ຄູ່ມືຄູພະລະສຶກສາ, ຫັດຖະກຳ, ສິລະປະກຳ, ສິລະປະດົນຕີຊັ້ນປະຖົມປີທີໜຶ່ງ ກະຊວງສຶກສາທິການ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.


## ກິດຈະກຳວົງມົນ


6. ຄູ່ມືຄູການຈັດກິດຈະກຳການຮຽນ-ການສອນ ຊັ້ນອະນຸບານກົມສາມັນສຶກສາ ກະຊວງສຶກສາທິການ.
7. ຫຼັກການສອນເດັກກ່ອນໄວຮຽນລະບົບ 11+3 ກະຊວງສຶກສາທິການ ປີ 2008.
8. ປື້ມແຜນຈັດປະສົບການຊັ້ນອະນຸບານ 1 ປີ, 2014 ພິມທີ່ບໍລິສັດລັດວິສາຫະກິດໂຮງພິມສຶກສາ.


## ກິດຈະກຳສິລະປະສ້າງສັນ


9. ຄູ່ມືຄູກິດຈະກຳສ້າງສັນ (ສິລະປະສຶກສາ) ຊັ້ນອະນຸບານສຶກສາ ປີທີ 1, ພິມປີ 2014.
10. ກະຊວງສຶກສາທິການ, ກົມສາມັນສຶກສາຄູ່ມືຄູກິດຈະກຳການສອນຊັ້ນອະນຸບານ ປີ 2005.
11. ກະຊວງສຶກສາທິການ, ປື້ມຫຼັກການສອນອະນຸບານ ລະບົບ 11+2 ປີ 2008 (ໜ້າ 93).


## ກິດຈະກຳການຫຼິ້ນກາງແຈ້ງ


12. ຄູ່ມືຄູ ກິດຈະກຳກາງແຈ້ງ ຊັ້ນອະນຸບານສຶກສາ ປີທີ 1, ພິມປີ 2014.
13. ຄູ່ມືຄູ ກິດຈະກຳການສອນ ຊັ້ນອະນຸບານ ກະຊວງສຶກສາ ປີ 1990 ໜ້າທີ 102,105,106,131.
14. ປື້ມແບບຮຽນວິຊາຫຼັກການສອນເດັກກ່ອນໄວຮຽນລະບົບ 11+2 ກົມສ້າງຄູ, ກະຊວງສຶກສາທິການ ປີ 2004 (ບົດທີ 11 ກິດຈະກຳກາງແຈ້ງ).


## ກິດຈະກຳເກມການສຶກສາ


15. ປື້ມແຜ່ນຈັດປະສົບການ ຊັ້ນອະນຸບານ 1 ເຫຼັ້ມ 1, ປີ 2005 (ກະຊວງສຶກສາທິການ-ກົມສາມັນສຶກສາ) ແລະ ປື້ມແຜນຈັດປະສົບການຊັ້ນອະນຸບານສຶກສາ ປີທີ 1, ພິມປີ 2014.
16. ປື້ມວິຊາ: ຫຼັກການສອນ 11+3 ສົກຮຽນ 2008 (ກະຊວງສຶກສາທິການ-ກົມສ້າງຄູ).


## ກິດຈະກຳການຫຼິ້ນຕາມມຸມ


17. ປື້ມວິຊາຊອກຮູ້ສະພາບແວດລ້ອມ 11+3 ປີ 2008 (ກະຊວງສຶກສາທິການ-ກົມສ້າງຄູ).
18. ປື້ມແຜນຈັດປະສົບການຊັ້ນອະນຸບານ 1 ເຫຼັ້ມ 1 ປີ 2005 (ກະຊວງສຶກສາທິການ-ກົມສາມັນສຶກສາ) ແລະ ປື້ມແຜນຈັດປະສົບການຊັ້ນອະນຸບານສຶກສາປີທີ 1, ພິມປີ 2014.
19. ປື້ມການພັດທະນາໂຮງຮຽນຄຸນນະພາບ, ຄູ່ມືຄູສອນຫ້ອງກຽມປະຖົມ (ກະຊວງສຶກສາ 2010).